# ແຜນຈັດປະສົບການ

# ໜ່ວຍການຄົມມະນາຄົມ ແລະ ການສື່ສານ

## ຊັ້ນອະນຸບານສຶກສາປີທີ 1



ກະຊວງສຶກສາທິການ ແລະ ກິລາ
ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ
2012

ແຜນຈັດປະສົບການ ໜ່ວຍການຄົມມະນາຄົມ ແລະ ການສື່ສານ ຊັ້ນອະນຸບານສຶກສາປີທີ 1 2012

ສະໜັບສະໜູນການສ້າງຕົ້ນສະບັບ
ໂດຍ: ອົງການ UNICEF ປະຈຳລາວ
ສະໜັບສະໜູນການພິມໂດຍ: ງົບປະມານແຫ່ງລັດ (ບ້ວງນ້ຳເທີບ 2)
ທະບຽນພິມເລກທີ: ..............
ຂະໜາດ 21x29,7 ຊມ ຈຳນວນ.............ຫົວ
ພິມທີ່ ບໍລິສັດ ລັດວິສາຫະກິດໂຮງພິມສຶກສາ
2012

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ກະຊວງສຶກສາທິການ ແລະ ກິລາ

2421

ເລກທີ.../ສສກ.ສວສ/2012

ນະຄອນຫຼວງວຽງຈັນ, ວັນທີ:............... 16 Jul 2012

# ຂໍ້ຕົກລົງຂອງລັດຖະມົນຕີ

## ວ່າດ້ວຍການຮັບຮອງ ແລະ ປະກາດນຳໃຊ້ຫຼັກສູດ ແລະ ປື້ມປະກອບການຮຽນ-ການສອນ ສຳລັບຊັ້ນອະນຸບານສຶກສາ ປີທີ 1

ເຫັນຕາມ: ດຳລັດຂອງນາຍົກລັດຖະມົນຕີວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງສຶກສາທິການ ແລະ ກິລາ ສະບັບເລກທີ 282/ນຍ, ລົງວັນທີ 7 ກັນຍາ 2011;

ເຫັນຕາມ: ຂໍ້ຕົກລົງຂອງລັດຖະມົນຕີວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ ສະບັບເລກທີ 1124/ ສສກ.ຈຕ, ລົງວັນທີ 20 ເມສາ 2012.

ເຫັນຕາມ: ການສະເໜີຂອງສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ.

### ລັດຖະມົນຕີວ່າການກະຊວງສຶກທິການ ແລະ ກິລາ ຈຶ່ງຕົກລົງ

ມາດຕາ 1: ຮັບຮອງ ແລະ ປະກາດນຳໃຊ້ຫຼັກສູດ ແລະ ປື້ມປະກອບການຮຽນ-ການສອນ ສຳລັບຊັ້ນອະນຸບານສຶກສາ ປີທີ 1 ສະບັບປະຕິຮູບ ໃນໂຮງຮຽນອະນຸບານ ທົ່ວປະເທດ ນັບແຕ່ ສົກຮຽນ 2012-2013 ເປັນຕົ້ນໄປ.

ມາດຕາ 2: ໃຫ້ກົມອະນຸບານປະຖົມສຶກສາ, ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ, ກົມຄຸ້ມຄອງການສຶກສາພາກເອກະຊົນ, ພະແນກສຶກສາທິການ ແລະ ກິລາແຂວງ, ນະຄອນຫຼວງວຽງຈັນ ແລະ ພາກສ່ວນຕ່າງໆທີ່ກ່ຽວຂ້ອງ ຈົ່ງຮັບຮູ້, ໃຫ້ການຮ່ວມມື ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຕາມໜ້າທີ່ຂອງໃຜລາວໃຫ້ໄດ້ຮັບຜົນດີ.

ມາດຕາ 3: ຂໍ້ຕົກລົງສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ລັດຖະລັດຕີວ່າການກະຊວງສຶກສາທິການ ແລະ ກິລາ

ດຣ.ພັນຄຳ ວິພາວັນ

## ແຜນຈັດປະສົບການ

# ໜ່ວຍການຄົມມະນາຄົມ ແລະ ການສື່ສານ

## ຊັ້ນອະນຸບານສຶກສາ ປີທີ 1


ຮຽບຮຽງໂດຍ: ແສງມະນີ ສຸພັນທະລົບ
ຈຸນລາ ເຂັມທອງ
ພູມະລີ ແສງຈັນນະວົງ
ວຽງແກ້ວ ພົມມະຈັກ
ສຸກສະຫວັນ ວິມານ
ຈັນທອມ ສຸວັນນະວົງ
ສະຫວຽນ ສີຍະວັນນຸວົງ
ລັດສະໝີ ນາມເມືອງ
ມະນີວອນ ອາດຜາສຸກ
ພູມີ ພົມມະວົງສາ
ອ່າງຄຳ ບຸດສະດີ

ກວດແກ້ໂດຍ: ພວງຄຳ ສົມສະນິດ
ທອງແກ້ວ ອາສາ
ປາກຽນ ຫຼວງໄຊຊະນະ
ສົມບູນ ມາສຸວັນ
ເກດ ພັນລັກ
ສີພາພອນ ມະນີວັນ

ເຂົ້າໜ້າໂດຍ: ສີວິໄລ ແກ້ວມະນີວັນ
ທຸມພັນ ຂັນທະວີ



ກະຊວງສຶກສາທິການ ແລະ ກິລາ
ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ
2012

# ຄຳນຳ

ແຜນການຈັດປະສົບການໜ່ວຍຄົມມະນາຄົມຮຽບຮຽງຂຶ້ນ ເພື່ອໃຫ້ຜູ້ບໍລິຫານການສຶກສານຳໃຊ້ໃນການສ້າງເປັນແຜນການສອນ ແລະ ເປັນບ່ອນອີງໃນການແຕ່ງບົດສອນ.

ເນື້ອໃນຄວາມຮູ້ທີ່ກຳນົດໃນກິດຈະກຳການຫຼິ້ນ ແລະ ຮຽນໃນແຕ່ລະວັນມີລັກສະນະບູລະນາການຄວາມຮູ້ທາງດ້ານພາສາລາວ, ຄະນິດສາດ ແລະ ວິທະຍາສາດທົ່ວໄປ.

ກິດຈະກຳການຫຼິ້ນ ແລະ ຮຽນທີ່ນຳມາກຳນົດໃນແຜນການສອນສະບັບນີ້ປະກອບມີ 6 ກິດຈະກຳເຊັ່ນ: ກິດຈະກຳວົງມົນ, ການເຄື່ອນໄຫວ ແລະ ຈັງຫວະ, ສິລະປະສ້າງສັນ, ເກມການສຶກສາ, ຫຼິ້ນກາງແຈ້ງ ແລະ ຫຼິ້ນຕາມມຸມ. ກິດຈະກຳເລົ່ານີ້ສ້າງຂຶ້ນ ເພື່ອໃຫ້ເດັກໄດ້ຮັບການພັດທະນາຕາມສະມັດຖະພາບການກຽມຄວາມພ້ອມທາງດ້ານຮ່າງກາຍ, ດ້ານອາລົມ ແລະ ຈິດໃຈ, ດ້ານສັງຄົມ, ດ້ານພາສາ ແລະ ດ້ານສະຕິປັນຍາ ກ່ອນເຂົ້າຮຽນໃນຊັ້ນປະຖົມຢ່າງມີຄຸນນະພາບ.

ແຜນການຈັດປະສົບການສະບັບນີ້ເນັ້ນການສອນແບບເອົາເດັກເປັນໃຈກາງ ໂດຍໃຫ້ເດັກໄດ້ປະຕິບັດຕົວຈິງຜ່ານການຫຼິ້ນ ແລະ ຮຽນໂດຍມີຫຼັກການສຳຄັນດັ່ງນີ້:

1. ເດັກໄດ້ຮັບການກຽມຄວາມພ້ອມໃນທຸກດ້ານຕາມຄວາມສາມາດ ແລະ ທຳມະຊາດຂອງເດັກ ໂດຍຜ່ານການຫຼິ້ນ ແລະ ຮຽນຢ່າງເບີກບານມ່ວນຊື່ນ.
2. ເດັກໄດ້ຮຽນຮູ້ຕາມຄວາມສົນໃຈ, ຄວາມຕ້ອງການຈາກສິ່ງໃກ້ຕົວ, ຈາກທັກສະທີ່ງ່າຍໄປສູ່ທັກສະທີ່ຍາກຕາມລຳດັບໂດຍໄດ້ຮຽນຮູ້ເປັນລາຍບຸກຄົນ ແລະ ກຸ່ມ.
3. ການຈັດກິດຈະກຳການຫຼິ້ນ ແລະ ຮຽນແມ່ນໃຫ້ເດັກປະຕິບັດຕົວຈິງໂດຍເປີດໂອກາດໃຫ້ເດັກໄດ້ທົດລອງ, ປະດິດສ້າງຢ່າງສ້າງສັນ, ຄິດແກ້ໄຂບັນຫາ ແລະ ຄົ້ນພົບສິ່ງໃໝ່ໆ ດ້ວຍຕົນເອງ.
4. ການສົ່ງເສີມປະສົບການຊີວິດໄດ້ເນັ້ນເນື້ອໃນທີ່ເດັກຄວາມຮຽນຮູ້ຈາກສັງຄົມ, ວັດທະນາທຳ ແລະ ສະພາບແວດລ້ອມທີ່ເດັກອາໄສຢູ່ໃນແຕ່ລະທ້ອງຖິ່ນ ແລະ ໃນນັ້ນໃຫ້ແຕ່ລະໂຮງຮຽນຄຳນຶງເຖິງຄວາມແຕກຕ່າງໃນການຮຽນຮູ້ຂອງເດັກແຕ່ລະຄົນ.

ນອກນັ້ນການນຳໃຊ້ຕົວຈິງໃນການສ້າງແຜນການສອນປະຈຳປີ, ເດືອນ, ອາທິດ ແລະ ປະຈຳວັນ ແລະການແຕ່ງບົດສອນຂອງແຕ່ລະໂຮງຮຽນ. ຈຳເປັນທີ່ຄູສອນຕ້ອງສຶກສາເນື້ອໃນທີ່ມີໃນປຶ້ມຄູ່ມືຄູ 6 ກິດຈະກຳເຊັ່ນ: ການເຄື່ອນໄຫວ ແລະ ຈັງຫວະ, ວົງມົນ, ສິລະປະສ້າງສັນ, ເກມການສຶກສາ, ຫຼິ້ນກາງແຈ້ງ ແລະ ຫຼິ້ນຕາມມຸມ. ສຶກສາວິທີການຈັດການຮຽນ-ການສອນ, ວິທີສ້າງຄຳຖາມ ແລະ ການບັນທຶກຂໍ້ມູນການຕິດຕາມພັດທະນາການຈາກປຶ້ມຄູ່ມືການຈັດກິດຈະກຳການຮຽນ-ການສອນ ແລະ ການຕິດຕາມປະເມີນຜົນ.

ຄະນະຮຽບຮຽງປຶ້ມແຜນການຈັດປະສົບການສະບັບນີ້ມີຄວາມຍິນດີຮັບຕ້ອນທຸກຄຳຄິດເຫັນທີ່ສ້າງສັນຈາກທ່ານຜູ້ຊົມໃຊ້ເພື່ອນຳໄປປັບປຸງປຶ້ມດັ່ງກ່າວໃຫ້ນັບມືດີຂຶ້ນໃນອະນາຄົດ.

ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ

# ສາລະບານ


| ຫົວຂໍ້ | ໜ້າ |
|---|---|
| **ຈຸດປະສົງ ສຳລັບອາທິດທີ 1** | **1-2** |
| **1. ໜ່ວຍ ຄົມມະນາຄົມ ແລະ ການສື່ສານ, ອາທິດທີ 1: ມື້ທີ 1** | **3** |
| ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ: ເຮັດທ່າທາງຕາມຈັງຫວະ | 3 |
| ກິດຈະກຳວົງມົນ: ປະເພດຂອງການເດີນທາງ | 4 |
| ກິດຈະກຳສິລະປະສ້າງສັນ: ປັ້ນດິນ | 5 |
| ກິດຈະກຳການຫຼິ້ນກາງແຈ້ງ: ເຄື່ອງຫຼິ້ນໃນເດີ່ນ | 6 |
| ກິດຈະກຳເກມການສຶກສາ: ເກມຈັບຄູ່ຮູບພາບທີ່ຄືກັນ | 7 |
| ກິດຈະກຳການຫຼິ້ນຕາມມຸມ: ມຸມອ່ານ ແລະ ມຸມເຄື່ອງຫຼິ້ນສຳຜັດ | 8 |
| **2. ໜ່ວຍ ຄົມມະນາຄົມ ແລະ ການສື່ສານ, ອາທິດທີ 1: ມື້ທີ 2** | **9** |
| ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ: ເຮັດທ່າທາງຕາມຄຳສັ່ງ | 9 |
| ກິດຈະກຳວົງມົນ: ເດີນທາງບົກ | 10 |
| ກິດຈະກຳສິລະປະສ້າງສັນ: ຂີດເສັ້ນຊື່ | 11 |
| ກິດຈະກຳການຫຼິ້ນກາງແຈ້ງ: ຫຼິ້ນ ພາຍເຮືອບົກ | 12 |
| ກິດຈະກຳເກມການສຶກສາ: ເກມຕໍ່ຮູບພາບ | 13 |
| ກິດຈະກຳການຫຼິ້ນຕາມມຸມ: ມຸມເຄື່ອງຫຼິ້ນສຳຜັດ ແລະ ມຸມອ່ານ | 14 |
| **3. ໜ່ວຍ ຄົມມະນາຄົມ ແລະ ການສື່ສານ, ອາທິດທີ 1: ມື້ທີ 3** | **15** |
| ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ: ເຮັດທ່າທາງຕາມຈິນຕະນາການ | 15 |
| ກິດຈະກຳວົງມົນ: ເດີນທາງນ້ຳ | 16 |
| ກິດຈະກຳສິລະປະສ້າງສັນ: ປັ້ນດິນ | 17 |
| ກິດຈະກຳການຫຼິ້ນກາງແຈ້ງ: ຫຼິ້ນ ລູ່ລີ່ເຂົ້າສານ | 18 |
| ກິດຈະກຳເກມການສຶກສາ: ເກມຈັບຄູ່ຮູບພາບທີ່ຄືກັນ | 19 |
| ກິດຈະກຳການຫຼິ້ນຕາມມຸມ: ມຸມເຄື່ອງຫຼິ້ນສຳຜັດ ແລະ ມຸມສິລະປະສ້າງສັນ | 20 |
| **4. ໜ່ວຍ ຄົມມະນາຄົມ ແລະ ການສື່ສານ, ອາທິດທີ 1: ມື້ທີ 4** | **21** |
| ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ: ເຮັດທ່າທາງເປັນຜູ້ນຳ, ຜູ້ຕາມ | 21 |
| ກິດຈະກຳວົງມົນ: ເດີນທາງທາງອາກາດ | 22 |
| ກິດຈະກຳສິລະປະສ້າງສັນ: ພັບເຈ້ຍ | 23 |
| ກິດຈະກຳການຫຼິ້ນກາງແຈ້ງ: ຫຼິ້ນ ປະຕິບັດໄຟອຳນາດ | 24 |
| ກິດຈະກຳເກມການສຶກສາ: ເກມລຽນລຳດັບຮູບພາບ | 25 |
| ກິດຈະກຳການຫຼິ້ນຕາມມຸມ: ມຸມສິລະປະສ້າງສັນ ແລະ ມຸມບົດບາດສົມມຸດ | 26 |
| **5. ໜ່ວຍ ຄົມມະນາຄົມ ແລະ ການສື່ສານ, ອາທິດທີ 1: ມື້ທີ 5** | **27** |
| ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ: ເຮັດທ່າທາງຕາມອໍ້ຕົກລົງ | 27 |
| ກິດຈະກຳວົງມົນ: ໄຟອຳນາດ | 28 |
| ກິດຈະກຳສ້າງສັນ: ແຕ້ມຮູບພາບ | 29 |
| ກິດຈະກຳການຫຼິ້ນກາງແຈ້ງ: ຫຼິ້ນນ້ຳ, ຫຼິ້ນຊາຍ | 30 |
| ກິດຈະກຳເກມການສຶກສາ: ເກມຈັດພວດໝູ່ສີ | 31 |
| ກິດຈະກຳການຫຼິ້ນຕາມມຸມ: ມຸມເຄື່ອງຫຼິ້ນສຳຜັດ ແລະ ມຸມເກມການສຶກສາ | 32 |

**ຈຸດປະສົງ ສຳລັບອາທິດທີ 2** **33-34**

**6. ໜ່ວຍ ລົມມະນາຄົມ ແລະ ການສື່ສານ, ອາທິດທີ 2: ມື້ທີ 1** **35**

ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ: ເຮັດທ່າທາງຕາມຈິນຕະນາການ 35

ກິດຈະກຳວົງມົນ: ຍ່າງໃຫ້ປອດໄພ 36

ກິດຈະກຳສິລະປະສ້າງສັນ: ຂີດເສັ້ນ 37

ກິດຈະກຳການຫຼິ້ນກາງແຈ້ງ: ຫຼິ້ນ ເຊືອກຜ້າ 38

ກິດຈະກຳເກມການສຶກສາ: ເກມຈັບຄູ່ຮູບພາບທີ່ຄືກັນ 39

ກິດຈະກຳການຫຼິ້ນຕາມມຸມ: ມຸມອ່ານ ແລະ ມຸມບົດບາດສົມມຸດ 40

**7. ໜ່ວຍ ລົມມະນາຄົມ ແລະ ການສື່ສານ, ອາທິດທີ 2: ມື້ທີ 2** **41**

ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ: ເຮັດທ່າທາງຕາມຈິນຕະນາການ 41

ກິດຈະກຳວົງມົນ: ເດີນທາງບົກ 42

ກິດຈະກຳສິລະປະສ້າງສັນ: ຮ້ອຍພາກປັດ 43

ກິດຈະກຳການຫຼິ້ນກາງແຈ້ງ: ຫຼິ້ນເຄື່ອງຫຼິ້ນໃນເດີ່ນ 44

ກິດຈະກຳເກມການສຶກສາ: ເກມຕໍ່ຮູບພາບ 45

ກິດຈະກຳການຫຼິ້ນຕາມມຸມ: ມຸມເຄື່ອງຫຼິ້ນສຳຜັດ ແລະ ມຸມສິລະປະສ້າງສັນ 46

**8. ໜ່ວຍ ລົມມະນາຄົມ ແລະ ການສື່ສານ, ອາທິດທີ 2: ມື້ທີ 3** **47**

ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ: ເຮັດທ່າທາງຕາມຄຳສັ່ງ 47

ກິດຈະກຳວົງມົນ: ເດີນທາງນ້ຳ 48

ກິດຈະກຳສິລະປະສ້າງສັນ: ຂີດຂຽນຕົວເລກ 49

ກິດຈະກຳການຫຼິ້ນກາງແຈ້ງ: ຫຼິ້ນ ເຕັ້ນກົບ 50

ກິດຈະກຳເກມການສຶກສາຫົວຂໍ້: ເກມຈັບຄູ່ຮູບພາບກັບພະຍັນຊະນະ 51

ກິດຈະກຳການຫຼິ້ນຕາມມຸມ: ມຸມເຄື່ອງຫຼິ້ນສຳຜັດ ແລະ ມຸມເກມການສຶກສາ 52

**9. ໜ່ວຍ ລົມມະນາຄົມ ແລະ ການສື່ສານ, ອາທິດທີ 2: ມື້ທີ 4** **53**

ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ: ເຮັດທ່າທາງຕາມຂໍ້ຕົກລົງ 53

ກິດຈະກຳວົງມົນ: ເດີນທາງອາກາດ 54

ກິດຈະກຳສິລະປະສ້າງສັນ: ພັບເຈ້ຍ 55

ກິດຈະກຳການຫຼິ້ນກາງແຈ້ງ: ຫຼິ້ນ ໄຟອຳນາດ 56

ກິດຈະກຳເກມການສຶກສາ: ເກມຕໍ່ຮູບພາບ 57

ກິດຈະກຳການຫຼິ້ນຕາມມຸມ: ມຸມບົດບາດສົມມຸດ ແລະ ມຸມເຄື່ອງຫຼິ້ນສຳຜັດ 58

**10. ໜ່ວຍ ລົມມະນາຄົມ ແລະ ການສື່ສານ, ອາທິດທີ 2: ມື້ທີ 5** **59**

ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ: ເຮັດທ່າທາງຕາມຈັງຫວະ 59

ກິດຈະກຳວົງມົນ: ໄຟອຳນາດ 60

ກິດຈະກຳສິລະປະສ້າງສັນ: ຂີດເສັ້ນ 61

ກິດຈະກຳການຫຼິ້ນກາງແຈ້ງ: ຫຼິ້ນ ພາຍເຮືອບົກ 62

ກິດຈະກຳເກມການສຶກສາ: ເກມຕໍ່ຮູບພາບ 63

ກິດຈະກຳການຫຼິ້ນຕາມມຸມ: ມຸມບົດບາດສົມມຸດ ແລະ ມຸມເຄື່ອງຫຼິ້ນສຳຜັດ 64

| | |
|---|---|
| **ຈຸດປະສົງ ສຳລັບອາທິດທີ 3** | **65-66** |
| **11. ໜ່ວຍ ຄົມມະນາຄົມ ແລະ ການສື່ສານ, ອາທິດທີ 3: ມື້ທີ 1** | **67** |
| ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ: ເຮັດທ່າທາງຕາມຈິນຕະນາການ | 67 |
| ກິດຈະກຳວົງມົນ: ສົນທະນາ | 68 |
| ກິດຈະກຳສິລະປະສ້າງສັນ: ຂີດເສັ້ນຊື່ | 69 |
| ກິດຈະກຳການຫຼິ້ນກາງແຈ້ງ: ຫຼິ້ນ ລູ່ລີ່ເຂົ້າສານ | 70 |
| ກິດຈະກຳເກມການສຶກສາ: ເກມຕໍ່ຮູບພາບ | 71 |
| ກິດຈະກຳການຫຼິ້ນຕາມມຸມ: ມຸມສິລະປະສ້າງສັນ ແລະ ມຸມອ່ານ | 72 |
| **12. ໜ່ວຍ ຄົມມະນາຄົມ ແລະ ການສື່ສານ, ອາທິດທີ 3: ມື້ທີ 2** | **73** |
| ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ: ເຮັດທ່າທາງຕາມຈັງຫວະ | 73 |
| ກິດຈະກຳວົງມົນ: ຟັງແລະເບິ່ງ | 74 |
| ກິດຈະກຳສິລະປະສ້າງສັນ: ຕັດ ແລະ ຕິດເຈ້ຍ | 75 |
| ກິດຈະກຳການຫຼິ້ນກາງແຈ້ງ: ຫຼິ້ນ ສົ່ງດອກໄມ້ | 76 |
| ກິດຈະກຳເກມການສຶກສາ: ເກມຕໍ່ຮູບພາບ | 77 |
| ກິດຈະກຳການຫຼິ້ນຕາມມຸມ: ມຸມບົດບາດສົມມຸດ ແລະ ມຸມອ່ານ | 78 |
| **13. ໜ່ວຍ ຄົມມະນາຄົມ ແລະ ການສື່ສານ, ອາທິດທີ 3: ມື້ທີ 3** | **79** |
| ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ: ເຮັດທ່າທາງຕາມຂໍ້ຕົກລົງ | 79 |
| ກິດຈະກຳວົງມົນ: ອ່ານ | 80 |
| ກິດຈະກຳສິລະປະສ້າງສັນ: ແຕ້ມ ແລະ ທາສີຮູບພາບ | 81 |
| ກິດຈະກຳການຫຼິ້ນກາງແຈ້ງ: ຫຼິ້ນ ລຳວົງຍາດຕັ່ງ | 82 |
| ກິດຈະກຳເກມການສຶກສາ: ເກມຕໍ່ຮູບພາບ | 83 |
| ກິດຈະກຳການຫຼິ້ນຕາມມຸມ: ມຸມເຄື່ອງຫຼິ້ນສຳຜັດ ແລະ ມຸມອ່ານ | 84 |
| **14. ໜ່ວຍ ຄົມມະນາຄົມ ແລະ ການສື່ສານ, ອາທິດທີ 3: ມື້ທີ 4** | **85** |
| ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ: ເຮັດທ່າທາງເປັນຜູ້ນຳ, ຜູ້ຕາມ | 85 |
| ກິດຈະກຳວົງມົນ: ເວົ້າ ແລະ ຟັງ | 86 |
| ກິດຈະກຳສິລະປະສ້າງສັນ: ພັບເຈ້ຍ | 87 |
| ກິດຈະກຳການຫຼິ້ນກາງແຈ້ງ: ເຄື່ອງຫຼິ້ນໃນເດີ່ນ | 88 |
| ກິດຈະກຳເກມການສຶກສາ: ເກມຕໍ່ຮູບພາບ | 89 |
| ກິດຈະກຳການຫຼິ້ນຕາມມຸມ: ມຸມເຄື່ອງຫຼິ້ນສຳຜັດ ແລະ ມຸມເກມການສຶກສາ | 90 |
| **15. ໜ່ວຍ ຄົມມະນາຄົມ ແລະ ການສື່ສານ, ອາທິດທີ 3: ມື້ທີ 5** | **91** |
| ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ: ເຮັດທ່າທາງຕາມຈິນຕະນາການ | 91 |
| ກິດຈະກຳວົງມົນ: ສື່ສານດ້ວຍການຂຽນ ແລະ ແຕ້ມ | 92 |
| ກິດຈະກຳສິລະປະສ້າງສັນ: ຈີກເຈ້ຍ | 93 |
| ກິດຈະກຳການຫຼິ້ນກາງແຈ້ງ: ຫຼິ້ນ ຍາດບ່ອນ | 94 |
| ກິດຈະກຳເກມການສຶກສາ: ເກມຕໍ່ຮູບພາບ | 95 |
| ກິດຈະກຳການຫຼິ້ນຕາມມຸມ: ມຸມສິລະປະສ້າງສັນ ແລະ ມຸມອ່ານ | 96 |

**ຈຸດປະສົງ ສຳລັບອາທິດທີ 4** **97-98**

**16. ໜ່ວຍ ຄົມມະນາຄົມ ແລະ ການສື່ສານ, ອາທິດທີ 4: ມື້ທີ 1** **99**

ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ: ເຮັດທ່າທາງຕາມຄຳສັ່ງ 99

ກິດຈະກຳວົງມົນ: ສົນທະນາ 100

ກິດຈະກຳສິລະປະສ້າງສັນ: ຂີດເສັ້ນຊື່ 101

ກິດຈະກຳການຫຼິ້ນກາງແຈ້ງ ຫຼິ້ນເຄື່ອງຫຼິ້ນໃນເດີ່ນ 102

ກິດຈະກຳເກມການສຶກສາ: ເກມຕໍ່ຮູບພາບ 103

ກິດຈະກຳການຫຼິ້ນຕາມມຸມ: ມຸມບົດບາດສົມມຸດ ແລະ ມຸມສິລະປະສ້າງສັນ 104

**17. ໜ່ວຍ ຄົມມະນາຄົມ ແລະ ການສື່ສານ, ອາທິດທີ 4: ມື້ທີ 2** **105**

ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ: ເຮັດທ່າທາງຕາມຂໍ້ຕົກລົງ 105

ກິດຈະກຳວົງມົນຫົວຂໍ້: ໃຊ້ໂທລະສັບ 106

ກິດຈະກຳສິລະປະສ້າງສັນ: ປັ້ນດິນ 107

ກິດຈະກຳການຫຼິ້ນກາງແຈ້ງ: ຫຼິ້ນ ເຕັ້ນກົບ 108

ກິດຈະກຳເກມການສຶກສາ: ເກມຈັບຄູ່ຈຳນວນຮູບພາບກັບຕົວເລກ 109

ກິດຈະກຳການຫຼິ້ນຕາມມຸມ: ມຸມເຄື່ອງຫຼິ້ນສຳຜັດ ແລະ ມຸມອ່ານ 110

**18. ໜ່ວຍ ຄົມມະນາຄົມ ແລະ ການສື່ສານ, ອາທິດທີ 4: ມື້ທີ 3** **111**

ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ: ເຮັດທ່າທາງຕາມຈິນຕະນາການ 111

ກິດຈະກຳວົງມົນ: ຂີດຂຽນ ແລະ ແຕ້ມ 112

ກິດຈະກຳສິລະປະສ້າງສັນ: ທາສີຮູບພາບ 113

ກິດຈະກຳການຫຼິ້ນກາງແຈ້ງ: ຫຼິ້ນ ບຸງເຄື່ອງ 114

ກິດຈະກຳເກມການສຶກສາ: ເກມຕໍ່ຮູບພາບ 115

ກິດຈະກຳການຫຼິ້ນຕາມມຸມ: ມຸມເຄື່ອງຫຼິ້ນສຳຜັດ ແລະ ມຸມສິລະປະສ້າງສັນ 116

**19. ໜ່ວຍ ຄົມມະນາຄົມ ແລະ ການສື່ສານ, ອາທິດທີ 4: ມື້ທີ 4** **117**

ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ: ເຮັດທ່າທາງເປັນຜູ້ນຳ, ຜູ້ຕາມ 117

ກິດຈະກຳວົງມົນ: ເບິ່ງໂທລະພາບ ແລະ ຟັງວິທະຍຸ 118

ກິດຈະກຳສິລະປະສ້າງສັນ: ທາສີຮູບພາບ 119

ກິດຈະກຳການຫຼິ້ນກາງແຈ້ງ: ຫຼິ້ນ ເຊື່ອງຜ້າ 120

ກິດຈະກຳເກມການສຶກສາ: ເກມລຽນລຳດັບຮູບພາບ 121

ກິດຈະກຳການຫຼິ້ນຕາມມຸມ: ມຸມເຄື່ອງຫຼິ້ນສຳຜັດ ແລະ ມຸມບົດບາດສົມມຸດ 122

**20. ໜ່ວຍ ຄົມມະນາຄົມ ແລະ ການສື່ສານ, ອາທິດທີ 4: ມື້ທີ 5** **123**

ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ: ເຮັດທ່າທາງຕາມຈັງຫວະ 123

ກິດຈະກຳວົງມົນ: ອ່ານປຶ້ມ 124

ກິດຈະກຳສິລະປະສ້າງສັນ: ຂີດເສັ້ນ 125

ກິດຈະກຳການຫຼິ້ນກາງແຈ້ງ: ຫຼິ້ນ ຣ່າຍນ້ຳໃສ່ແກ້ວ 126

ກິດຈະກຳເກມການສຶກສາ: ເກມຈັບຄູ່ຮູບພາບທີ່ຄືກັນ 127

ກິດຈະກຳການຫຼິ້ນຕາມມຸມ: ມຸມອ່ານ ແລະ ມຸມເຄື່ອງຫຼິ້ນສຳຜັດ 128

ເອກະສານອ້າງອີງ 129

# ຈຸດປະສົງ ສຳລັບອາທິດທີ 1

## ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ

ເພື່ອໃຫ້ເດັກສາມາດ:

1. ເຮັດທ່າທາງຕາມຈັງຫວະເພງ ຢ່ຳຖິ້ມ, ຂັບລົດນ້ອຍ ຢ່າງມ່ວນຊື່ນ.
2. ເຮັດທ່າທາງຕາມຄຳສັ່ງ ຂີ່ລົດຖີບ ແລະ ຂັບລົດໃຫຍ່ ຢ່າງມ່ວນຊື່ນ.
3. ເຮັດທ່າທາງເປັນຜູ້ນຳ, ຜູ້ຕາມ ຂັບລົດໃຫຍ່, ພາຍເຮືອ ແລະ ຂີ່ລົດຖີບ ຖືກຕ້ອງ ແລະ ມ່ວນຊື່ນ.
4. ເຮັດທ່າທາງຕາມຂໍ້ຕົກລົງ ເຄາະ 1 ບາດ ໃຫ້ແລ່ນເຂົ້າມຸມສີແດງ, ເຄາະ 2 ບາດ ໃຫ້ແລ່ນເຂົ້າມຸມສີເຫຼືອງ ແລະ ເຄາະ 3 ບາດ ໃຫ້ແລ່ນເຂົ້າມຸມສີຂຽວ ຖືກຕ້ອງ ແລະ ມ່ວນຊື່ນ.

## ກິດຈະກຳວົງມົນ

ເພື່ອໃຫ້ເດັກສາມາດ:

1. ບອກປະເພດຂອງການເດີນທາງ.
2. ປຽບທຽບຂະໜາດນ້ອຍ, ໃຫຍ່.
3. ຮ້ອງເພງ ຂັບລົດນ້ອຍ ປະກອບທ່າທາງ.
4. ບອກພາຫະນະທີ່ໃຊ້ໃນການເດີນທາງບົກ, ທາງນ້ຳ ແລະ ທາງອາກາດ
5. ນັບເລກປາກເປົ່າ 1-8.
6. ອ່ານອອກສຽງພະຍັນຊະນະ ຣ.
7. ຟັງການເລົ່າເລື່ອງດ້ວຍຄວາມມ່ວນຊື່ນ.
8. ປຽບທຽບນ້ອຍ, ໃຫຍ່.
9. ເລົ່າຄຳຄ່ອງ ໄຟອຳນາດ ປະກອບທ່າທາງ.
10. ບອກໄຟອຳນາດ.
11. ເວົ້າເປັນຄຳຕາມຮູບພາບ: ສີແດງ, ສີເຫຼືອງ, ສີຂຽວ, ໄຟສັນຍານ, ຢຸດ ແລະ ເຮືອ.

## ກິດຈະກຳສິລະປະສ້າງສັນ

ເພື່ອໃຫ້ເດັກສາມາດ:

1. ປັ້ນເປັນຮູບພາກບານ.
2. ຂີດເສັ້ນຊື່ຕາມຮອຍຈ້ຳແຕ່ ຊ້າຍ ຫາ ຂວາ ໃສ່ຕົວ ບ, ປ ຖືກຕ້ອງ.
3. ປັ້ນດິນໃຫ້ເປັນເຮືອ ແລະ ໄມ້ພາຍເຮືອ.
4. ພັບເຈ້ຍເປັນຮູບຈະຫຼວດຖືກຕ້ອງ.
5. ແຕ້ມຮູບພາບ ຕື່ມລົດໃຫຍ່ຕາມແບບຖືກຕ້ອງ.

# ກິດຈະກຳການຫຼິ້ນກາງແຈ້ງ

ເພື່ອໃຫ້ເດັກສາມາດ:

1. ຫຼິ້ນເຄື່ອງຫຼິ້ນໃນເດີ່ນ ໂອ້ນຊາ, ຕະລູດ, ກົງລົດ, ເຄື່ອງດ່າງ ຢ່າງມ່ວນຊື່ນ ແລະ ປອດໄພ.
2. ຫຼິ້ນແບບຫຼິ້ນປະດິດສ້າງ ພາຍເຮືອບົກ, ປະຕິບັດໄຟຈະລະຈອນ  ຢ່າງມ່ວນຊື່ນ ແລະ ປອດ ໄພ.
3. ຫຼິ້ນແບບຫຼິ້ນພື້ນເມືອງ ລູລີ່ເຂົ້າສານ ຢ່າງມ່ວນຊື່ນ ແລະ ປອດໄພ.
4. ຫຼິ້ນຫຼິ້ນນ້ຳ, ຫຼິ້ນຊາຍ: ຣ່າຍນ້ຳໃສ່ແກ້ວ, ພິມຝາມືໃສ່ອ່າງຊາຍ, ຜອງຊາຍ ຢ່າງມ່ວນຊື່ນ ແລະ ປອດໄພ.

# ກິດຈະກຳເກມການສຶກສາ

ເພື່ອໃຫ້ເດັກສາມາດ:

1. ນຳເອົາຮູບພາບທີ່ຄືກັນມາຈັບຄູ່ກັນ ຮູບພາບ: ລົດຖີບ, ເຮືອພາຍ ແລະ ເຮືອບິນ, ຮູບພາບ: ເຮືອພາຍ, ເຮືອໃບ ແລະ ເຮືອຈັກຖືກຕ້ອງ.
2. ຕໍ່ຮູບພາບຕາມແບບ ຮູບພາບ: ຄົນຍ່າງຕາມທາງເບື້ອງຂວາມື ແລະ ລົດແລ່ນຕາມທາງຖືກຕ້ອງ.
3. ລຽນລຳດັບຮູບພາບເຮືອບິນ ແຕ່ນ້ອຍ ຫາ ໃຫຍ່ຖືກຕ້ອງ.
4. ນຳເອົາຮູບເລຂາຄະນິດທີ່ມີສີຄືກັນມາຈັດເປັນໝວດ: ຮູບວົງມົນສີແດງ, ສາມແຈສີຟ້າ, ສີ່ແຈ ສີເຫຼືອງຖືກຕ້ອງ.

# ກິດຈະກຳການຫຼິ້ນຕາມມຸມ

ເພື່ອໃຫ້ເດັກສາມາດ:

1. ຫຼິ້ນໃນມຸມອ່ານຢ່າງມ່ວນຊື່ນ.
2. ຫຼິ້ນໃນມຸມເຄື່ອງຫຼິ້ນສຳຜັດຢ່າງມ່ວນຊື່ນ.
3. ຫຼິ້ນໃນມຸມສິລະປະສ້າງສັນຢ່າງມ່ວນຊື່ນ.
4. ຫຼິ້ນໃນມຸມບົດບາດສົມມຸດຢ່າງມ່ວນຊື່ນ.
5. ຫຼິ້ນໃນມຸມເກມການສຶກສາຢ່າງມ່ວນຊື່ນ.

# ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຮັດທ່າທາງຕາມຈັງຫວະ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ເຮັດທ່າທາງຕາມຈັງຫວະເພງ ຢ່າງມ່ວນຊື່ນ.

### II. ເນື້ອໃນຕົ້ນຕໍ

ການເຮັດທ່າທາງຕາມຕາມຈັງຫວະເພງ ຢ່າຖິ້ມ.

### III. ສື່ການຮຽນ-ການສອນ

1. ເຄື່ອງເຄາະຈັງຫວະ.
2. ບົດເພງ ຢ່າຖິ້ມ.
3. ການບໍລິຫານອ້າງ (ປື້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກບໍລິຫານອ້າງ.
2. ໃຫ້ເດັກຍ່າງເຢ່ງເຢ້ຕາມເສັ້ນຊື່ທີ່ຄູກຳນົດ.
3. ຄູແນະນຳການເຮັດທ່າທາງຕາມຕາມຈັງຫວະພງ ຢ່າຖິ້ມ.
4. ໃຫ້ເດັກປະຕິບັດຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນັ່ງລົງຢຽດຂາອອກ ເອົາ 2 ມືທຸບຂາຄ່ອຍໆ.
6. ໃຫ້ເດັກເວົ້າຄືນກ່ຽວກັບການເຮັດທ່າທາງທີ່ເດັກໄດ້ເຮັດ.
7. ສຶກສາອົບຮົມເດັກ ກ່ຽວກັບຄວາມປອດໄພ ໃນເວລາເຮັດທ່າທາງຕາມຈັງຫວະເພງ.

### V. ການວັດ ແລະ ປະເມີນຜົນ

ສັງເກດການເຮັດທ່າທາງຕາມຈັງຫວະເພງ ຢ່າງມ່ວນຊື່ນ.

# ກິດຈະກຳວົງມົນ

## ຫົວຂໍ້: ປະເພດຂອງການເດີນທາງ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ບອກປະເພດຂອງການເດີນທາງ.
2. ປຽບທຽບຂະໜາດນ້ອຍ, ໃຫຍ່.

### II. ເນື້ອໃນຕົ້ນຕໍ

1. ປະເພດຂອງການເດີນທາງ: ທາງບົກ, ທາງນ້ຳ ແລະ ທາງອາກາດ.
2. ການປຽບທຽບຮູບລົດຖີບນ້ອຍ ແລະ ໃຫຍ່.

### III. ສື່ການຮຽນ-ການສອນ

1. ຮູບພາບ: ຖະໜົນ, ແມ່ນ້ຳ, ທ້ອງຟ້າ.
2. ຮູບພາບ: ລົດຖີບນ້ອຍ ແລະ ໃຫຍ່.

### IV. ກິດຈະກຳການຮຽນ-ການສອນ

1. ຄູສົນທະນາກັບເດັກກ່ຽວກັບການເດີນທາງມາໂຮງຮຽນຂອງເດັກ.
2. ໃຫ້ເດັກສັງເກດຮູບພາບ ແລະ ຄູສົນທະນາກ່ຽວກັບປະເພດຂອງການເດີນທາງ.
3. ໃຫ້ເດັກບອກປະເພດຂອງການເດີນທາງ.
4. ໃຫ້ເດັກປຽບທຽບຂະໜາດນ້ອຍ, ໃຫຍ່ ຂອງຮູບພາບລົດຖີບ.
5. ໃຫ້ເດັກເວົ້າຄືນກ່ຽວກັບປະເພດຂອງການເດີນທາງ: ທາງບົກ, ທາງນ້ຳ, ທາງອາກາດ ແລະ ການປຽບທຽບຂະໜາດນ້ອຍ, ໃຫຍ່.
6. ສຶກສາອົບຮົມເດັກ ກ່ຽວກັບການລະມັດລະວັງໃນການເດີນທາງ, ການໄປມາຕ້ອງໄປນຳພໍ່ແມ່, ອ້າຍ, ເອື້ອຍ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ການບອກປະເພດຂອງການເດີນທາງ.
2. ການປຽບທຽບຂະໜາດນ້ອຍ, ໃຫຍ່.

# ກິດຈະກຳສິລະປະສ້າງສັນ

## ຫົວຂໍ້: ປັ້ນດິນ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ປັ້ນດິນເປັນຮູບພາກບານ.

### II. ເນື້ອໃນຕົ້ນຕໍ

ການປັ້ນດິນເປັນຮູບພາກບານ.

### III. ສື່ການຮຽນ-ການສອນ

1. ດິນ.
2. ຜ້າຢາງ ຫຼື ເຈ້ຍຮອງ.
3. ຄຸນ້ຳ, ໂອ ແລະ ຜ້າເຊັດມື.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກເຮັດທ່າທາງກຳມື, ແບມື.
2. ຄູແນະນຳ, ສາທິດວິທີປັ້ນດິນ ແລະ ການເກັບມ້ຽນ.
3. ໃຫ້ເດັກປະຕິບັດຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
4. ໃຫ້ເດັກນຳສະເໜີຜົນງານ.
5. ສຶກສາອົບຮົມເດັກ ໃຫ້ມີຄວາມອົດທົນ, ການອະນາໄມມື ແລະ ເກັບມ້ຽນອຸປະກອນໄວ້ບ່ອນທີ່ກຳນົດ ພາຍຫຼັງການໃຊ້ແລ້ວ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ຄວາມຄ້າຍຄືຂອງການປັ້ນພາກບານ.
2. ຄວາມສາມັກຄີກັບໝູ່ເພື່ອນ.

# ກິດຈະກຳການຫຼິ້ນກາງແຈ້ງ

## ຫົວຂໍ້: ເຄື່ອງຫຼິ້ນໃນເດີ່ນ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດຫຼິ້ນເຄື່ອງຫຼິ້ນໃນເດີ່ນ ຢ່າງມ່ວນຊື່ນ ແລະ ປອດໄພ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນເຄື່ອງຫຼິ້ນ: ຫຼິ້ນໂອ້ນຊາ, ລອດກົງຢາງ ແລະ ເດື່ອງດ່າງ.

### III. ສື່ການຮຽນ-ການສອນ

ໂອ້ນຊາ, ກົງລອດ ແລະ ເດື່ອງດ່າງ ຫຼື ເຄື່ອງຫຼິ້ນທີ່ມີໃນທ້ອງຖິ່ນ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກຈັບມືກັນເປັນຄູ່ຍ່າງອອກຫ້ອງ ໄປກາງເດີ່ນ.
2. ຄູແນະນຳການຫຼິ້ນໂອ້ນຊາ, ລອດກົງຢາງ ແລະ ເດື່ອງດ່າງ.
3. ໃຫ້ເດັກປະຕິບັດຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
4. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນໂອ້ນຊາ, ລອດກົງຢາງ ແລະ ເດື່ອງດ່າງ.
5. ສຶກສາອົບຮົມເດັກ ກ່ຽວກັບຄວາມປອດໄພໃນການຫຼິ້ນໂອ້ນຊາ, ລອດກົງ ແລະ ເດື່ອງດ່າງ.

### V. ການວັດ ແລະ ປະເມີນຜົນ

ສັງເກດການຫຼິ້ນເຄື່ອງຫຼິ້ນໃນເດີ່ນ ຢ່າງມ່ວນຊື່ນ ແລະ ປອດໄພ.

# ກິດຈະກຳເກມການສຶກສາ

## ຫົວຂໍ້: ເກມຈັບຄູ່ຮູບພາບທີ່ຄືກັນ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດນຳເອົາຮູບພາບທີ່ຄືກັນ ມາຈັບຄູ່ກັນຖືກຕ້ອງ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນເກມຈັບຄູ່ຮູບພາບທີ່ຄືກັນ: ລົດຖີບ, ເຮືອພາຍ ແລະ ເຮືອບິນ.

### III. ສື່ການຮຽນ-ການສອນ

1. ເກມຈັບຄູ່ຮູບພາບທີ່ຄືກັນ: ລົດຖີບ, ເຮືອພາຍ ແລະ ເຮືອບິນ.
2. ເກມເກົ່າ ເກມຈັບຄູ່ຮູບພາບກັບພະຍັນຊະນະ: ງົວ ງ, ຂຽດ ຂ, ຖະໜົນ ຖ, ຈົວ ຈ.
3. ບົດເພງ ຢ່າຖິ້ມ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກຮ້ອງເພງ ຢ່າຖິ້ມ.
2. ຄູສະເໜີຊື່ເກມ.
3. ຄູສາທິດວິທີຫຼິ້ນເກມຈັບຄູ່ຮູບພາບ ແລະ ແນະນຳການເກັບມ້ຽນເກມ.
4. ໃຫ້ເດັກຫຼິ້ນເກມໃໝ່, ເກມເກົ່າ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນເກມ.
6. ສຶກສາອົບຮົມເດັກ ໃຫ້ມີຄວາມອົດທົນ, ການແບ່ງປັນ, ການລໍຖ້າ ແລະ ການເກັບມ້ຽນເກມ ໃຫ້ຖືກບ່ອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ຄວາມຖືກຕ້ອງໃນການຈັບຄູ່ຮູບພາບທີ່ຄືກັນ.
2. ຄວາມເບີກບານໃນການເຂົ້າຮ່ວມກິດຈະກຳ.

# ກິດຈະກຳການຫຼິ້ນຕາມມຸມ

## ຫົວຂໍ້: ມຸມອ່ານ ແລະ ມຸມເຄື່ອງຫຼິ້ນສຳຜັດ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ.

1. ຫຼິ້ນໃນມຸມອ່ານ ຢ່າງມ່ວນຊື່ນ.
2. ຫຼິ້ນໃນມຸມເຄື່ອງຫຼິ້ນສຳຜັດ ຢ່າງມ່ວນຊື່ນ.

### II. ເນື້ອໃນຕົ້ນຕໍ

1. ການຫຼິ້ນໃນມຸມອ່ານ: ເປີດປຶ້ມ ແລະ ອ່ານຮູບພາບລົດ, ເຮືອ ແລະ ເຮືອບິນ.
2. ການຫຼິ້ນໃນມຸມເຄື່ອງຫຼິ້ນສຳຜັດ: ຫຼິ້ນລົດ, ເຮືອ ແລະ ເຮືອບິນ.

### III. ສື່ການຮຽນ-ການສອນ

1. ປຶ້ມຮູບພາບ ລົດ, ເຮືອ ແລະ ເຮືອບິນ.
2. ເຄື່ອງຫຼິ້ນ: ລົດ, ເຮືອ ແລະ ເຮືອບິນ.
3. ບັດເຂົ້າມຸມຫຼິ້ນ.

### IV. ກິດຈະກຳການຮຽນ-ການສອນ

1. ຄູສົນທະນາກັບເດັກກ່ຽວກັບການເດີນທາງມາໂຮງຮຽນ.
2. ຄູແນະນຳວິທີຫຼິ້ນຕາມມຸມອ່ານ, ມຸມເຄື່ອງຫຼິ້ນສຳຜັດ ແລະ ການເກັບມ້ຽນ.
3. ໃຫ້ເດັກເລືອກບັດເຂົ້າຫຼິ້ນຕາມມຸມ.
4. ໃຫ້ເດັກເຂົ້າຫຼິ້ນຕາມມຸມ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເວົ້າຄືນກ່ຽວກັບການເຂົ້າຫຼິ້ນຕາມມຸມ.
6. ສຶກສາອົບຮົມເດັກ ໃຫ້ມີຄວາມອົດທົນ, ການແບ່ງປັນ, ການລໍຄອຍ ແລະ ການເກັບມ້ຽນ ເຄື່ອງຫຼິ້ນໃຫ້ຖືກບ່ອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ການຫຼິ້ນໃນມຸມອ່ານ ຢ່າງມ່ວນຊື່ນ.
2. ການຫຼິ້ນໃນມຸມເຄື່ອງຫຼິ້ນສຳຜັດ ຢ່າງມ່ວນຊື່ນ.

# ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຮັດທ່າທາງຕາມຄຳສັ່ງ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ເຮັດທ່າທາງຕາມຄຳສັ່ງຖືກຕ້ອງ ແລະ ມ່ວນຊື່ນ.

### II. ເນື້ອໃນຕົ້ນຕໍ

ການເຮັດທ່າທາງຕາມຄຳສັ່ງ: ຂີ່ລົດຖີບ ແລະ ຂັບລົດໃຫຍ່.

### III. ສື່ການຮຽນ-ການສອນ

1. ເຄື່ອງເຄາະຈັງຫວະ.
2. ການບໍລິຫານມື (ປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກບໍລິຫານມື.
2. ໃຫ້ເດັກຍ່າງຕາມທາງແຄບ.
3. ຄູສາທິດການເຮັດທ່າທາງຕາມຄຳສັ່ງ: ຂີ່ລົດຖີບ ແລະ ຂັບລົດໃຫຍ່.
4. ໃຫ້ເດັກປະຕິບັດຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກຢືນເອົາມືແຕະຫົວ ແລະ ແຕະບ່າຊ້າໆ.
6. ໃຫ້ເດັກເວົ້າຄືນກ່ຽວກັບການເຮັດທ່າທາງທີ່ເດັກໄດ້ເຮັດ.
7. ສຶກສາອົບຮົມເດັກ ກ່ຽວກັບຄວາມປອດໄພໃນເວລາເຮັດທ່າທາງຕາມຄຳສັ່ງ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ການເຮັດທ່າທາງຕາມຄຳສັ່ງ ຢ່າງມ່ວນຊື່ນ.

# ກິດຈະກຳວົງມົນ

## ຫົວຂໍ້: ເດີນທາງບົກ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ຮ້ອງເພງ ຂັບລົດນ້ອຍ ປະກອບທ່າທາງ.
2. ບອກພາຫະນະທີ່ໃຊ້ໃນການເດີນທາງບົກ ແລະ ເວົ້າເປັນຄຳຕາມຮູບພາບ.
3. ນັບເລກປາກເປົ່າ 1-8.

### II. ເນື້ອໃນຕົ້ນຕໍ

1. ການຮ້ອງເພງ ຂັບລົດນ້ອຍ ປະກອບທ່າທາງ.
2. ພາຫະນະທີ່ໃຊ້ໃນການເດີນທາງບົກ: ລົດຖີບ, ລົດຈັກ, ລົດໃຫຍ່... ແລະ ເວົ້າເປັນຄຳຕາມຮູບພາບ ລົດ.
3. ການນັບເລກປາກເປົ່າ 1-8.

### III. ສື່ການຮຽນ-ການສອນ

1. ບົດເພງ ຂັບລົດນ້ອຍ (ປື້ມຄູ່ມືຄູ).
2. ຮູບພາບ: ລົດຈັກ, ລົດໃຫຍ່, ລົດຖີບ.

### IV. ກິດຈະກຳການຮຽນ-ການສອນ

1. ຄູສົນທະນາກັບເດັກກ່ຽວກັບການເດີນທາງມາໂຮງຮຽນ.
2. ໃຫ້ເດັກຮ້ອງເພງ ຂັບລົດນ້ອຍ ປະກອບທ່າທາງ ແລະ ຄູສົນທະນາກັບເດັກ ກ່ຽວກັບເນື້ອໃນເພງ.
3. ໃຫ້ເດັກສັງເກດຮູບພາບ ແລະ ຄູສົນທະນາກັບເດັກ ກ່ຽວກັບພາຫະນະທີ່ໃຊ້ໃນການເດີນທາງບົກ.
4. ໃຫ້ເດັກບອກພາຫະນະທີ່ໃຊ້ໃນການເດີນທາງ ແລະ ການນັບເລກປາກເປົ່າ 1-8.
5. ໃຫ້ເດັກເວົ້າຄືນກ່ຽວກັບພາຫະນະໃນການເດີນທາງບົກ, ຮ້ອງເພງ, ນັບປາກເປົ່າ 1-8 ແລະ ເວົ້າເປັນຄຳຕາມຮູບພາບ.
6. ສຶກສາອົບຮົມເດັກ ກ່ຽວກັບການເປັນເດັກດີ ແມ່ນບໍ່ປີນຂຶ້ນລົດ ແລະ ບໍ່ບິດກະແຈລົດ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ການຮ້ອງເພງ ຂັບລົດນ້ອຍ ປະກອບທ່າທາງ.
2. ການບອກພາຫະນະທີ່ໃຊ້ໃນການເດີນທາງບົກ ແລະ ການເວົ້າເປັນຄຳຕາມຮູບພາບ.
3. ການນັບເລກປາກເປົ່າ 1-8.

# ກິດຈະກຳສິລະປະສ້າງສັນ

## ຫົວຂໍ້: ຂີດເສັ້ນຊື່

## I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ຂີດເສັ້ນຊື່ໃສ່ຕົວ ບ, ປ ຕາມຮອຍຈ້ຳ ແຕ່ຊ້າຍຫາຂວາຖືກຕ້ອງ.

## II. ເນື້ອໃນຕົ້ນຕໍ

ການຂີດເສັ້ນຊື່ໃສ່ຕົວ ບ, ປ ຕາມຮອຍຈ້ຳ ແຕ່ຊ້າຍຫາຂວາ.

## III. ສື່ການຮຽນ-ການສອນ

1. ສໍດຳ.
2. ປື້ມບົດເຝິກຫັດພາສາລາວ ເຫຼັ້ມທີ 2 ຫຼື ແບບຂີດເສັ້ນຊື່ໃສ່ຕົວ ບ, ປ ຕາມຮອຍຈ້ຳ ແຕ່ຊ້າຍຫາຂວາ.

## IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກກຳມື ແລະ ແບມື.
2. ຄູແນະນຳ, ສາທິດວິທີການຂີດເສັ້ນຊື່ໃສ່ຕົວ ບ, ປ ຕາມຮອຍຈ້ຳ ແຕ່ຊ້າຍຫາຂວາ ແລະ ການເກັບມ້ຽນ.
3. ໃຫ້ເດັກປະຕິບັດຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
4. ໃຫ້ເດັກນຳສະເໜີຜົນງານ.
5. ສຶກສາອົບຮົມເດັກ ໃຫ້ມີຄວາມອົດທົນ, ບໍ່ຂີດກັນ ແລະ ການເກັບມ້ຽນອຸປະກອນ.

## V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ຄວາມຖືກຕ້ອງໃນການຂີດເສັ້ນຊື່ໃສ່ຕົວ ບ, ປ ຕາມຮອຍຈ້ຳ ແຕ່ຊ້າຍຫາຂວາ.
2. ຄວາມເອົາໃຈໃສ່ ແລະ ຄວາມສາມັກຄີກັບໝູ່ເພື່ອນ.

# ກິດຈະກຳການຫຼິ້ນກາງແຈ້ງ

## ຫົວຂໍ້: ແບບຫຼິ້ນ ພາຍເຮືອບົກ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດຫຼິ້ນແບບຫຼິ້ນປະດິດສ້າງ ພາຍເຮືອບົກ ຢ່າງມ່ວນຊື່ນ ແລະ ປອດໄພ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນແບບຫຼິ້ນປະດິດສ້າງ ພາຍເຮືອບົກ.

### III. ສື່ການຮຽນ-ການສອນ

1. ວິທີຫຼິ້ນ (ປຶ້ມຄູ່ມືຄູ).
2. ບົດເພງ ພາຍເຮືອ.

### IV. ກິດຈະກຳການຮຽນ-ການສອນ

1. ຄູສົນທະນາກັບເດັກ ກ່ຽວກັບເຮືອທີ່ເດັກເຄີຍເຫັນ.
2. ຄູສາທິດວິທີຫຼິ້ນແບບຫຼິ້ນ ພາຍເຮືອບົກ.
3. ໃຫ້ເດັກຫຼິ້ນຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
4. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນແບບຫຼິ້ນ ພາຍເຮືອບົກ.
5. ສຶກສາອົບຮົມ ກ່ຽວກັບຄວາມປອດໄພ ໃນເວລາຫຼິ້ນແບບຫຼິ້ນ ພາຍເຮືອບົກ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ການຫຼິ້ນແບບຫຼິ້ນປະດິດສ້າງ ພາຍເຮືອບົກ ຢ່າງມ່ວນຊື່ນ ແລະ ປອດໄພ.

# ກິດຈະກຳເກມການສຶກສາ

## ຫົວຂໍ້: ເກມຕໍ່ຮູບພາບ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ຕໍ່ຮູບພາບ ຕາມແບບຖືກຕ້ອງ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນເກມຕໍ່ຮູບພາບ ຄົນຍ່າງ ຕາມທາງແຄມເບື້ອງຂວາມື ແລະ ລົດແລ່ນຕາມທາງ.

### III. ສື່ການຮຽນ-ການສອນ

1. ເກມຕໍ່ຮູບພາບ: ຄົນຍ່າງ ຕາມທາງແຄມເບື້ອງຂວາມື ແລະ ລົດແລ່ນຕາມທາງ.
2. ເກມເກົ່າ ເກມຈັບຄູ່ຮູບພາບທີ່ຄືກັນ: ລົດຖີບ, ເຮືອພາຍ ແລະ ເຮືອບິນ.

### IV. ກິດຈະກຳການຮຽນ-ການສອນ

1. ຄູສົນທະນາກັບເດັກກ່ຽວກັບພາຫະນະທີ່ໃຊ້ໃນການເດີນທາງ ທາງບົກ.
2. ຄູສະເໜີຊື່ເກມໃໝ່.
3. ຄູສາທິດວິທີຫຼິ້ນເກມຕໍ່ຮູບພາບ ແລະ ແນະນຳການເກັບມ້ຽນ.
4. ໃຫ້ເດັກຫຼິ້ນເກມໃໝ່, ເກມເກົ່າ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນເກມ.
6. ສຶກສາອົບຮົມເດັກ ໃຫ້ມີຄວາມອົດທົນ, ການແບ່ງປັນ, ການລໍຖ້າ ແລະ ການເກັບມ້ຽນເກມໃຫ້ຖືກບ່ອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ຄວາມຖືກຕ້ອງໃນການຕໍ່ຮູບພາບ ຕາມແບບ.
2. ຄວາມເອົາໃຈໃສ່ຂອງເດັກ.
3. ຄວາມສາມັກຄີກັບໝູ່ເພື່ອນ.

# ກິດຈະກຳການຫຼິ້ນຕາມມຸມ

## ຫົວຂໍ້: ມຸມເຄື່ອງຫຼິ້ນສຳຜັດ ແລະ ມຸມອ່ານ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ຫຼິ້ນໃນມຸມເຄື່ອງຫຼິ້ນສຳຜັດ ຢ່າງມ່ວນຊື່ນ.
2. ຫຼິ້ນໃນມຸມອ່ານ ຢ່າງມ່ວນຊື່ນ.

### II. ເນື້ອໃນຕົ້ນຕໍ

1. ການຫຼິ້ນໃນມຸມເຄື່ອງຫຼິ້ນສຳຜັດ: ຫຼິ້ນຕໍ່ໄມ້ບັ້ອກເປັນຮູບຊົງຕ່າງໆ. ຕີກອງ, ສັ່ນກະແຊັກ ແລະ ເຄາະກະປ໋ອງ
2. ການຫຼິ້ນໃນມຸມອ່ານ: ເປີດປຶ້ມ ແລະ ອ່ານຮູບພາບລົດຈັກ, ລົດໃຫຍ່ ແລະ ລົດຖີບ.

### III. ສື່ການຮຽນ-ການສອນ

1. ບົດເພງ ຂັບລົດນ້ອຍ.
2. ໄມ້ບັ້ອກ, ກອງ, ກະແຊັກ ແລະ ກະປ໋ອງ.
3. ປຶ້ມຮູບພາບລົດຈັກ, ລົດໃຫຍ່ ແລະ ລົດຖີບ.
4. ບັດເຂົ້າມຸມຫຼິ້ນ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກຮ້ອງເພງ ຂັບລົດນ້ອຍ.
2. ຄູແນະນຳວິທີຫຼິ້ນຕາມມຸມເຄື່ອງຫຼິ້ນສຳຜັດ, ມຸມອ່ານ ແລະ ການເກັບມ້ຽນ.
3. ໃຫ້ເດັກເລືອກບັດເຂົ້າຫຼິ້ນຕາມມຸມ.
4. ໃຫ້ເດັກເຂົ້າຫຼິ້ນຕາມມຸມ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເວົ້າຄືນກ່ຽວກັບການເຂົ້າຫຼິ້ນຕາມມຸມ.
6. ສຶກສາອົບຮົມເດັກ ໃຫ້ມີຄວາມອົດທົນ, ການແບ່ງປັນ, ການລໍຄອຍ ແລະ ການເກັບມ້ຽນເຄື່ອງຫຼິ້ນໃຫ້ຖືກບ່ອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ການຫຼິ້ນໃນມຸມເຄື່ອງຫຼິ້ນສຳຜັດ ຢ່າງມ່ວນຊື່ນ.
2. ການຫຼິ້ນໃນມຸມອ່ານ ຢ່າງມ່ວນຊື່ນ.

# ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຮັດທ່າທາງຕາມຈັງຫວະ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ເຮັດທ່າທາງຕາມຈັງຫວະເພງ ຢ່າງມ່ວນຊື່ນ.

### II. ເນື້ອໃນຕົ້ນຕໍ

ການເຮັດທ່າທາງຕາມຈັງຫວະເພງ ອັບລົດນ້ອຍ.

### III. ສື່ການຮຽນ-ການສອນ

1. ເຄື່ອງເຄາະຈັງຫວະ.
2. ບົດເພງ ອັບລົດນ້ອຍ.
3. ການບໍລິຫານແອວ (ປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກບໍລິຫານແອວ.
2. ໃຫ້ເດັກເຕັ້ນຂ້າມທ່ອນໄມ້ ຫຼື ທໍ່ປຼາສະຕິກ.
3. ຄູແນະນຳການເຮັດທ່າທາງຕາມຈັງຫວະເພງ ອັບລົດນ້ອຍ.
4. ໃຫ້ເດັກປະຕິບັດຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນັ່ງລົງຫາຍໃຈເຂົ້າ, ອອກຊ້າໆ.
6. ໃຫ້ເດັກເວົ້າຄືນກ່ຽວກັບການເຮັດທ່າທາງທີ່ເດັກໄດ້ເຮັດ.
7. ສຶກສາອົບຮົມເດັກ ກ່ຽວກັບຄວາມປອດໄພ ໃນເວລາເຮັດທ່າທາງຕາມຈັງຫວະເພງ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ການເຮັດທ່າທາງຕາມຈັງຫວະເພງ ຢ່າງມ່ວນຊື່ນ.

# ກິດຈະກຳວົງມົນ

## ຫົວຂໍ້: ເດີນທາງນ້ຳ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ບອກພາຫະນະທີ່ໃຊ້ໃນການເດີນທາງນ້ຳ.
2. ອ່ານອອກສຽງພະຍັນຊະນະ ຣ.
3. ເວົ້າເປັນຄຳຕາມຮູບພາບ ເຮືອ.

### II. ເນື້ອໃນຕົ້ນຕໍ

1. ພາຫະນະທີ່ໃຊ້ໃນການເດີນທາງນ້ຳ: ເຮືອ, ແພ, ເຮືອຈັກ, ກຳປັ່ນ ແລະ ເຮືອໃບ.
2. ການອ່ານອອກສຽງພະຍັນຊະນະ ຣ.
3. ການເວົ້າເປັນຄຳຕາມຮູບພາບ ເຮືອ.

### III. ສື່ການຮຽນ-ການສອນ

1. ຮູບພາບເຮືອພາຍ, ເຮືອແພ, ເຮືອຈັກ ແລະ ກຳປັ່ນ.
2. ບັດພະຍັນຊະນະ ຣ.

### IV. ກິດຈະກຳການຮຽນ-ການສອນ

1. ຄູສົນທະນາກັບເດັກ ກ່ຽວກັບເຮືອທີ່ເດັກເຄີຍເຫັນ.
2. ໃຫ້ເດັກສັງເກດຮູບພາບ ແລະ ຄູສົນທະນາກັບເດັກກ່ຽວກັບພາຫະນະທີ່ໃຊ້ເດີນທາງນ້ຳ.
3. ໃຫ້ເດັກບອກພາຫະນະ ທີ່ໃຊ້ໃນການເດີນທາງນ້ຳ.
4. ໃຫ້ເດັກອ່ານອອກສຽງພະຍັນຊະນະ: ຣ ແລະ ເວົ້າເປັນຄຳຕາມຮູບພາບ: ເຮືອ.
5. ໃຫ້ເດັກເວົ້າຄືນກ່ຽວກັບພາຫະນະທີ່ໃຊ້ໃນການເດີນທາງນ້ຳ, ອ່ານອອກສຽງພະຍັນຊະນະ ຣ ແລະ ເວົ້າເປັນຄຳຕາມຮູບພາບ.
6. ສຶກສາອົບຮົມເດັກກ່ຽວກັບຄວາມປອດໄພໃນການຂີ່ເຮືອບໍ່ເດ່ມືອອກຫຼິ້ນນ້ຳ ແລະ ນຸ່ງເສື້ອຊູຊີບ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ການບອກພາຫະນະທີ່ໃຊ້ໃນການເດີນທາງນ້ຳ.
2. ການອ່ານ ອອກສຽງພະຍັນຊະນະ ຣ.
3. ການເວົ້າເປັນຄຳຕາມຮູບພາບ ເຮືອ.

# ກິດຈະກຳສິລະປະສ້າງສັນ

## ຫົວຂໍ້: ປັ້ນດິນ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ປັ້ນດິນໃຫ້ເປັນເຮືອ ແລະ ໄມ້ພາຍເຮືອ.

### II. ເນື້ອໃນຕົ້ນຕໍ

ການປັ້ນດິນໃຫ້ເປັນໃຫ້ເປັນເຮືອ ແລະ ໄມ້ພາຍເຮືອ.

### III. ສື່ການຮຽນ-ການສອນ

1. ດິນປັ້ນຫຼາຍສີ.
2. ຜ້າຢາງ ຫຼື ເຈ້ຍຮອງ.
3. ສະບູ, ຜ້າເຊັດມື ແລະ ນ້ຳລ້າງມື.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກກຳມື ແລະ ແບມື.
2. ຄູແນະນຳ, ສາທິດວິທີປັ້ນດິນໃຫ້ເປັນຮູບເຮືອ ແລະ ໄມ້ພາຍເຮືອ ແລະ ການເກັບມ້ຽນ.
3. ໃຫ້ເດັກປະຕິບັດຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
4. ໃຫ້ເດັກນຳສະເໜີຜົນງານ.
5. ສຶກສາອົບຮົມເດັກ ໃຫ້ມີຄວາມອົດທົນ, ການເກັບມ້ຽນອຸປະກອນໄວ້ບ່ອນທີ່ກຳນົດ ແລະ ລ້າງມື ພາຍຫຼັງທີ່ປັ້ນແລ້ວ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ການປັ້ນດິນເປັນຮູບເຮືອ ແລະ ໄມ້ພາຍເຮືອ.
2. ຄວາມເອົາໃຈໃສ່ໃນການປັ້ນເຮືອ ແລະ ໄມ້.
3. ຄວາມສາມັກຄີກັບໝູ່ເພື່ອນ.

# ກິດຈະກໍາການຫຼິ້ນກາງແຈ້ງ

## ຫົວຂໍ້: ແບບຫຼິ້ນ ລູ່ລີ່ເຂົ້າສານ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດຫຼິ້ນແບບຫຼິ້ນພື້ນເມືອງ ລູ່ລີ່ເຂົ້າສານ ຢ່າງມ່ວນຊືນ ແລະ ປອດໄພ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນແບບຫຼິ້ນພື້ນເມືອງ ລູ່ລີ່ເຂົ້າສານ.

### III. ສື່ການຮຽນ-ການສອນ

1. ບົດຄໍາຄ່ອງ ລູ່ລີ່ເຂົ້າສານ ແລະ ວິທີຫຼິ້ນ (ປຶ້ມຄູ່ມືຄູ).
2. ເຄື່ອງເຄາະຈັງຫວະ.

### IV. ກິດຈະກໍາການຮຽນ-ການສອນ

1. ໃຫ້ເດັກຍ່າງເປັນວົງມົນຕາມສຽງເຄາະ.
2. ຄູສາທິດວິທີຫຼິ້ນແບບຫຼິ້ນ ລູ່ລີ່ເຂົ້າສານ.
3. ໃຫ້ເດັກຫຼິ້ນຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
4. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນແບບຫຼິ້ນ ລູ່ລີ່ເຂົ້າສານ.
5. ສຶກສາອົບຮົມເດັກ ກ່ຽວກັບຄວາມປອດໄພ ໃນເວລາຫຼິ້ນແບບຫຼິ້ນ ລູ່ລີ່ເຂົ້າສານ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ການຫຼິ້ນແບບຫຼິ້ນພື້ນເມືອງ ລູ່ລີ່ເຂົ້າສານ ຢ່າງມ່ວນຊື່ນ ແລະ ປອດໄພ.

# ກິດຈະກຳເກມການສຶກສາ

## ຫົວຂໍ້: ເກມຈັບຄູ່ຮູບພາບທີ່ຄືກັນ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ນຳເອົາຮູບພາບທີ່ຄືກັນ ມາຈັບຄູ່ກັນຖືກຕ້ອງ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນເກມຈັບຄູ່ຮູບພາບທີ່ຄືກັນ: ເຮືອພາຍ, ເຮືອຈັກ ແລະ ເຮືອໃບ.

### III. ສື່ການຮຽນ-ການສອນ

1. ບົດເພງ ຂັບລົດນ້ອຍ.
2. ເກມຈັບຄູ່ຮູບພາບທີ່ຄືກັນ: ເຮືອພາຍ, ເຮືອໃບ ແລະ ເຮືອຈັກ.
3. ເກມເກົ່າ ເກມຈັບຄູ່ຮູບພາບທີ່ຄືກັນ: ລົດຖີບ, ເຮືອພາຍ ແລະ ເຮືອບິນ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກຮ້ອງເພງ ພາຍເຮືອ.
2. ຄູສະເໜີຊື່ເກມ.
3. ຄູສາທິດວິທີຫຼິ້ນເກມຈັບຄູ່ຮູບພາບ ແລະ ແນະນຳການເກັບມ້ຽນ.
4. ໃຫ້ເດັກຫຼິ້ນເກມໃໝ່, ເກມເກົ່າ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນເກມ.
6. ສຶກສາອົບຮົມເດັກ ໃຫ້ມີຄວາມອົດທົນ, ການແບ່ງປັນ, ການລໍຖ້າ ແລະ ການເກັບມ້ຽນເກມໃຫ້ຖືກບ່ອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ຄວາມຖືກຕ້ອງໃນການຈັບຄູ່ຮູບພາບທີ່ຄືກັນ.
2. ຄວາມສົນໃຈຂອງເດັກ.
3. ຄວາມສາມັກຄີກັບໝູ່ເພື່ອນ.

# ກິດຈະກຳການຫຼິ້ນຕາມມຸມ

## ຫົວຂໍ້: ມຸມເຄື່ອງຫຼິ້ນສຳຜັດ ແລະ ມຸມສິລະປະສ້າງສັນ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ຫຼິ້ນໃນມຸມເຄື່ອງຫຼິ້ນສຳຜັດຖືກຕ້ອງ ແລະ ມ່ວນຊື່ນ.
2. ຫຼິ້ນໃນມຸມສິລະປະສ້າງສັນຖືກຕ້ອງ ແລະ ມ່ວນຊື່ນ.

### II. ເນື້ອໃນຕົ້ນຕໍ

1. ການຫຼິ້ນໃນມຸມເຄື່ອງຫຼິ້ນສຳຜັດ ຕໍ່ໄມ້ບັ້ອກເປັນຮູບຊົງຕ່າງໆ.
2. ການຫຼິ້ນໃນມຸມສິລະປະສ້າງສັນ: ປັ້ນດິນເປັນຮູບເຮືອ ແລະ ໄມ້ພາຍເຮືອ.

### III. ສື່ການຮຽນ-ການສອນ

1. ບົດເພງ ຂັບລົດນ້ອຍ.
2. ໄມ້ບັ້ອກຮູບຕ່າງໆ.
3. ດິນປັ້ນຫຼາຍສີ, ຜ້າຢາງ ຫຼື ເຈ້ຍຮອງ, ສະບູ, ນ້ຳລ້າງມື ແລະ ຜ້າເຊັດມື.
4. ບັດເຂົ້າມຸມຫຼິ້ນ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກຮ້ອງເພງ ຂັບລົດນ້ອຍ.
2. ຄູແນະນຳວິທີຫຼິ້ນຕາມມຸມເຄື່ອງຫຼິ້ນສຳຜັດ, ມຸມສິລະປະສ້າງສັນ ແລະ ການເກັບມ້ຽນ.
3. ໃຫ້ເດັກເລືອກບັດເຂົ້າຫຼິ້ນຕາມມຸມ.
4. ໃຫ້ເດັກເຂົ້າຫຼິ້ນຕາມມຸມ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເວົ້າຄືນ ກ່ຽວກັບການເຂົ້າຫຼິ້ນຕາມມຸມ.
6. ສຶກສາອົບຮົມເດັກ ໃຫ້ມີຄວາມອົດທົນ, ການແບ່ງປັນ, ການລໍຖ້າ ແລະ ການເກັບມ້ຽນເຄື່ອງຫຼິ້ນໃຫ້ຖືກບ່ອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ຄວາມມີລະບຽບໃນການຫຼິ້ນ.
2. ຄວາມຖືກຕ້ອງໃນການຫຼິ້ນ.
3. ຄວາມສາມັກຄີໃນການຫຼິ້ນ.

# ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຮັດທ່າທາງເປັນຜູ້ນຳ, ຜູ້ຕາມ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ເຮັດທ່າທາງເປັນຜູ້ນຳ, ຜູ້ຕາມ ຢ່າງມ່ວນຊື່ນ.

### II. ເນື້ອໃນຕົ້ນຕໍ

ການເຮັດທ່າທາງເປັນຜູ້ນຳ, ຜູ້ຕາມ: ຂັບລົດລົດໃຫຍ່, ພາຍເຮືອ ແລະ ຂີ່ລົດຖີບ.

### III. ສື່ການຮຽນ-ການສອນ

1. ເຄື່ອງເຄາະຈັງຫວະ.
2. ການບໍລິຫານຫ້ອງ ແລະ ຫຼັງ (ປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກບໍລິຫານຫ້ອງ ແລະ ຫຼັງ.
2. ໃຫ້ເດັກຍ່າງເຢ່ງເຢ້ໃນບໍລິເວນຫ້ອງ.
3. ຄູສາທິດການເຮັດທ່າທາງເປັນຜູ້ນຳ, ຜູ້ຕາມ: ຂັບລົດໃຫຍ່, ພາຍເຮືອ ແລະ ຂີ່ລົດຖີບ.
4. ໃຫ້ເດັກປະຕິບັດຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເຮັດທ່າທາງ ໄກ່ອັນ.
6. ໃຫ້ເດັກເວົ້າຄືນກ່ຽວກັບການເຮັດທ່າທາງທີ່ເດັກໄດ້ເຮັດ.
7. ສຶກສາອົບຮົມເດັກ ກ່ຽວກັບຄວາມປອດໄພ ໃນເວລາເຮັດທ່າທາງເປັນຜູ້ນຳ, ຜູ້ຕາມ.

### V. ການວັດ ແລະ ປະເມີນຜົນ

ສັງເກດການເຮັດທ່າທາງເປັນຜູ້ນຳ, ຜູ້ຕາມ ຢ່າງມ່ວນຊື່ນ.

# ກິດຈະກຳວົງມົນ

## ຫົວຂໍ້: ເດີນທາງອາກາດ

## I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ຟັງເລົ່າເລື່ອງດ້ວຍຄວາມມ່ວນຊື່ນ.
2. ບອກພາຫະນະທີ່ໃຊ້ໃນການເດີນທາງອາກາດ.
3. ປຽບທຽບນ້ອຍ ແລະ ໃຫຍ່.

## II. ເນື້ອໃນຕົ້ນຕໍ

1. ການຟັງເລົ່າເລື່ອງ ໄປທ່ຽວຫຼວງພະບາງ.
2. ພາຫະນະທີ່ໃຊ້ໃນການເດີນທາງອາກາດ: ເຮືອບິນ.
3. ການປຽບທຽບຮູບພາບເຮືອບິນນ້ອຍ ແລະ ໃຫຍ່.

## III. ສື່ການຮຽນ-ການສອນ

1. ຮູບພາບປະກອບ ເລື່ອງ ໄປທ່ຽວຫຼວງພະບາງ (ປຶ້ມຄູ່ມືຄູ).
2. ຮູບພາບ: ເຮືອບິນນ້ອຍ ແລະ ເຮືອບິນໃຫຍ່.

## IV. ກິດຈະກຳການຮຽນ-ການສອນ

1. ຄູສົນທະນາກັບເດັກກ່ຽວກັບການເດີນທາງທາງອາກາດ.
2. ຄູເລົ່າເລື່ອງປະກອບລະຄອນເຈ້ຍເລື່ອງ ໄປທ່ຽວຫຼວງພະບາງ ແລະ ສົນທະນາກັບເດັກກ່ຽວກັບເນື້ອໃນບົດເລື່ອງ.
3. ໃຫ້ເດັກສັງເກດຮູບພາບ, ຄູສົນທະນາກັບເດັກກ່ຽວກັບພາຫະນະທີ່ໃຊ້ໃນການເດີນທາງອາກາດ ແລະ ເດັກບອກພາຫະນະທີ່ໃຊ້ໃນການເດີນທາງ ທາງອາກາດ.
4. ໃຫ້ເດັກປຽບທຽບຮູບພາບເຮືອບິນນ້ອຍ, ໃຫຍ່.
5. ໃຫ້ເດັກເວົ້າຄືນກ່ຽວກັບຊື່ພາຫະນະທີ່ໃຊ້ເດີນທາງອາກາດ ແລະ ປຽບທຽບນ້ອຍ, ໃຫຍ່.
6. ສຶກສາອົບຮົມເດັກ ກ່ຽວກັບການປະຕິບັດຕົນໃນການເດີນທາງອາກາດ.

## V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ການຟັງເລົ່າເລື່ອງ ດ້ວຍຄວາມມ່ວນຊື່ນ.
2. ການບອກພາຫະນະທີ່ໃຊ້ໃນການເດີນທາງອາກາດ.
3. ການປຽບທຽບນ້ອຍ, ໃຫຍ່.

# ກິດຈະກຳສິລະປະສ້າງສັນ

## ຫົວຂໍ້: ພັບເຈ້ຍ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດພັບເຈ້ຍເປັນຮູບຈະຫຼວດຖືກຕ້ອງ.

### II. ເນື້ອໃນຕົ້ນຕໍ

ການພັບເຈ້ຍເປັນຮູບຈະຫຼວດ.

### III. ສື່ການຮຽນ-ການສອນ

ເຈ້ຍສຳລັບພັບ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກຕົບມືໄປທາງເບື້ອງຊ້າຍ ແລະ ເບື້ອງຂວາ.
2. ຄູແນະນຳ, ສາທິດການພັບເຈ້ຍເປັນຮູບຈະຫຼວດ ແລະ ການເກັບມ້ຽນ.
3. ໃຫ້ເດັກປະຕິບັດຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
4. ໃຫ້ເດັກນຳສະເໜີຜົນງານ.
5. ສຶກສາອົບຮົມເດັກ ໃຫ້ມີຄວາມອົດທົນ, ການຖິ້ມເຈ້ຍໃຫ້ຖືກບ່ອນ ແລະ ການເກັບມ້ຽນອຸປະກອນໄວ້ບ່ອນທີ່ກຳນົດ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ຄວາມຖືກຕ້ອງໃນການພັບເຈ້ຍເປັນຮູບຈະຫຼວດ.
2. ຄວາມເອົາໃຈໃສ່ຂອງເດັກ.

# ກິດຈະກຳການຫຼິ້ນກາງແຈ້ງ

## ຫົວຂໍ້: ແບບຫຼິ້ນ ປະຕິບັດໄຟອຳນາດ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດຫຼິ້ນແບບຫຼິ້ນປະດິດສ້າງ ປະຕິບັດໄຟອຳນາດ ຢ່າງມ່ວນຊື່ນ ແລະ ປອດໄພ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນແບບຫຼິ້ນປະດິດສ້າງ ປະຕິບັດໄຟອຳນາດ.

### III. ສື່ການຮຽນ-ການສອນ

1. ຮູບໄຟອຳນາດ (ໄຟແດງ, ເຫຼືອງ, ຂຽວ)
2. ເຄື່ອງເຄາະຈັງຫວະ.
3. ວິທີຫຼິ້ນ (ປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກຍ່າງ ແລະ ແລ່ນເປັນວົງມົນຕາມບາດເຄາະຊ້າ, ໄວ.
2. ຄູສາທິດວິທີຫຼິ້ນແບບຫຼິ້ນ ປະຕິບັດໄຟອຳນາດ.
3. ໃຫ້ເດັກຫຼິ້ນຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
4. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນແບບຫຼິ້ນ ປະຕິບັດໄຟອຳນາດ.
5. ສຶກສາອົບຮົມເດັກ ກ່ຽວກັບຄວາມປອດໄພ ໃນເວລາຫຼິ້ນ ປະຕິບັດໄຟອຳນາດ.

### V. ການວັດ ແລະ ປະເມີນຜົນ

ສັງເກດການຫຼິ້ນແບບຫຼິ້ນປະດິດສ້າງ ປະຕິບັດໄຟອຳນາດ ຢ່າງມ່ວນຊື່ນ ແລະ ປອດໄພ.

# ກິດຈະກຳເກມການສຶກສາ

## ຫົວຂໍ້: ເກມລຽນລຳດັບຮູບພາບ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ລຽນລຳດັບຮູບພາບ ແຕ່ນ້ອຍ ຫາ ໃຫຍ່ຖືກຕ້ອງ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນເກມລຽນລຳດັບຮູບພາບ ເຮືອບິນ ແຕ່ນ້ອຍ ຫາ ໃຫຍ່.

### III. ສື່ການຮຽນ-ການສອນ

1. ເກມລຽນລຳດັບຮູບພາບ ເຮືອບິນ ແຕ່ນ້ອຍ ຫາ ໃຫຍ່.
2. ເກມເກົ່າ ເກມຈັບຄູ່ຮູບພາບທີ່ຄືກັນ: ເຮືອພາຍ, ເຮືອຈັກ ແລະ ເຮືອໃບ.

### IV. ກິດຈະກຳການຮຽນ-ການສອນ

1. ຄູສົນທະນາກັບເດັກ ກ່ຽວກັບການເດີນທາງ ທາງອາກາດ.
2. ຄູສະເໜີຊື່ເກມ.
3. ຄູສາທິດວິທີຫຼິ້ນເກມລຽນລຳດັບຮູບພາບ ແລະ ແນະນຳເກັບມ້ຽນເກມ.
4. ໃຫ້ເດັກຫຼິ້ນເກມໃໝ່, ເກມເກົ່າ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນເກມ.
6. ສຶກສາອົບຮົມເດັກ ໃຫ້ມີຄວາມອົດທົນ, ການແບ່ງປັນ, ການລໍຖ້າ ແລະ ການເກັບມ້ຽນເກມ ໃຫ້ຖືກບ່ອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ຄວາມຖືກຕ້ອງໃນການລຽນລຳດັບຮູບພາບ ແຕ່ນ້ອຍ ຫາ ໃຫຍ່.
2. ຄວາມພະຍາຍາມຂອງເດັກ.
3. ຄວາມສາມັກຄີກັບໝູ່ເພື່ອນ.

# ກິດຈະກຳການຫຼິ້ນຕາມມຸມ

## ຫົວຂໍ້: ມຸມສິລະປະສ້າງສັນ ແລະ ມຸມບົດບາດສົມມຸດ

## I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ຫຼິ້ນໃນມຸມສິລະປະສ້າງສັນ ຢ່າງມ່ວນຊື່ນ.
2. ຫຼິ້ນໃນມຸມບົດບາດສົມມຸດ ຢ່າງມ່ວນຊື່ນ.

## II. ເນື້ອໃນຕົ້ນຕໍ

1. ການຫຼິ້ນໃນມຸມສິລະປະສ້າງສັນ: ພັບເຈ້ຍເປັນຮູບຈະຫຼວດ.
2. ການຫຼິ້ນໃນມຸມບົດບາດສົມມຸດ: ເປັນພໍ່, ແມ່ ຂັບລົດພາລູກໄປໂຮງຮຽນ.

## III. ສື່ການຮຽນ-ການສອນ

1. ບົດເພງ ສັດລ້ຽງ.
2. ເຈ້ຍສຳລັບພັບ.
3. ບັດເຂົ້າມຸມຫຼິ້ນ.

## IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກຮ້ອງເພງ ລ້ຽງສັດ.
2. ຄູແນະນຳວິທີຫຼິ້ນຕາມມຸມສິລະປະສ້າງສັນ, ມຸມບົດບາດສົມມຸດ ແລະ ການເກັບມ້ຽນ.
3. ໃຫ້ເດັກເລືອກບັດເຂົ້າຫຼິ້ນຕາມມຸມ.
4. ໃຫ້ເດັກເຂົ້າຫຼິ້ນຕາມມຸມ ແລະ ຄູຕິດຕາມຊ່ວຍເຫຼືອ.
5.ໃຫ້ເດັກເວົ້າຄືນກ່ຽວກັບການເຂົ້າຫຼິ້ນຕາມມຸມ.
6. ສຶກສາອົບຮົມເດັກ ໃຫ້ມີຄວາມອົດທົນ, ການແບ່ງປັນ, ການລໍຖ້າ ແລະ ການເກັບມ້ຽນເຄື່ອງຫຼິ້ນໃຫ້ຖືກບ່ອນ.

## V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ການຫຼິ້ນໃນມຸມສິລະປະສ້າງສັນ ຢ່າງມ່ວນຊື່ນ.
2. ການຫຼິ້ນໃນມຸມບົດບາດສົມມຸດ ຢ່າງມ່ວນຊື່ນ.

# ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຮັດທ່າທາງຕາມຂໍ້ຕົກລົງ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ເຮັດທ່າທາງຕາມຂໍ້ຕົກລົງຖືກຕ້ອງ ແລະ ມ່ວນຊື່ນ.

### II. ເນື້ອໃນຕົ້ນຕໍ

ການເຮັດທ່າທາງຕາມຂໍ້ຕົກລົງ: ເຄາະ 1 ບາດ ໃຫ້ແລ່ນເຂົ້າມຸມສີແດງ, ເຄາະ 2 ບາດ ໃຫ້ແລ່ນເຂົ້າມຸມສີເຫຼືອງ ແລະ ເຄາະ 3 ບາດ ໃຫ້ແລ່ນເຂົ້າມຸມສີຂຽວ.

### III. ສື່ການຮຽນ-ການສອນ

1. ເຄື່ອງເຄາະຈັງຫວະ.
2. ບັດສີແດງ, ສີເຫລືອງ ແລະ ສີຂຽວ.
3. ການບໍລິຫານມື (ປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກບໍລິຫານມື.
2. ໃຫ້ເດັກຍ່າງເປັນແຖວຊື່ ຕາມຫຼັງກັນ.
3. ຄູສາທິດການເຮັດທ່າທາງຕາມຂໍ້ຕົກລົງ: ເຄາະ 1 ບາດ ໃຫ້ແລ່ນເຂົ້າມຸມສີແດງ, ເຄາະ 2 ບາດ ໃຫ້ແລ່ນເຂົ້າມຸມສີເຫຼືອງ ແລະ ເຄາະ 3 ບາດ ໃຫ້ແລ່ນເຂົ້າມຸມສີຂຽວ.
4. ໃຫ້ເດັກປະຕິບັດຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນັ່ງລົງ, ຕົບມື ຮ້ອງເພງ.
6. ໃຫ້ເດັກເວົ້າຄືນກ່ຽວກັບການເຮັດທ່າທາງທີ່ເດັກໄດ້ເຮັດ.
7. ສຶກສາອົບຮົມເດັກ ກ່ຽວກັບຄວາມປອດໄພ ໃນເວລາເຮັດທ່າທາງຕາມຂໍ້ຕົກລົງ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ຄວາມກ້າຫານໃນການເຮັດທ່າທາງຕາມຂໍ້ຕົກລົງ.
2. ຄວາມເບີກບານຂອງເດັກ.
3. ຄວາມຖືກຕ້ອງໃນການປະຕິບັດຕາມຂໍ້ຕົກລົງ.

# ກິດຈະກຳວົງມົນ

## ຫົວຂໍ້: ໄຟອຳນາດ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ເລົ່າຄຳຄ່ອງ ໄຟອຳນາດ ປະກອບທ່າທາງ.
2. ບອກໄຟອຳນາດ.
3. ເວົ້າເປັນຄຳຕາມຮູບພາບ: ສີແດງ, ສີເຫຼືອງ, ສີຂຽວ, ໄຟອຳນາດ, ຢຸດ.

### II. ເນື້ອໃນຕົ້ນຕໍ

1. ການເລົ່າຄຳຄ່ອງ ໄຟອຳນາດ ປະກອບທ່າທາງ.
2. ໄຟອຳນາດ: ໄຟແດງຢຸດ, ໄຟເຫຼືອງກຽມຢຸດ ແລະ ໄຟຂຽວໄປໄດ້.
3. ການເວົ້າເປັນຄຳຕາມຮູບພາບວົງມົນ: ສີແດງ, ສີເຫຼືອງ, ສີຂຽວ, ໄຟອຳນາດ ແລະ ຢຸດ.

### III. ສື່ການຮຽນ-ການສອນ

1. ບົດຄຳຄ່ອງ ໄຟອຳນາດ (ປຶ້ມຄູ່ມືຄູ).
2. ຮູບພາບວົງມົນສີແດງ, ເຫຼືອງ, ຂຽວຂະໜາດເສັ້ນຜ່າສູນກາງ 20 ຊມ ມີກ້ານຈັບຍາວ 35 ຊມ.
3. ຮູບພາບວົງມົນ: ສີແດງ, ສີເຫຼືອງ, ສີຂຽວ, ໄຟອຳນາດ, ຢຸດ.

### IV. ກິດຈະກຳການຮຽນ-ການສອນ

1. ຄູສົນທະນາກັບເດັກ ກ່ຽວກັບການຂີ່ລົດໄປຕາມທາງທີ່ມີໄຟອຳນາດ.
2. ໃຫ້ເດັກເລົ່າຄຳຄ່ອງ ໄຟອຳນາດ ປະກອບທ່າທາງ ແລະ ຄູສົນທະນາກບເດັກ ກ່ຽວກັບເນື້ອໃນຄຳຄ່ອງ.
3. ໃຫ້ເດັກສັງເກດຮູບພາບໄຟອຳນາດດ້ວຍຮູບວົງມົນ (ໄຟອຳນາດ: ແດງ, ເຫຼືອງ, ຂຽວ) ແລະ ບອກໄຟອຳນາດ.
4. ໃຫ້ເດັກເວົ້າເປັນຄຳຕາມຮູບພາບວົງມົນ: ສີແດງ, ສີເຫຼືອ, ສີຂຽວ, ໄຟອຳນາດ, ຢຸດ.
5. ໃຫ້ເດັກເວົ້າຄືນກ່ຽວກັບ ໄຟອຳນາດ, ເລົ່າຄຳຄ່ອງ ແລະ ການເວົ້າເປັນຄຳຕາມຮູບພາບ.
6. ສຶກສາອົບຮົມເດັກ ກ່ຽວກັບການປະຕິບັດຕົນຕາມໄຟອຳນາດ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ການເລົ່າຄຳຄ່ອງ ໄຟອຳນາດ ປະກອບທ່າທາງ.
2. ການບອກໄຟອຳນາດ.
3. ການເວົ້າເປັນຄຳຕາມຮູບພາບ: ສີແດງ, ສີເຫຼືອ, ສີຂຽວ, ໄຟອຳນາດ, ຢຸດ.

# ກິດຈະກຳສິລະປະສ້າງສັນ

## ຫົວຂໍ້: ແຕ້ມຮູບພາບ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດແຕ້ມຮູບພາບຕົບລົດໃຫຍ່ ຕາມແບບຖືກຕ້ອງ.

### II. ເນື້ອໃນຕົ້ນຕໍ

ການແຕ້ມຮູບພາບຕົບລົດໃຫຍ່ ຕາມແບບ.

### III. ສື່ການຮຽນ-ການສອນ

1. ສໍດຳ ຫຼື ສໍສີໄມ້ ແລະ ເຈ້ຍ.
2. ຮູບພາບຕົບລົດໃຫຍ່.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກເຮັດທ່າທາງແຕ້ມຮູບວົງມົນຢູ່ກາງຫາວ.
2. ຄູແນະນຳ, ສາທິດການແຕ້ມຮູບຕົບລົດໃຫຍ່ຕາມແບບ ແລະ ການເກັບມ້ຽນ.
3. ໃຫ້ເດັກປະຕິບັດຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນຳສະເໜີຜົນງານ.
6. ສຶກສາອົບຮົມເດັກ ໃຫ້ມີຄວາມອົດທົນ, ບໍ່ຍຶດກັນ ແລະ ການເກັບມ້ຽນອຸປະກອນໄວ້ບ່ອນທີ່ກຳນົດ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ຄວາມຖືກຕ້ອງໃນການແຕ້ມຮູບພາບຕົບລົດໃຫຍ່ ຕາມແບບ.
2. ຄວາມເອົາໃຈໃສ່ຂອງເດັກ.

# ກິດຈະກຳການຫຼິ້ນກາງແຈ້ງ

## ຫົວຂໍ້: ຫຼິ້ນນໍ້າ, ຫຼິ້ນຊາຍ

## I. ຈຸດປະສົງ

ເພື່ອໃຫ້ເດັກສາມາດຫຼິ້ນນໍ້າ, ຫຼິ້ນຊາຍ ຢ່າງມ່ວນຊື່ນ ແລະ ປອດໄພ.

## II. ເນື້ອໃນຕົ້ນຕໍ

ການຫຼິ້ນນໍ້າ, ຫຼິ້ນຊາຍ: ຣ່າຍນໍ້າໃສ່ກະປ໋ອງ, ພິມຝາມືໃສ່ອ່າງຊາຍ ແລະ ຜອງຊາຍ.

## III. ສື່ການຮຽນ-ການສອນ

ຄຸນໍ້າ, ຈອກຢາງ, ກະປ໋ອງນ້ອຍ, ໃຫຍ່ ທີ່ມີຂະໜາດຕ່າງກັນ, ອ່າງຊາຍ ຫຼື ກະໂປະໝາກພ້າວ, ດິນຊາຍ ແຫ້ງ ແລະ ດິນຊາຍປຽກ.

## IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກກຳມື ແລະ ແບມື.
2. ຄູແນະນຳວິທີຫຼິ້ນ ຣ່າຍນໍ້າໃສ່ກະປ໋ອງ, ພິມຝາມືໃສ່ອ່າງຊາຍ ແລະ ຜອງຊາຍ.
3. ໃຫ້ເດັກຫຼິ້ນຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
4. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນນໍ້າ, ຫຼິ້ນຊາຍ.
5. ສຶກສາອົບຮົມເດັກ ກ່ຽວກັບຄວາມປອດໄພ, ລະມັດລະວັງໃນເວລາຫຼິ້ນນໍ້າ, ຫຼິ້ນຊາຍ.

## V. ການວັດ ແລະ ປະເມີນຜົນ

ສັງເກດ ການຫຼິ້ນນໍ້າ, ຫຼິ້ນຊາຍ ຢ່າງມ່ວນຊື່ນ ແລະ ປອດໄພ.

# ກິດຈະກຳເກມການສຶກສາ

## ຫົວຂໍ້: ເກມຈັດໝວດໝູ່ສີ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ນຳເອົາຮູບພາບທີ່ມີສີຄືກັນ ມາຈັດເປັນໝວດຖືກຕ້ອງ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນເກມຈັດໝວດຮູບຊົງເລຂາຄະນິດທີ່ມີສີຄືກັນ:  ຮູບວົງມົນສີແດງ, ສາມແຈສີຟ້າ ແລະ ສີ່ແຈສີເຫຼືອງ.

### III. ສື່ການຮຽນ-ການສອນ

1. ເກມຈັດໝວດໝູ່ຮູບຊົງເລຂາຄະນິດທີ່ມີສີຄືກັນ: ຮູບວົງມົນສີແດງ, ສາມແຈສີຟ້າ ແລະ ສີ່ແຈສີເຫຼືອງ.
2. ເກມເກົ່າ ເກມລຽນລຳດັບຮູບພາບ ເຮືອບິນແຕ່ນ້ອຍຫາໃຫຍ່.
3. ບົດເພງ ອັບລົດນ້ອຍ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກຮ້ອງເພງ  ອັບລົດນ້ອຍ.
2. ຄູສະເໜີຊື່ເກມ.
3. ຄູສາທິດວິທີຫຼິ້ນເກມຈັດໝວດໝູ່ ແລະ ແນະນຳການເກັບມ້ຽນເກມ.
4. ໃຫ້ເດັກຫຼິ້ນເກມໃໝ່, ເກມເກົ່າ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນເກມ.
6. ສຶກສາອົບຮົມເດັກ ໃຫ້ມີຄວາມອົດທົນ,  ການແບ່ງປັນ, ການລໍຖ້າ ແລະ ການເກັບມ້ຽນເກມໃຫ້ຖືກບ່ອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ຄວາມຖືກຕ້ອງຂອງການຈັດໝວດໝູ່ຮູບຊົງເລຂາຄະນິດຕາມສີ.
2. ຄວາມພະຍາຍາມຂອງເດັກ.
3. ຄວາມສາມັກຄີກັບໝູ່ເພື່ອນ.

# ກິດຈະກຳການຫຼິ້ນຕາມມຸມ

## ຫົວຂໍ້: ມຸມເຄື່ອງຫຼິ້ນສຳຜັດ ແລະ ມຸມເກມການສຶກສາ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ຫຼິ້ນໃນມຸມເຄື່ອງຫຼິ້ນສຳຜັດ ຢ່າງມ່ວນຊື່ນ.
2. ຫຼິ້ນໃນມຸມເກມການສຶກສາ ຢ່າງມ່ວນຊື່ນ.

### II. ເນື້ອໃນຕົ້ນຕໍ

1. ການຫຼິ້ນໃນມຸມເຄື່ອງຫຼິ້ນສຳຜັດ: ແຕ້ມຮູບຕາມໃຈໃນອ່າງຊາຍ ແລະ ຫຼິ້ນເຄື່ອງດົນຕີ.
2. ການຫຼິ້ນໃນມຸມເກມການສຶກສາ: ເກມຈັດໝວດຮູບຊົງເລຂາຄະນິດທີ່ມີສີຄືກັນ: ຮູບວົງມົນສີແດງ, ສາມແຈສີຟ້າ ແລະ ສີ່ແຈສີເຫຼືອງ.

### III. ສື່ການຮຽນ-ການສອນ

1. ບົດຄຳຄ່ອງ ໄຟອຳນາດ.
2. ອ່າງຊາຍ, ກອງ ແລະ ກະແຊັກ.
3. ສະບູ, ຜ້າເຊັດມື ແລະ ນ້ຳລ້າງມື.
4. ບັດເຂົ້າມຸມຫຼິ້ນ.
5. ເກມຈັດໝວດຮູບຊົງເລຂາຄະນິດທີ່ມີສີຄືກັນ: ຮູບວົງມົນສີແດງ, ສາມແຈສີຟ້າ ແລະ ສີ່ແຈສີເຫຼືອງ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກເລົ່າຄຳຄ່ອງ ໄຟອຳນາດ.
2. ຄູແນະນຳວິທີຫຼິ້ນຕາມມຸມເຄື່ອງຫຼິ້ນສຳຜັດ, ມຸມເກມການສຶກສາ ແລະ ການເກັບມ້ຽນ.
3. ໃຫ້ເດັກເລືອກບັດເຂົ້າຫຼິ້ນຕາມມຸມ.
4. ໃຫ້ເດັກເຂົ້າຫຼິ້ນຕາມມຸມ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເວົ້າຄືນກ່ຽວກັບການເຂົ້າຫຼິ້ນຕາມມຸມ.
6. ສຶກສາອົບຮົມເດັກ ໃຫ້ມີຄວາມອົດທົນ, ການແບ່ງປັນ, ການລໍຖ້າ ແລະ ການເກັບມ້ຽນເຄື່ອງຫຼິ້ນໃຫ້ຖືກບ່ອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ການຫຼິ້ນໃນມຸມເຄື່ອງຫຼິ້ນສຳຜັດ ຢ່າງມ່ວນຊື່ນ.
2. ການຫຼິ້ນໃນມຸມເກມການສຶກສາ ຢ່າງມ່ວນຊື່ນ.

# ຈຸດປະສົງສຳລັບອາທິດທີ 2

## ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ

ເພື່ອໃຫ້ເດັກສາມາດ:

1. ເຮັດທ່າທາງຕາມຈິນຕະນາການປະກອບເລື່ອງທີ່ຄູເລົ່າຍ່າງ, ຂັບລົດຈັກ ແລະ ຂັບລົດໃຫຍ່ຢ່າງມ່ວນຊື່ນ.
2. ເຮັດທ່າທາງຕາມຈິນຕະນາການປະກອບເນື້ອໃນຄຳຄ່ອງ ໄຟອຳນາດ ຢ່າງມ່ວນຊື່ນ.
3. ເຮັດທ່າທາງຕາມຄຳສັ່ງ ພາຍເຮືອ ແລະ ຍູ້ລໍ້ ຢ່າງມ່ວນຊື່ນ.
4. ເຮັດທ່າທາງຕາມຂໍ້ຕົກລົງ ຕົບມື 1 ບາດ ເຮັດທ່າທາງຂີ່ລົດຖີບ, ຕົບມື 2 ບາດ ເຮັດທ່າທາງຂັບລົດໃຫຍ່ ແລະ ຕົບມື 3 ບາດ ເຮັດທ່າທາງເຮືອບິນໆ ຖືກຕ້ອງ ແລະ ມ່ວນຊື່ນ.
5. ເຮັດທ່າທາງຕາມຈັງຫວະເພງ ພາຍເຮືອ ຢ່າງມ່ວນຊື່ນ.

## ກິດຈະກຳວົງມົນ

ເພື່ອໃຫ້ເດັກສາມາດ:

1. ຮ້ອງເພງ ຂ້າມຖະໜົນ, ພາຍເຮືອ ປະກອບທ່າທາງ
2. ບອກການຍ່າງຕາມຖະໜົນດ້ວຍຄວາມປອດໄພ.
3. ອ່ານອອກສຽງພະຍັນຊະນະ ລ, ຟ.
4. ບອກການປະຕິບັດຕົນໃນເວລາຂີ່ລົດໃຫຍ່, ລົດຈັກ, ເດີນທາງນໍ້າ ແລະ ເຮືອບິນ.
5. ປະກອບຮູບຊົງເລຂາຄະນິດ: ຮູບ ສີ່ແຈ, ຈະຕຸລັດ ແລະ ວົງມົນ ເປັນຮູບລົດ.
6. ວາງຮູບຈະຕຸລັດນ້ອຍ ເທິງຮູບຈະຕຸລັດໃຫຍ່ ໂດຍໃຫ້ແຈຂອງຮູບນ້ອຍຢູ່ເຄິ່ງກາງຂອງຂ້າງຮູບໃຫຍ່
7. ບອກການປະຕິບັດຕົນຕາມໄຟອຳນາດ.

## ກິດຈະກຳສິລະປະສ້າງສັນ

ເພື່ອໃຫ້ເດັກສາມາດ:

1. ຂີດເສັ້ນຫົວຕົວ ງ, ນ ຕາມຮອຍຈໍ້າ ແຕ່ຂວາ ຫາ ຊ້າຍຖືກຕ້ອງ.
2. ຮ້ອຍໝາກປັດສະຫຼັບສີແດງ, ຟ້າ, ຂຽວຈຳນວນ 4 ຖືກຕ້ອງ.
3. ຂີດຂຽນຕາມຮອຍຈໍ້າຕົວ ເລກ 9 ຖືກຕ້ອງ.
4. ພັບເຈ້ຍເປັນຮູບຈະຫຼວດຖືກຕ້ອງ.

## ກິດຈະກຳການຫຼິ້ນກາງແຈ້ງ

ເພື່ອໃຫ້ເດັກສາມາດ:

1. ຫຼິ້ນແບບຫຼິ້ນພື້ນເມືອງ ເຊື່ອງຜ້າ ຢ່າງມ່ວນຊື່ນ ແລະ ປອດໄພ.
2. ຫຼິ້ນເຄື່ອງຫຼິ້ນໃນເດີ່ນ: ໂອ້ນຊາ, ຕະລູດ, ກົງລໍ້, ເຄື່ອງດ່າງ ຢ່າງມ່ວນຊື່ນ ແລະ ປອດໄພ
3. ຫຼິ້ນແບບຫຼິ້ນປະດິດສ້າງ ປະຕິບັດໄຟອຳນາດ, ເຕັ້ນກົບ, ພາຍເຮືອບົກ ຢ່າງມ່ວນຊື່ນ ແລະ ປອດໄພ.

## ກິດຈະກຳເກມການສຶກສາ

ເພື່ອໃຫ້ເດັກສາມາດ:

1. ນຳເອົາຮູບພາບທີ່ຄືກັນມາຈັບຄູ່ກັນ ຮູບພາບ: ລົດຖີບ, ລົດຈັກ, ລົດກະບະ ແລະ ລົດຕູ້ຖືກຕ້ອງ.
2. ຕໍ່ຮູບພາບຕາມແບບ ຮູບພາບ: ຄົນຂີ່ລົດໂດຍສານ, ຮູບພາບເຮືອບິນ, ຮູບພາບໄຟອຳນາດຖືກຕ້ອງ.
3. ນຳຮູບພາບມາຈັບຄູ່ກັບພະຍັນຊະນະ ຮູບພາບ: ເຮືອ ຮ, ລົດ ລ, ໄຟແດງ ຟ ຖືກຕ້ອງ.

## ກິດຈະກຳການຫຼິ້ນຕາມມຸມ

ເພື່ອໃຫ້ເດັກສາມາດ:

1. ຫຼິ້ນໃນມຸມອ່ານຢ່າງມ່ວນຊື່ນ.
2. ຫຼິ້ນໃນມຸມບົດບາດສົມມຸດຢ່າງມ່ວນຊື່ນ.
3. ຫຼິ້ນໃນມຸມເຄື່ອງຫຼິ້ນສຳຜັດຢ່າງມ່ວນຊື່ນ.
4. ຫຼິ້ນໃນມຸມສິລະປະສ້າງສັນຢ່າງມ່ວນຊື່ນ.
5. ຫຼິ້ນໃນມຸມເກມການສຶກສາຢ່າງມ່ວນຊື່ນ.

# ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຮັດທ່າທາງຕາມຈິນຕະນາການ

## I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ເຮັດທ່າທາງຕາມຈິນຕະນາການປະກອບເລື່ອງທີ່ຄູເລົ່າ ຢ່າງມ່ວນຊື່ນ.

## II. ເນື້ອໃນຕົ້ນຕໍ

ການເຮັດທ່າທາງຕາມຈິນຕະນາການບປະກອບເລື່ອງທີ່ຄູເລົ່າ: ຍ່າງ, ຂັບລົດຈັກ ແລະ ຂັບລົດໃຫຍ່.

## III. ສື່ການຮຽນ-ການສອນ

1. ເຄື່ອງເຄາະຈັງຫວະ.
2. ການບໍລິຫານແຂວ (ປຶ້ມຄູ່ມືຄູ).

## IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກບໍລິຫານແຂວ.
2. ໃຫ້ເດັກຍ່າງວາແຂນຕາມເສັ້ນຊື່ ທີ່ຄູກຳນົດ.
3. ຄູສາທິດການເຮັດທ່າທາງຕາມຈິນຕະນາການປະກອບເລື່ອງທີ່ຄູເລົ່າ: ຍ່າງ, ຂັບລົດຈັກ ແລະ ຂັບລົດໃຫຍ່.
4. ໃຫ້ເດັກປະຕິບັດຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກຫາຍໃຈເຂົ້າ, ອອກຊ້າໆ.
6. ໃຫ້ເດັກເວົ້າຄືນກ່ຽວກັບການເຮັດທ່າທາງທີ່ເດັກໄດ້ເຮັດ.
7. ສຶກສາອົບຮົມເດັກ ກ່ຽວກັບມາລະຍາດ ໃນເວລາເຮັດທ່າທາງປະກອບເລື່ອງທີ່ຄູເລົ່າ.

## V. ການວັດ ແລະ ປະເມີນຜົນ

ສັງເກດ ການເຮັດທ່າທາງຕາມຈິນຕະນາການປະກອບເລື່ອງທີ່ຄູເລົ່າ ຢ່າງມ່ວນຊື່ນ.

# ກິດຈະກຳວົງມົນ

## ຫົວຂໍ້: ຍ່າງໃຫ້ປອດໄພ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ຮ້ອງເພງ ຂ້າມຖະໜົນ ປະກອບທ່າທາງ.
2. ບອກການຍ່າງຂ້າມຖະໜົນທີ່ປອດໄພ.

### II. ເນື້ອໃນຕົ້ນຕໍ

1. ການຮ້ອງເພງ ຂ້າມຖະໜົນ ປະກອບທ່າທາງ.
2. ການຍ່າງທີ່ປອດໄພ: ກ່ອນຂ້າມທາງຕ້ອງຫຼຽວຊ້າຍ, ຫຼຽວຂວາ, ຂ້າມທາງມ້າລາຍ ແລະ ຍ່າງແຄມທາງກ້ຳຂວາມື.

### III. ສື່ການຮຽນ-ການສອນ

1. ຮູບພາບ: ຄົນຍ່າງຂ້າມທາງມ້າລາຍ.
2. ບົດເພງ ຂ້າມຖະໜົນ (ປື້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ຄູສົນທະນາກັບເດັກກ່ຽວກັບການເດີນທາງມາໂຮງຮຽນ.
2. ໃຫ້ເດັກຮ້ອງເພງ ຂ້າມຖະໜົນ ປະກອບທ່າທາງ ແລະ ຄູສົນທະນາກັບເດັກ ກ່ຽວກັບເນື້ອໃນເພງ.
3. ໃຫ້ເດັກບອກການຍ່າງຂ້າມຖະໜົນທີ່ຖືກຕ້ອງ ແລະ ປອດໄພ.
4. ໃຫ້ເດັກເວົ້າຄືນກ່ຽວກັບການຂ້າມຖະໜົນທີ່ປອດໄພ ແລະ ຮ້ອງເພງ.
5. ສຶກສາອົບຮົມເດັກ ກ່ຽວກັບການຍ່າງຕາມທາງບໍ່ຢອກກັນ ແລະ ບໍ່ຍູ້ກັນເວລາຍ່າງຕາມທາງ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ການຮ້ອງເພງ ຂ້າມຖະໜົນ ປະກອບທ່າທາງ.
2. ການບອກການຍ່າງຂ້າມຖະໜົນທີ່ປອດໄພ.

# ກິດຈະກຳສິລະປະສ້າງສັນ

## ຫົວຂໍ້: ຂີດເສັ້ນ

## I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ຂີດເສັ້ນຫົວຕົວ ໆ ຕາມຮອຍຈ້ຳ ແຕ່ຂວາຫາຊ້າຍຖືກຕ້ອງ.

## II. ເນື້ອໃນຕົ້ນຕໍ

ການຂີດເສັ້ນຫົວຕົວ ໆ ຕາມຮອຍຈ້ຳ ແຕ່ຂວາຫາຊ້າຍ.

## III. ສື່ການຮຽນ-ການສອນ

1. ສໍດຳ.
2. ປື້ມບົດເຝິກຫັດພາສາລາວ ເຫຼັ້ມທີ 2 ຫຼື ເຈ້ຍແບບຂີດເສັ້ນຫົວຕົວ ໆ ຕາມຮອຍຈ້ຳ ແຕ່ຂວາຫາຊ້າຍ.

## IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກເຮັດທ່າທາງຂີດເສັ້ນ ຢູ່ກາງຫາວ.
2. ຄູແນະນຳ, ສາທິດວິທີການຂີດເສັ້ນຫົວຕົວ ໆ ຕາມຮອຍຈ້ຳ ແຕ່ຂວາຫາຊ້າຍ ແລະ ການເກັບມ້ຽນ.
3. ໃຫ້ເດັກປະຕິບັດຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
4. ໃຫ້ເດັກນຳສະເໜີຜົນງານ.
5. ສຶກສາອົບຮົມເດັກ ໃຫ້ມີຄວາມອົດທົນ, ບໍ່ຂີດກັນ ແລະ ການເກັບມ້ຽນອຸປະກອນ.

## V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ຄວາມຖືກຕ້ອງໃນການຂີດເສັ້ນຫົວຕົວ ໆ ຕາມຮອຍຈ້ຳ ແຕ່ຂວາຫາຊ້າຍ.
2. ຄວາມເອົາໃຈໃສ່ຂອງເດັກ.

# ກິດຈະກຳການຫຼິ້ນກາງແຈ້ງ

## ຫົວຂໍ້: ແບບຫຼິ້ນ ເຊື່ອງຜ້າ

## I. ຈຸດປະສົງ

ເພື່ອໃຫ້ເດັກສາມາດຫຼິ້ນແບບຫຼິ້ນພື້ນເມືອງ ເຊື່ອງຜ້າ ຢ່າງມ່ວນຊື່ນ ແລະ ປອດໄພ.

## II. ເນື້ອໃນຕົ້ນຕໍ

ການຫຼິ້ນແບບຫຼິ້ນພື້ນເມືອງ ເຊື່ອງຜ້າ.

## III. ສື່ການຮຽນ-ການສອນ

1. ຜ້າ 1 ຜືນ.
2. ບົດຄຳຄ່ອງ ເຊື່ອງຜ້າ ແລະ ວິທີຫຼິ້ນ (ປື້ມຄູ່ມືຄູ).

## IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກຢືນເປັນຮູບວົງມົນ ຄ້ຳແອວເບັດໄປທາງເບື້ອງຊ້າຍ ແລະ ທາງເບື້ອງຂວາ.
2. ຄູແນະນຳ ແລະ ສາທິດວິທີຫຼິ້ນແບບຫຼິ້ນ ເຊື່ອງຜ້າ.
3. ໃຫ້ເດັກຫຼິ້ນຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
4. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນແບບຫຼິ້ນ ເຊື່ອງຜ້າ.
5. ສຶກສາອົບຮົມເດັກ ໃຫ້ມີຄວາມປອດໄພ ໃນເວລາຫຼິ້ນແບບຫຼິ້ນ ເຊື່ອງຜ້າ.

## V. ການວັດ ແລະ ປະເມີນຜົນ

ສັງເກດການຫຼິ້ນແບບຫຼິ້ນພື້ນເມືອງ ເຊື່ອງຜ້າ ຢ່າງມ່ວນຊື່ນ ແລະ ປອດໄພ.

# ກິດຈະກຳເກມການສຶກສາ

## ຫົວຂໍ້: ເກມຈັບຄູ່ຮູບພາບທີ່ຄືກັນ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ນຳເອົາຮູບພາບທີ່ຄືກັນ ມາຈັບຄູ່ກັນຖືກຕ້ອງ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນເກມຈັບຄູ່ຮູບພາບທີ່ຄືກັນ: ລົດຖີບ, ລົດຈັກ, ລົດກະບະ ແລະ ລົດຕູ້.

### III. ສື່ການຮຽນ-ການສອນ

1. ເກມຈັບຄູ່ຮູບພາບທີ່ຄືກັນ: ລົດຖີບ, ລົດຈັກ, ລົດກະບະ ແລະ ລົດຕູ້.
2. ເກມເກົ່າ ເກມຈັດໝວດຮູບເລຂາຄະນິດທີ່ມີສີຄືກັນ: ຮູບວົງມົນ ສີແດງ, ສາມແຈສີຟ້າ ແລະ ສີ່ແຈສີເຫຼືອງ.

### IV. ກິດຈະກຳການຮຽນ-ການສອນ

1. ຄູສົນທະນາກັບເດັກ ກ່ຽວກັບລົດທີ່ເດັກເຄີຍເຫັນ.
2. ຄູສະເໜີຊື່ເກມ.
3. ຄູສາທິດວິທີຫຼິ້ນເກມຈັບຄູ່ຮູບພາບ ແລະ ແນະນຳເກັບມ້ຽນເກມ.
4. ໃຫ້ເດັກຫຼິ້ນເກມໃໝ່, ເກມເກົ່າ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນເກມ.
6. ສຶກສາອົບຮົມເດັກ ໃຫ້ມີຄວາມອົດທົນ, ການແບ່ງປັນ, ການລໍຖ້າ ແລະ ການເກັບມ້ຽນເກມໃຫ້ຖືກບ່ອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ຄວາມຖືກຕ້ອງໃນການຈັບຄູ່ຮູບພາບທີ່ຄືກັນ.
2. ຄວາມເອົາໃຈໃສ່ ແລະ ຄວາມສາມັກຄີກັບໝູ່ເພື່ອນ.

# ກິດຈະກຳການຫຼິ້ນຕາມມຸມ

## ຫົວຂໍ້: ມຸມອ່ານ ແລະ ມຸມບົດບາດສົມມຸດ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ຫຼິ້ນໃນມຸມອ່ານ ຢ່າງມ່ວນຊື່ນ.
2. ຫຼິ້ນໃນມຸມບົດບາດສົມມຸດ ຢ່າງມ່ວນຊື່ນ.

### II. ເນື້ອໃນຕົ້ນຕໍ

1. ການຫຼິ້ນໃນມຸມອ່ານ: ເປີດປຶ້ມ ແລະ ອ່ານຮູບພາບໃນປຶ້ມ.
2. ການຫຼິ້ນໃນມຸມບົດບາດສົມມຸດ: ຫຼິ້ນເປັນພໍ່ຄ້າ, ແມ່ຄ້າ ຂາຍ ແລະ ຊື້ລົດ.

### III. ສື່ການຮຽນ-ການສອນ

1. ບົດເພງ ຂ້າມຖະໜົນ.
2. ເຄື່ອງຫຼິ້ນ: ລົດຖີບ, ລົດໃຫຍ່, ລົດຈັກ ແລະ ລົດຕູ້.
3. ປຶ້ມຮູບພາບ ລົດ, ເຮືອ ແລະ ເຮືອບິນ.
4. ບັດເຂົ້າມຸມຫຼິ້ນ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກຮ້ອງເພງ ຂ້າມຖະໜົນ.
2. ຄູແນະນຳວິທີຫຼິ້ນຕາມມຸມອ່ານ, ມຸມບົດບາດສົມມຸດ ແລະ ການເກັບມ້ຽນ.
3. ໃຫ້ເດັກເລືອກບັດເຂົ້າຫຼິ້ນຕາມມຸມ.
4. ໃຫ້ເດັກເຂົ້າຫຼິ້ນຕາມມຸມ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເວົ້າຄືນກ່ຽວກັບການເຂົ້າຫຼິ້ນຕາມມຸມ.
6. ສຶກສາອົບຮົມເດັກ ໃຫ້ມີຄວາມອົດທົນ, ການແບ່ງປັນ, ການລໍຖ້າ ແລະ ການເກັບມ້ຽນເຄື່ອງຫຼິ້ນໃຫ້ຖືກບ່ອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ການຫຼິ້ນໃນມຸມອ່ານ ຢ່າງມ່ວນຊື່ນ.
2. ການຫຼິ້ນໃນມຸມບົດບາດສົມມຸດ ຢ່າງມ່ວນຊື່ນ.

# ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຮັດທ່າທາງຕາມຈິນຕະນາການ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ເຮັດທ່າທາງຕາມຈິນຕະນາການປະກອບເນື້ອໃນຄຳຄ່ອງ ຢ່າງມ່ວນຊື່ນ.

### II. ເນື້ອໃນຕົ້ນຕໍ

ການເຮັດທ່າທາງຕາມຈິນຕະນາການປະກອບເນື້ອໃນຄຳຄ່ອງ ໄຟອຳນາດ.

### III. ສື່ການຮຽນ-ການສອນ

1. ເຄື່ອງເຄາະຈັງຫວະ.
2. ບົດຄຳຄ່ອງ  ໄຟອຳນາດ.
3. ການບໍລິຫານຂາ (ປື້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກບໍລິຫານຂາ.
2. ໃຫ້ເດັກເຕັ້ນຂາດຽວ ຕາມຫຼັງກັນ.
3. ຄູແນະນຳການເຮັດທ່າທາງຕາມຈິນຕະນາການປະກອບເນື້ອໃນຄຳຄ່ອງ  ໄຟຈອຳນາດ.
4. ໃຫ້ເດັກປະຕິບັດຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເຮັດທ່າທາງເຮືອບິນໆຊ້າໆ.
6. ໃຫ້ເດັກເວົ້າຄືນກ່ຽວກັບການເຮັດທ່າທາງທີ່ເດັກໄດ້ເຮັດ.
7. ສຶກສາອົບຮົມເດັກ ກ່ຽວກັບມາລະຍາດ ໃນເວລາເຮັດທ່າທາງຕາມຈິນຕະນາການປະກອບເນື້ອໃນຄຳຄ່ອງ.

### V. ການວັດ ແລະ ປະເມີນຜົນ

ສັງເກດການເຮັດທ່າທາງຕາມຈິນຕະນາການປະກອບເນື້ອໃນຄຳຄ່ອງ ຢ່າງມ່ວນຊື່ນ.

# ກິດຈະກຳວົງມົນ

## ຫົວຂໍ້: ເດີນທາງປົກ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ບອກການປະຕິບັດຕົນໃນເວລາຂີ່ລົດໃຫຍ່ ແລະ ລົດຈັກ.
2. ປະກອບຮູບເລຂາຄະນິດ: ຮູບສີ່ແຈ, ຈະຕຸລັດ ແລະ ວົງມົນເປັນຮູບລົດ.

### II. ເນື້ອໃນຕົ້ນຕໍ

1. ການປະຕິບັດຕົນໃນການຂີ່ລົດໃຫຍ່: ໃສ່ສາຍຮັດນິລະໄພ, ບໍ່ເດ່ແຂນ, ບໍ່ປ່ອນຫົວອອກນອກ, ບໍ່ຢອກກັນ ແລະ ຂີ່ລົດຈັກ: ໃສ່ໝວກກັນກະທົບ.
2. ການປະກອບຮູບເລຂາຄະນິດ: ຮູບສີ່ແຈ, ຈະຕຸລັດ, ວົງມົນເປັນຮູບລົດ.

### III. ສື່ການຮຽນ-ການສອນ

1. ຮູບພາບ: ຄົນຂີ່ລົດໃຫຍ່ ໃສ່ສາຍຮັດນິລະໄພ, ຄົນຂີ່ລົດຈັກໃສ່ໝວກກັນກະທົບ.
2. ບູ້ອກສີ່ແຈ, ວົງມົນ ແລະ ຈະຕຸລັດ ຫຼື ຮູບສີ່ແຈ, ຮູບຈະຕຸລັດ ແລະ ຮູບວົງມົນ.
3. ບົດເພງ ຂັບລົດນ້ອຍ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກຮ້ອງເພງ ຂັບລົດນ້ອຍ ປະກອບທ່າທາງ.
2. ໃຫ້ເດັກສັງເກດຮູບພາບ ແລະ ຄູສົນທະນາກັບເດັກກ່ຽວກັບການປະຕິບັດຕົນ ໃນການຂີ່ລົດໃຫຍ່ ແລະ ລົດຈັກ.
3. ໃຫ້ເດັກບອກການປະຕິບັດຕົນ ໃນການຂີ່ລົດໃຫຍ່ ແລະ ລົດຈັກ.
4. ໃຫ້ເດັກສັງເກດ ແລະ ປະກອບຮູບສີ່ແຈ, ຮູບຈະຕຸລັດ, ຮູບວົງມົນ ເປັນຮູບລົດ.
5. ໃຫ້ເດັກເວົ້າຄືນ ກ່ຽວກັບການປະຕິບັດຕົນໃນເວລາຂີ່ລົດໃຫຍ່ ແລະ ລົດຈັກ.
6. ສຶກສາອົບຮົມເດັກ ກ່ຽວກັບການປະຕິບັດຕົນ ໃນເວລາຂີ່ລົດໃຫຍ່ຕ້ອງຮັດສາຍຮັດນິລະໄພ ແລະ ຂີ່ລົດຈັກຕ້ອງໃສ່ໝວກກັນກະທົບ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ການບອກ ການປະຕິບັດຕົນໃນເວລາຂີ່ລົດໃຫຍ່ ແລະ ລົດຈັກ.
2. ການປະກອບຮູບເລຂາຄະນິດ: ຮູບສີ່ແຈ, ຈະຕຸລັດ ແລະ ວົງມົນເປັນຮູບລົດ.

# ກິດຈະກຳສິລະປະສ້າງສັນ

## ຫົວຂໍ້: ຮ້ອຍໝາກປັດ

## I. ຈຸດປະສົງ

ເພື່ອໃຫ້ເດັກສາມາດຮ້ອຍໝາກປັດສະຫຼັບສີແດງ, ຟ້າ ແລະ ຂຽວ ຕາມຈຳນວນ 4 ຖືກຕ້ອງ.

## II. ເນື້ອໃນຕົ້ນຕໍ

ການຮ້ອຍໝາກປັດສະຫຼັບສີແດງ, ຟ້າ ແລະ ຂຽວ ຕາມຈຳນວນ 4.

## III. ສື່ການຮຽນ-ການສອນ

1. ໝາກປັດສີແດງ, ຟ້າ ແລະ ຂຽວ.
2. ເຊືອກ.

## IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກເຮັດທ່າທາງສັ່ນຄໍ່ມື.
2. ຄູແນະນຳ, ສາທິດການຮ້ອຍໝາກປັດ ແລະ ການເກັບມ້ຽນ.
3. ໃຫ້ເດັກປະຕິບັດຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
4. ໃຫ້ເດັກນຳສະເໜີຜົນງານ.
5. ສຶກສາອົບຮົມເດັກ ໃຫ້ມີຄວາມອົດທົນ, ການແບ່ງປັນ ແລະ ການເກັບມ້ຽນອຸປະກອນໄວ້ທີ່ກຳນົດ.

## V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ຄວາມຖືກຕ້ອງໃນການຮ້ອຍໝາກປັດສະຫຼັບສີແດງ, ຟ້າ ແລະ ຂຽວ ຕາມຈຳນວນ 4.
2. ຄວາມເອົາໃຈໃສ່ ແລະ ຄວາມສາມັກຄີກັບໝູ່ເພື່ອນ.

# ກິດຈະກຳການຫຼິ້ນກາງແຈ້ງ

## ຫົວຂໍ້: ເຄື່ອງຫຼິ້ນໃນເດີ່ນ

## I. ຈຸດປະສົງ

ເພື່ອໃຫ້ເດັກສາມາດຫຼິ້ນເຄື່ອງຫຼິ້ນໃນເດີ່ນ ຢ່າງມ່ວນຊື່ນ ແລະ ປອດໄພ.

## II. ເນື້ອໃນຕົ້ນຕໍ

ການຫຼິ້ນເຄື່ອງຫຼິ້ນ: ຫຼິ້ນໂອ້ນຊາ, ຕະລູດ, ກົງລອດ ແລະ ເດື່ອງດ່າງ.

## III. ສື່ການຮຽນ-ການສອນ

ໂອ້ນຊາ, ຕະລູດ, ກົງລອດ ແລະ ເດື່ອງດ່າງ ຫຼື ເຄື່ອງຫຼິ້ນທີ່ມີໃນທ້ອງຖິ່ນ.

## IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກເຕັ້ນຢູ່ກັບທີ່.
2. ຄູແນະນຳວິທີຫຼິ້ນໂອ້ນຊາ, ຕະລູດ, ກົງລອດ ແລະ ເດື່ອງດ່າງ.
3. ໃຫ້ເດັກຫຼິ້ນຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
4. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນໂອ້ນຊາ, ຕະລູດ, ກົງລອດ ແລະ ເດື່ອງດ່າງ.
5. ສຶກສາອົບຮົມເດັກກ່ຽວກັບຄວາມປອດໄພໃນເວລາຫຼິ້ນໂອ້ນຊາ, ຕະລູດ, ກົງລອດ ແລະ ເດື່ອງດ່າງ.

## V. ການວັດ ແລະ ປະເມີນຜົນ

ສັງເກດການຫຼິ້ນເຄື່ອງຫຼິ້ນໃນເດີ່ນ ຢ່າງມ່ວນຊື່ນ ແລະ ປອດໄພ.

# ກິດຈະກຳເກມການສຶກສາ

## ຫົວຂໍ້: ເກມຕໍ່ຮູບພາບ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ຕໍ່ຮູບພາບ ຕາມແບບຖືກຕ້ອງ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນເກມຕໍ່ຮູບພາບ ຄົນຂີ່ລົດໂດຍສານ.

### III. ສື່ການຮຽນ-ການສອນ

1. ເກມຕໍ່ຮູບພາບ ຄົນຂີ່ລົດ ໂດຍສານ.
2. ເກມເກົ່າ ເກມຈັບຄູ່ຮູບພາບທີ່ຄືກັນ: ລົດຖີບ, ລົດຈັກ, ລົດກະບະ ແລະ ລົດຕູ້.
3. ບົດເພງ ຂ້າມຖະໜົນ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກຮ້ອງເພງ ຂ້າມຖະໜົນ.
2. ຄູສະເໜີຊື່ເກມ.
3. ຄູສາທິດວິທີຫຼິ້ນເກມຕໍ່ຮູບພາບ ແລະ ແນະນຳເກັບມ້ຽນເກມ.
4. ໃຫ້ເດັກຫຼິ້ນເກມໃໝ່, ເກມເກົ່າ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນເກມ.
6. ສຶກສາອົບຮົມເດັກໃຫ້ມີຄວາມອົດທົນ, ການແບ່ງປັນ, ການລໍຖ້າ ແລະ ການເກັບມ້ຽນເກມໃຫ້ຖືກບ່ອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ຄວາມຖືກຕ້ອງໃນການຕໍ່ຮູບພາບ ຕາມແບບ.
2. ຄວາມເອົາໃຈໃສ່ ແລະ ຄວາມສາມັກຄີກັບໝູ່ເພື່ອນ.

# ກິດຈະກຳການຫຼິ້ນຕາມມຸມ

## ຫົວຂໍ້: ມຸມເຄື່ອງຫຼິ້ນສຳຜັດ ແລະ ມຸມສິລະປະສ້າງສັນ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ຫຼິ້ນໃນມຸມເຄື່ອງຫຼິ້ນສຳຜັດຖືກຕ້ອງ ແລະ ມ່ວນຊື່ນ.
2. ຫຼິ້ນໃນມຸມສິລະປະສ້າງສັນຖືກຕ້ອງ ແລະ ມ່ວນຊື່ນ.

### II. ເນື້ອໃນຕົ້ນຕໍ

1. ການຫຼິ້ນໃນມຸມເຄື່ອງຫຼິ້ນສຳຜັດ ຕໍ່ບັ້ງອກເປັນຮູບຊົງຕ່າງໆ.
2. ການຫຼິ້ນໃນມຸມສິລະປະສ້າງສັນ: ຮ້ອຍໝາກປັດສະຫຼັບສີແດງ, ຟ້າ ແລະ ຂຽວ ຕາມຈຳນວນ 4.

### III. ສື່ການຮຽນ-ການສອນ

1. ບົດເພງ ຂັບລົດນ້ອຍ.
2. ໄມ້ບັ້ງອກ ຫຼື ປຼາສະຕິກ.
3. ໝາກປັດສີແດງ, ຟ້າ, ຂຽວ ແລະ ເຊືອກ.
4. ບັດເຂົ້າມຸມຫຼິ້ນ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກຮ້ອງເພງ ຂັບລົດນ້ອຍ.
2. ຄູແນະນຳວິທີຫຼິ້ນຕາມມຸມເຄື່ອງຫຼິ້ນສຳຜັດ, ມຸມສິລະປະສ້າງສັນ ແລະ ການເກັບມ້ຽນ.
3. ໃຫ້ເດັກເລືອກບັດເຂົ້າຫຼິ້ນຕາມມຸມ.
4. ໃຫ້ເດັກເຂົ້າຫຼິ້ນຕາມມຸມ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເວົ້າຄືນກ່ຽວກັບການເຂົ້າຫຼິ້ນຕາມມຸມ.
6. ສຶກສາອົບຮົມເດັກໃຫ້ມີຄວາມອົດທົນ, ການແບ່ງປັນ, ການລໍຖ້າ ແລະ ການເກັບມ້ຽນເຄື່ອງຫຼິ້ນໃຫ້ຖືກບ່ອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ຄວາມມີລະບຽບໃນການຫຼິ້ນ.
2. ຄວາມຖືກຕ້ອງໃນການຫຼິ້ນ.
3. ຄວາມສາມັກຄີໃນການຫຼິ້ນ.

# ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຮັດທ່າທາງຕາມຄຳສັ່ງ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ເຮັດທ່າທາງຕາມຄຳສັ່ງຖືກຕ້ອງ ແລະ ມ່ວນຊື່ນ.

### II. ເນື້ອໃນຕົ້ນຕໍ

ການເຮັດທ່າທາງຕາມຄຳສັ່ງ: ພາຍເຮືອ ແລະ ຍູ້ລໍ.

### III. ສື່ການຮຽນ-ການສອນ

1. ເຄື່ອງເຄາະຈັງຫວະ.
2. ການບໍລິຫານຂາ (ປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກບໍລິຫານຂາ.
2. ໃຫ້ເດັກຍ່າງເປັນສອງແຖວຕາມບາດເຄາະຊ້າ ແລະ ໄວ.
3. ຄູສາທິດການເຮັດທ່າທາງຕາມຄຳສັ່ງ: ພາຍເຮືອ ແລະ ຍູ້ລໍ້.
4. ໃຫ້ເດັກປະຕິບັດຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເຮັດທ່າທາງລົມພັດໄປ, ມາຄ່ອຍໆ.
6. ໃຫ້ເດັກເວົ້າຄືນກ່ຽວກັບການເຮັດທ່າທາງທີ່ເດັກໄດ້ເຮັດ.
7. ສຶກສາອົບຮົມເດັກ ກ່ຽວກັບຄວາມປອດໄພ ໃນເວລາເຮັດທ່າທາງຕາມຄຳສັ່ງ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ການເຮັດທ່າທາງຕາມຄຳສັ່ງຖືກຕ້ອງ ແລະ ມ່ວນຊື່ນ.

# ກິດຈະກຳວົງມົນ

## ຫົວຂໍ້: ເດີນທາງນ້ຳ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ

1. ຮ້ອງເພງ ພາຍເຮືອ ປະກອບທ່າທາງ.
2. ບອກການປະຕິບັດຕົນໃນເວລາເດີນທາງນ້ຳ.

### II. ເນື້ອໃນຕົ້ນຕໍ

1. ການຮ້ອງເພງ ພາຍເຮືອ ປະກອບທ່າທາງ.
2. ການປະຕິບັດຕົນໃນເວລາຂີ່ເຮືອ: ນຸ່ງເສື້ອຊູຊີບ ແລະ ນັ່ງຢູ່ກັບທີ່.

### III. ສື່ການຮຽນ-ການສອນ

1. ບົດເພງ ພາຍເຮືອ (ປຶ້ມຄູ່ມືຄູ).
2. ຮູບພາບ ຄົນນຸ່ງເສື້ອຊູຊີບນັ່ງຢູ່ເຮືອ.
3. ຮູບພາບວົງມົນ: ສີແດງ, ສີເຫຼືອງ, ສີຂຽວ, ໄຟອຳນາດ, ຢຸດ.

### IV. ກິດຈະກຳການຮຽນ-ການສອນ

1. ຄູສົນທະນາກັບເດັກ ກ່ຽວກັບການເດີນທາງນ້ຳ.
2. ໃຫ້ເດັກຮ້ອງເພງ ພາຍເຮືອ ປະກອບທ່າທາງ ແລະ ຄູສົນທະນາກັບເດັກກ່ຽວກັບເນື້ອໃນເພງ.
3. ໃຫ້ເດັກສັງເກດຮູບພາບ, ຄູສົນທະນາກັບເດັກກ່ຽວກັບການປະຕິບັດຕົນໃນເວລາຂີ່ເຮືອ ແລະ ເດັກບອກການປະຕິບັດຕົນໃນການເດີນທາງ ທາງນ້ຳ.
4. ໃຫ້ເດັກເວົ້າເປັນຄຳຕາມຮູບພາບ: ສີແດງ, ສີເຫຼືອງ, ສີຂຽວ, ໄຟອຳນາດ, ຢຸດ.
5. ໃຫ້ເດັກເວົ້າຄືນກ່ຽວກັບການປະຕິບັດຕົນໃນເວລາຂີ່ເຮືອ ແລະ ຮ້ອງເພງ.
6. ສຶກສາອົບຮົມເດັກ ກ່ຽວກັບການຂີ່ເຮືອຕ້ອງນຸ່ງເສື້ອຊູຊີບ ແລະ ບໍ່ເດ່ມືອອກນອກເຮືອ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ການຮ້ອງເພງ ພາຍເຮືອ ປະກອບທ່າທາງ.
2. ການບອກການປະຕິບັດຕົນໃນເວລາເດີນທາງນ້ຳ.

# ກິດຈະກຳສິລະປະສ້າງສັນ

## ຫົວຂໍ້: ຂີດຂຽນຕົວເລກ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດຂີດຂຽນຕາມຮອຍຈ້ຳຕົວເລກ 9 ຖືກຕ້ອງ.

### II. ເນື້ອໃນຕົ້ນຕໍ

ການຂີດຂຽນຕາມຮອຍຈ້ຳຕົວເລກ 9.

### III. ສື່ການຮຽນ-ການສອນ

1. ສໍດຳ.
2. ປຶ້ມບົດເຝິກຫັດຄະນິດສາດ ເຫຼັ້ມທີ 2 ຫຼື ເຈ້ຍແບບຂີດຂຽນຕາມຮອຍຈ້ຳຕົວເລກ 9.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກເຮັດທ່າທາງຂີດຕົວເລກ 9 ຢູ່ກາງຫາວ.
2. ຄູແນະນຳ, ສາທິດວິທີຂີດຂຽນຕາມຮອຍຈ້ຳຕົວເລກ 9 ແລະ ການເກັບມ້ຽນ.
3. ໃຫ້ເດັກປະຕິບັດຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
4. ໃຫ້ເດັກນຳສະເໜີຜົນງານ.
5. ສຶກສາອົບຮົມເດັກໃຫ້ມີຄວາມອົດທົນ, ບໍ່ຂີດໝູ່, ບໍ່ເຮັດເຈ້ຍຂາດ ແລະ ການເກັບມ້ຽນອຸປະກອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ຄວາມພະຍາຍາມໃນການຂີດຂຽນ.
2. ຄວາມຖືກຕ້ອງໃນການຂີດຂຽນ.

# ກິດຈະກຳການຫຼິ້ນກາງແຈ້ງ

## ຫົວຂໍ້: ແບບຫຼິ້ນ ເຕັ້ນກົບ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ຫຼິ້ນແບບຫຼິ້ນປະດິດສ້າງ ເຕັ້ນກົບ ຢ່າງມ່ວນຊື່ນ ແລະ ປອດໄພ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນແບບຫຼິ້ນປະດິດສ້າງ ເຕັ້ນກົບ.

### III. ສື່ການຮຽນ-ການສອນ

1. ເຄື່ອງເຄາະຈັງຫວະ.
2. ວິທີຫຼິ້ນ (ປື້ມຄູ່ມື).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກຄ້ຳແອວເຕັ້ນຂຶ້ນ ແລະ ລົງຢູ່ກັບບ່ອນ.
2. ຄູແນະນຳ ແລະ ສາທິດວິທີຫຼິ້ນແບບຫຼິ້ນ ເຕັ້ນກົບ.
3. ໃຫ້ເດັກຫຼິ້ນຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
4. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນແບບຫຼິ້ນ ເຕັ້ນກົບ.
5. ສຶກສາອົບຮົມເດັກ ກ່ຽວກັບຄວາມປອດໄພ ໃນເວລາຫຼິ້ນແບບຫຼິ້ນ ເຕັ້ນກົບ.

### V. ການວັດ ແລະ ປະເມີນຜົນ

ສັງເກດການຫຼິ້ນແບບຫຼິ້ນປະດິດສ້າງ ເຕັ້ນກົບ ຢ່າງມ່ວນຊື່ນ ແລະ ປອດໄພ.

# ກິດຈະກຳເກມການສຶກສາ

## ຫົວຂໍ້: ເກມຈັບຄູ່ຮູບພາບກັບພະຍັນຊະນະ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ນຳເອົາຮູບພາບ ມາຈັບຄູ່ກັບພະຍັນຊະນະ ຖືກຕ້ອງ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນເກມຈັບຄູ່ຮູບພາບກັບພະຍັນຊະນະ ຮູບເຮືອ ຮ ລົດ ລ, ໄຟແດງ ຟ.

### III. ສື່ການຮຽນ-ການສອນ

1. ເກມຈັບຄູ່ຮູບພາບກັບພະຍັນຊະນະ: ເຮືອ ຮ, ລົດ ລ, ໄຟແດງ ຟ.
2. ເກມເກົ່າ ເກມຕໍ່ຮູບພາບ ຄົນຂີ່ລົດໂດຍສານ.
3. ບົດຄຳຄ່ອງ ໄຟອຳນາດ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກເລົ່າຄຳຄ່ອງ ໄຟອຳນາດ.
2. ຄູສະເໜີຊື່ເກມ.
3. ຄູສາທິດວິທີຫຼິ້ນເກມຈັບຄູ່ຮູບພາບ ແລະ ແນະນຳເກັບມ້ຽນເກມ.
4. ໃຫ້ເດັກຫຼິ້ນເກມໃໝ່, ເກມເກົ່າ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນເກມ.
6. ສຶກສາອົບຮົມເດັກ ໃຫ້ມີຄວາມອົດທົນ, ການແບ່ງປັນ, ການລໍຖ້າ ແລະ ການເກັບມ້ຽນເກມ ໃຫ້ຖືກບ່ອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ຄວາມຖືກຕ້ອງໃນການຈັບຄູ່ຮູບພາບກັບພະຍັນຊະນະ.
2. ຄວາມເອົາໃຈໃສ່ຂອງເດັກ.
3. ຄວາມສາມັກຄີກັບໝູ່ເພື່ອນ.

# ກິດຈະກຳການຫຼິ້ນຕາມມຸມ

## ຫົວຂໍ້: ມຸມເຄື່ອງຫຼິ້ນສຳຜັດ ແລະ ມຸມເກມການສຶກສາ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ຫຼິ້ນໃນມຸມເຄື່ອງຫຼິ້ນສຳຜັດ ຢ່າງມ່ວນຊື່ນ
2. ຫຼິ້ນໃນມຸມເກມການສຶກສາ ຢ່າງມ່ວນຊື່ນ

### II. ເນື້ອໃນຕົ້ນຕໍ

1. ການຫຼິ້ນໃນມຸມເຄື່ອງຫຼິ້ນສຳຜັດ: ຕໍ່ໄມ້ບູ໊ອກເປັນຮູບຊົງຕ່າງໆ ແລະ ການໃຊ້ນິ້ວມືແຕ້ມຮູບຕາມໃຈໃສ່ອ່າງຊາຍ.
2. ການຫຼິ້ນໃນມຸມເກມການສຶກສາ: ການຫຼິ້ນເກມຈັບຄູ່ຮູບພາບກັບພະຍັນຊະນະ: ຮູບເຮືອ ຮ, ລົດ ລ, ໄຟແດງ ຟ.

### III. ສື່ການຮຽນ-ການສອນ

1. ບົດເພງ ພາຍເຮືອ.
2. ໄມ້ບູ໊ອກ ຫຼື ປລາສະຕິກ.
3. ອ່າງຊາຍ.
4. ເກມຈັບຄູ່ຮູບພາບກັບພະຍັນຊະນະ: ຮູບເຮືອ ຮ, ລົດ ລ, ໄຟແດງ ຟ.
5. ບັດເຂົ້າມຸມຫຼິ້ນ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກຮ້ອງເພງ ພາຍເຮືອ.
2. ຄູແນະນຳວິທີຫຼິ້ນຕາມມຸມເຄື່ອງຫຼິ້ນສຳຜັດ, ມຸມເກມການສຶກສາ ແລະ ການເກັບມ້ຽນ.
3. ໃຫ້ເດັກເລືອກບັດເຂົ້າຫຼິ້ນຕາມມຸມ.
4. ໃຫ້ເດັກເຂົ້າຫຼິ້ນຕາມມຸມ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເວົ້າຄືນກ່ຽວກັບການເຂົ້າຫຼິ້ນຕາມມຸມ.
6. ສຶກສາອົບຮົມເດັກ ໃຫ້ມີຄວາມອົດທົນ, ການແບ່ງປັນ, ການລໍຖ້າ ແລະ ການເກັບມ້ຽນເຄື່ອງຫຼິ້ນໃຫ້ຖືກບ່ອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ການຫຼິ້ນໃນມຸມເຄື່ອງຫຼິ້ນສຳຜັດ ຢ່າງມ່ວນຊື່ນ.
2. ການຫຼິ້ນໃນມຸມເກມການສຶກສາ ຢ່າງມ່ວນຊື່ນ.

# ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຮັດທ່າທາງຕາມຂໍ້ຕົກລົງ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ເຮັດທ່າທາງຕາມຂໍ້ຕົກລົງຖືກຕ້ອງ ແລະ ມ່ວນຊື່ນ.

### II. ເນື້ອໃນຕົ້ນຕໍ

ການເຮັດທ່າທາງຕາມຂໍ້ຕົກລົງ: ຕົບມື 1 ບາດ ເຮັດທ່າທາງຂີ່ລົບຖີບ, ຕົບມື 2 ບາດເຮັດທ່າທາງຂັບລົດໃຫຍ່, ຕົບມື 3 ບາດ ເຮັດທ່າທາງເຮືອບິນ ບິນ.

### III. ສື່ການຮຽນ-ການສອນ

1. ເຄື່ອງເຄາະຈັງຫວະ.
2. ການບໍລິຫານແຂນ (ປື້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກບໍລິຫານແຂນ.
2. ໃຫ້ເດັກຍ່າງ ແລະ ແລ່ນຕາມບາດເຄາະຊ້າ, ໄວ.
3. ຄູສາທິດການເຮັດທ່າທາງຕາມຂໍ້ຕົກລົງ: ຕົບມື 1 ບາດ ເຮັດທ່າທາງຂີ່ລົບຖີບ, ຕົບມື 2 ບາດເຮັດທ່າທາງຂັບລົດໃຫຍ່, ຕົບມື 3 ບາດ ເຮັດທ່າທາງເຮືອບິນ.
4. ໃຫ້ເດັກປະຕິບັດຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກຫາຍໃຈເຂົ້າ, ອອກຊ້າໆ.
6. ໃຫ້ເດັກເວົ້າຄືນກ່ຽວກັບການເຮັດທ່າທາງທີ່ເດັກໄດ້ເຮັດ.
7. ສຶກສາອົບຮົມເດັກ ກ່ຽວກັບຄວາມປອດໄພ ໃນເວລາເຮັດທ່າທາງຕາມຂໍ້ຕົກລົງ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ຄວາມກ້າຫານໃນການເຮັດທ່າທາງຕາມຂໍ້ຕົກລົງ.
2. ຄວາມເບີກບານຂອງເດັກ.
3. ຄວາມຖືກຕ້ອງຂອງການປະຕິບັດຕາມຂໍ້ຕົກລົງ.

# ກິດຈະກຳວົງມົນ

## ຫົວຂໍ້: ເດີນທາງອາກາດ

## I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ບອກການປະຕິບັດຕົນໃນເວລາຂີ່ເຮືອບິນ.
2. ວາງຮູບຈະຕຸລັດນ້ອຍ ເທິງຮູບຈະຕຸລັດໃຫຍ່ ໂດຍໃຫ້ແຈຂອງຮູບນ້ອຍຢູ່ເຄິ່ງກາງ ຂອງຂ້າງ ຮູບໃຫຍ່.

## II. ເນື້ອໃນຕົ້ນຕໍ

1. ການປະຕິບັດຕົນໃນເວລາຂີ່ເຮືອບິນ: ໃສ່ສາຍຮັດນິລະໄພ, ປະຕິບັດຕາມລະ ບຽບຂອງການຂີ່ ເຮືອບິນ.
2. ການວາງຮູບຈະຕຸລັດນ້ອຍ ເທິງຮູບຈະຕຸລັດໃຫຍ່ ໂດຍໃຫ້ແຈຂອງຮູບນ້ອຍຢູ່ເຄິ່ງກາງ ຂອງຂ້າງ ຮູບໃຫຍ່.

## III. ສື່ການຮຽນ-ການສອນ

1. ຮູບພາບ ເຮືອບິນ
2. ຮູບພາບ ຄົນນັ່ງໃນເຮືອບິນ ຮັດສາຍນິລະໄພ.
3. ເຈ້ຍຮູບຈະຕຸລັດນ້ອຍ 10, 5 ຊັງຕີແມັດ ແລະ ເຈ້ຍຮູບຈະຕຸລັດໃຫຍ່ 15 ຊັງຕີແມັດ.

## IV. ກິດຈະກຳການຮຽນ-ການສອນ

1. ຄູສົນທະນາກັບເດັກກ່ຽວກັບການເດີນທາງ ທາງອາກາດ.
2. ໃຫ້ເດັກສັງເກດຮູບພາບ ແລະ ຄູສົນທະນາກັບເດັກ ກ່ຽວກັບການປະຕິບັດຕົນໃນເວລາຂີ່ເຮືອບິນ.
3. ໃຫ້ເດັກບອກການປະຕິບັດຕົນໃນເວລາຂີ່ເຮືອບິນ.
4. ໃຫ້ເດັກວາງຮູບຈະຕຸລັດນ້ອຍ ເທິງຮູບຈະຕຸລັດໃຫຍ່ ໂດຍໃຫ້ແຈຂອງຮູບນ້ອຍຢູ່ເຄິ່ງກາງ ຂອງຂ້າງຮູບໃຫຍ່.
5. ໃຫ້ເດັກເວົ້າຄືນກ່ຽວກັບການປະຕິບັດຕົນໃນເວລາຂີ່ເຮືອບິນ ແລະ ວາງຮູບຈະຕຸລັດ.
6. ສຶກສາອົບຮົມເດັກ ກ່ຽວກັບການຂີ່ເຮືອບິນ ຕ້ອງໃສ່ສາຍຮັດນິລະໄພ.

## V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ການບອກການປະຕິບັດຕົນໃນເວລາຂີ່ເຮືອບິນ.
2. ການວາງຮູບຈະຕຸລັດນ້ອຍ ເທິງຮູບຈະຕຸລັດໃຫຍ່ ໂດຍໃຫ້ແຈຂອງຮູບນ້ອຍຢູ່ເຄິ່ງກາງ ຂອງຂ້າງ ຮູບໃຫຍ່.

# ກິດຈະກຳສິລະປະສ້າງສັນ

## ຫົວຂໍ້: ພັບເຈ້ຍ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ພັບເຈ້ຍເປັນຮູບຈະຫຼວດຖືກຕ້ອງ.

### II. ເນື້ອໃນຕົ້ນຕໍ

ການພັບເຈ້ຍເປັນຮູບຈະຫຼວດ.

### III. ສື່ການຮຽນ-ການສອນ

ເຈ້ຍຮູບສີ່ແຈ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກສັ່ນຄໍ່ມື ແລະ ດຶດນີ້ວມື.
2. ຄູແນະນຳ ແລະ ການພັບເຈ້ຍເປັນຮູບຈະຫຼວດ ແລະ ການເກັບມ້ຽນ.
3. ໃຫ້ເດັກປະຕິບັດຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
4. ໃຫ້ເດັກນຳສະເໜີຜົນງານ.
5. ສຶກສາອົບຮົມເດັກ ໃຫ້ມີຄວາມອົດທົນ, ບໍ່ຈີກເຈ້ຍຖິ້ມທົ່ວທີບ ແລະ ການເກັບມ້ຽນອຸປະກອນໄວ້ບ່ອນທີ່ກຳນົດ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ຄວາມຖືກຕ້ອງໃນການພັບເຈ້ຍເປັນຮູບຈະຫຼວດ.
2. ຄວາມເອົາໃຈໃສ່ຂອງເດັກ.

# ກິດຈະກຳການຫຼິ້ນກາງແຈ້ງ

## ຫົວຂໍ້: ແບບຫຼິ້ນ ປະຕິບັດໄຟອຳນາດ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດຫຼິ້ນແບບຫຼິ້ນປະດິດສ້າງ ປະຕິບັດ ໄຟອຳນາດ ຢ່າງມ່ວນຊື່ນ ແລະ ປອດໄພ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນແບບຫຼິ້ນປະດິດສ້າງ ປະຕິບັດໄຟອຳນາດ.

### III. ສື່ການຮຽນ-ການສອນ

1. ຮູບໄຟອຳນາດ (ໄຟແດງ, ເຫຼືອງ, ຂຽວ)
2. ເຄື່ອງເຄາະຈັງຫວະ.
3. ວິທີຫຼິ້ນ (ປື້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກສັ່ນຄໍ່ມື, ໝູນບ່າ ແລະ ໝູນຫົວເຂົ່າ.
2. ຄູສາທິດວິທີຫຼິ້ນແບບຫຼິ້ນ ປະຕິບັດໄຟອຳນາດ.
3. ໃຫ້ເດັກຫຼິ້ນຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
4. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນແບບຫຼິ້ນ ປະຕິບັດໄຟອຳນາດ.
5. ສຶກສາອົບຮົມເດັກ ກ່ຽວກັບຄວາມປອດໄພ ໃນເວລາຫຼິ້ນແບບຫຼິ້ນ ປະຕິບັດໄຟອຳນາດ.

### V. ການວັດ ແລະ ປະເມີນຜົນ

ສັງເກດການຫຼິ້ນແບບຫຼິ້ນປະດິດສ້າງ ປະຕິບັດໄຟອຳນາດ ຢ່າງມ່ວນຊື່ນ ແລະ ປອດໄພ.

# ກິດຈະກຳເກມການສຶກສາ

## ຫົວຂໍ້: ເກມຕໍ່ຮູບພາບ

## I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ຕໍ່ຮູບພາບ ຕາມແບບຖືກຕ້ອງ.

## II. ເນື້ອໃນຕົ້ນຕໍ

ການຫຼິ້ນເກມຕໍ່ຮູບພາບ ເຮືອບິນ.

## III. ສື່ການຮຽນ-ການສອນ

1. ເກມຕໍ່ຮູບພາບ ເຮືອບິນ.
2. ເກມເກົ່າ ເກມຈັບຄູ່ຮູບພາບກັບພະຍັນຊະນະ: ເຮືອ ຮ, ລົດ ລ, ໄຟແດງ ຟ.

## III. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນັບເລກປາກເປົ່າ 1-8.
2. ຄູສະເໜີຊື່ເກມ.
3. ຄູສາທິດວິທີຫຼິ້ນເກມຕໍ່ຮູບພາບ ແລະ ແນະນຳການເກັບມ້ຽນເກມ.
4. ໃຫ້ເດັກຫຼິ້ນເກມໃໝ່, ເກມເກົ່າ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນເກມ.
6. ສຶກສາອົບຮົມເດັກ ໃຫ້ມີຄວາມອົດທົນ, ການແບ່ງປັນ, ການລໍຖ້າ ແລະ ການເກັບມ້ຽນເກມ ໃຫ້ຖືກບ່ອນ.

## V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ຄວາມຖືກຕ້ອງໃນການຕໍ່ຮູບພາບ ຕາມແບບ.
2. ຄວາມເອົາໃຈໃສ່ຂອງເດັກ.
3. ຄວາມສາມັກຄີກັບໝູ່ເພື່ອນ.

# ກິດຈະກຳການຫຼິ້ນຕາມມຸມ

## ຫົວຂໍ້: ມຸມບົດບາດສົມມຸດ ແລະ ມຸມເຄື່ອງຫຼິ້ນສຳຜັດ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ຫຼິ້ນໃນມຸມບົດບາດສົມມຸດ ຢ່າງມ່ວນຊື່ນ.
2. ຫຼິ້ນໃນມຸມເຄື່ອງຫຼິ້ນສຳຜັດ ຢ່າງມ່ວນຊື່ນ.

### II. ເນື້ອໃນຕົ້ນຕໍ

1. ການຫຼິ້ນໃນມຸມບົດບາດສົມມຸດ: ຫຼິ້ນຂັບລົດ, ຂັບເຮືອບິນ ແລະ ຂັບເຮືອ.
2. ການຫຼິ້ນໃນມຸມເຄື່ອງຫຼິ້ນສຳຜັດ: ຫຼິ້ນກີຕາ, ຕີກອງ, ສັ່ນກະແຊັກ.

### III. ສື່ການຮຽນ-ການສອນ

1. ບົດເພງ ຂັບລົດນ້ອຍ.
2. ເຄື່ອງຫຼິ້ນ: ລົດນ້ອຍ, ເຮືອບິນ ແລະ ເຮືອ.
3. ເຄື່ອງດົນຕີ: ກີຕາ, ກອງ ແລະ ກະແຊັກ.
4. ບັດເຂົ້າມຸມຫຼິ້ນ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກຮ້ອງເພງ ຂັບລົດນ້ອຍ.
2. ຄູແນະນຳວິທີຫຼິ້ນຕາມມຸມບົດບາດສົມມຸດ, ມຸມເຄື່ອງຫຼິ້ນສຳຜັດ ແລະ ການເກັບມ້ຽນ
3. ໃຫ້ເດັກເລືອກບັດເຂົ້າຫຼິ້ນຕາມມຸມ.
4. ໃຫ້ເດັກເຂົ້າຫຼິ້ນຕາມມຸມ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເວົ້າຄືນກ່ຽວກັບການເຂົ້າຫຼິ້ນຕາມມຸມ.
6. ສຶກສາອົບຮົມເດັກ ໃຫ້ມີຄວາມອົດທົນ, ການແບ່ງປັນ, ການລໍຖ້າ ແລະ ການເກັບມ້ຽນເຄື່ອງຫຼິ້ນໃຫ້ຖືກບ່ອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ການຫຼິ້ນໃນມຸມບົດບາດສົມມຸດ ຢ່າງມ່ວນຊື່ນ.
2. ການຫຼິ້ນໃນມຸມເຄື່ອງຫຼິ້ນສຳຜັດ ຢ່າງມ່ວນຊື່ນ.

# ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຮັດທ່າທາງຕາມຈັງຫວະ

## I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ເຮັດທ່າທາງຕາມຈັງຫວະເພງ ຢ່າງມ່ວນຊື່ນ.

## II. ເນື້ອໃນຕົ້ນຕໍ

ການເຮັດທ່າທາງຕາມຈັງຫວະເພງ ພາຍເຮືອ.

## III. ສື່ການຮຽນ-ການສອນ

1. ເຄື່ອງເຄາະຈັງຫວະ.
2. ບົດເພງ ພາຍເຮືອ.
3. ການບໍລິຫານທ້ອງ ແລະ ຫຼັງ (ປື້ມຄູ່ມືຄູ).

## IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກບໍລິຫານທ້ອງ ແລະ ຫຼັງ.
2. ໃຫ້ເດັກເຕັ້ນເຂົ້າ, ອອກວົງມົນ.
3. ຄູແນະນຳການເຮັດທ່າທາງຕາມຈັງຫວະເພງ ພາຍເຮືອ.
4. ໃຫ້ເດັກປະຕິບັດຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນັ່ງຢຽດຂາອອກ ກົ້ມຫົວລົງ ເອົາມືແປະປາຍຕີນ.
6. ໃຫ້ເດັກເວົ້າຄືນກ່ຽວກັບການເຮັດທ່າທາງທີ່ເດັກໄດ້ເຮັດ.
7. ສຶກສາອົບຮົມເດັກ ກ່ຽວກັບຄວາມປອດໄພ ໃນເວລາເຮັດທ່າທາງຕາມຈັງຫວະເພງ.

## V. ການວັດ ແລະ ປະເມີນຜົນ

ສັງເກດ ການເຮັດທ່າທາງຕາມຈັງຫວະເພງ ຢ່າງມ່ວນຊື່ນ.

# ກິດຈະກຳວົງມົນ

## ຫົວຂໍ້: ໄຟອຳນາດ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ

1. ບອກການປະຕິບັດຕົນຕາມໄຟອຳນາດ.
2. ອ່ານອອກສຽງພະຍັນຊະນະ: ຟ, ລ.

### II. ເນື້ອໃນຕົ້ນຕໍ

1. ການປະຕິບັດຕາມໄຟອຳນາດ: ໄຟແດງຢຸດ, ໄຟເຫຼືອງກຽມຢຸດ ແລະ ໄຟຂຽວໄປໄດ້.
2. ການອ່ານອອກສຽງພະຍັນຊະນະ: ຟ, ລ.

### III. ສື່ການຮຽນ-ການສອນ

1. ບົດຄຳຄ່ອງ ໄຟອຳນາດ.
2. ຮູບພາບ: ໄຟແດງ, ໄຟເຫຼືອງ ແລະ ໄຟຂຽວ.
3. ບັດພະຍັນຊະນະ: ຟ, ລ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກເລົ່າຄຳຄ່ອງ ໄຟອຳນາດ ປະກອບທ່າທາງ.
2. ໃຫ້ເດັກສັງເກດຮູບພາບ ແລະ ຄູສົນທະນາກັບເດັກກ່ຽວກັບໄຟອຳນາດ.
3. ໃຫ້ເດັກບອກການປະຕິບັດຕົນຕາມໄຟອຳນາດ.
4. ໃຫ້ເດັກອ່ານອອກສຽງພະຍັນຊະນະ: ຟ, ລ.
5. ໃຫ້ເດັກເວົ້າຄືນກ່ຽວກັບການປະຕິບັດຕົນຕາມໄຟອຳນາດ ແລະ ອ່ານອອກສຽງພະຍັນຊະນະ.
6. ສຶກສາອົບຮົມເດັກ ກ່ຽວກັບການເດີນທາງຕ້ອງປະຕິບັດຕາມໄຟອຳນາດ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ການບອກການປະຕິບັດຕາມໄຟອຳນາດ.
2. ການອ່ານອອກສຽງພະຍັນຊະນະ: ຟ, ລ.

# ກິດຈະກຳສິລະປະສ້າງສັນ

## ຫົວຂໍ້: ຂີດເສັ້ນ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ຂີດເສັ້ນຫົວຕົວ ນ ຕາມຮອຍຈ້ຳ ແຕ່ຂວາຫາຊ້າຍຖືກຕ້ອງ.

### II. ເນື້ອໃນຕົ້ນຕໍ

ການຂີດເສັ້ນຫົວຕົວ ນ ຕາມຮອຍຈ້ຳ ແຕ່ຂວາຫາຊ້າຍ.

### III. ສື່ການຮຽນ-ການສອນ

1. ສໍດຳ.
2. ປື້ມບົດເຝິກຫັດພາສາລາວ ເຫຼັ້ມທີ 2 ຫຼື ເຈ້ຍຂີດເສັ້ນຫົວຕົວ ນ ຕາມຮອຍຈ້ຳ ແຕ່ຂວາຫາຊ້າຍ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກເຮັດທ່າທາງຂີດເສັ້ນ ຢູ່ກາງຫາວ.
2. ຄູແນະນຳ, ສາທິດວິທີການຂີດເສັ້ນຫົວຕົວ ນ ຕາມຮອຍຈ້ຳ ແຕ່ຂວາຫາຊ້າຍ ແລະ ການເກັບມ້ຽນ.
3. ໃຫ້ເດັກປະຕິບັດຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
4. ໃຫ້ເດັກນຳສະເໜີຜົນງານ.
5. ສຶກສາອົບຮົມເດັກ ໃຫ້ມີຄວາມອົດທົນ, ບໍ່ຂີດກັນ ແລະ ການເກັບມ້ຽນອຸປະກອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ຄວາມຖືກຕ້ອງໃນການຂີດເສັ້ນຫົວຕົວ ນ ຕາມຮອຍຈ້ຳ ແຕ່ຂວາຫາຊ້າຍ.
2. ຄວາມພະຍາຍາມຂອງເດັກ.

# ກິດຈະກຳການຫຼິ້ນກາງແຈ້ງ

## ຫົວຂໍ້: ແບບຫຼິ້ນ ພາຍເຮືອບົກ

## I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ຫຼິ້ນແບບຫຼິ້ນປະດິດສ້າງ ພາຍເຮືອບົກ ຢ່າງມ່ວນຊື່ນ ແລະ ປອດໄພ.

## II. ເນື້ອໃນຕົ້ນຕໍ

ການຫຼິ້ນແບບຫຼິ້ນປະດິດສ້າງ ພາຍເຮືອບົກ.

## III. ສື່ການຮຽນ-ການສອນ

1. ເຄື່ອງເຄາະຈັງຫວະ.
2. ວິທີຫຼິ້ນ (ປື້ມຄູ່ມືຄູ).
3. ບົດເພງ ພາຍເຮືອ.

## IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກຮ້ອງເພງ ພາຍເຮືອ.
2. ຄູສາທິດ ວິທີຫຼິ້ນແບບຫຼິ້ນປະດິດສ້າງ ພາຍເຮືອບົກ.
3. ໃຫ້ເດັກຫຼິ້ນຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
4. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນແບບຫຼິ້ນ ພາຍເຮືອບົກ.
5. ສຶກສາອົບຮົມເດັກ ກ່ຽວກັບຄວາມປອດໄພ ໃນເວລາຫຼິ້ນແບບຫຼິ້ນ ພາຍເຮືອບົກ.

## V. ການວັດ ແລະ ປະເມີນຜົນ

ສັງເກດການຫຼິ້ນແບບຫຼິ້ນປະດິດສ້າງ ພາຍເຮືອບົກ ຢ່າງມ່ວນຊື່ນ ແລະ ປອດໄພ.

# ກິດຈະກຳເກມການສຶກສາ

## ຫົວຂໍ້: ເກມຕໍ່ຮູບພາບ

## I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ຕໍ່ຮູບພາບ ຕາມແບບຖືກຕ້ອງ.

## II. ເນື້ອໃນຕົ້ນຕໍ

ການຫຼິ້ນເກມຕໍ່ຮູບພາບ ໄຟອຳນາດ.

## III. ສື່ການຮຽນ-ການສອນ

1. ເກມຕໍ່ຮູບພາບ ໄຟອຳນາດ.
2. ເກມເກົ່າ ເກມຕໍ່ຮູບພາບ ເຮືອບິນ.
3. ບົດຄຳຄ່ອງ ໄຟອຳນາດ.

## IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກເລົ່າຄຳຄ່ອງ ໄຟອຳນາດ.
2. ຄູສະເໜີຊື່ເກມ.
3. ຄູວິທີຫຼິ້ນເກມຕໍ່ຮູບພາບ ແລະ ແນະນຳການເກັບມ້ຽນ.
4. ໃຫ້ເດັກຫຼິ້ນເກມໃໝ່, ເກມເກົ່າ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນເກມ.
6. ສຶກສາອົບຮົມເດັກ ໃຫ້ມີຄວາມອົດທົນ, ການແບ່ງປັນ, ການລໍຖ້າ ແລະ ການເກັບມ້ຽນເກມໃຫ້ຖືກບ່ອນ.

## V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ຄວາມຖືກຕ້ອງໃນການຕໍ່ຮູບພາບ ຕາມແບບ.
2. ຄວາມສົນໃຈ ແລະ ຄວາມສາມັກຄີກັບໝູ່ເພື່ອນ.

# ກິດຈະກຳການຫຼິ້ນຕາມມຸມ

## ຫົວຂໍ້: ມຸມບົດບາດສົມມຸດ ແລະ ມຸມເຄື່ອງຫຼິ້ນສຳຜັດ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ຫຼິ້ນໃນມຸມບົດບາດສົມມຸດ ຢ່າງມ່ວນຊື່ນ.
2. ຫຼິ້ນໃນມຸມເຄື່ອງຫຼິ້ນສຳຜັດ ຢ່າງມ່ວນຊື່ນ.

### II. ເນື້ອໃນຕົ້ນຕໍ

1. ການຫຼິ້ນໃນມຸມບົດບາດສົມມຸດ: ເປັນພໍ່ຄ້າ, ແມ່ຄ້າ ຊື້, ຂາຍເຄື່ອງຫຼິ້ນ ແລະ ເຄື່ອງໃຊ້.
2. ການຫຼິ້ນໃນມຸມເຄື່ອງຫຼິ້ນສຳຜັດ: ຕີກອງ, ສັ່ນກະແຊັກ, ເປົ່າແຄນ ແລະ ຕີລະນາດ.

### III. ສື່ການຮຽນ-ການສອນ

1. ບົດຄຳຄ່ອງ ໄຟອຳນາດ.
2. ເຄື່ອງຫຼິ້ນ ແລະ ເຄື່ອງໃຊ້: ຕຸກກະຕາ, ໝາກບານ, ລົດ, ຍົນ, ເຮືອ, ໂທລະສັບ ແລະ ອື່ນໆ.
3. ກອງ, ກະແຊັກ, ແຄນ ແລະ ລະນາດ.
4. ບັດເຂົ້າມຸມຫຼິ້ນ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກເລົ່າຄຳຄ່ອງ ໄຟອຳນາດ.
2. ຄູແນະນຳວິທີຫຼິ້ນຕາມມຸມບົດບາດສົມມຸດ, ມຸມເຄື່ອງຫຼິ້ນສຳຜັດ ແລະ ການເກັບມ້ຽນ.
3. ໃຫ້ເດັກເລືອກບັດເຂົ້າຫຼິ້ນຕາມມຸມ.
4. ໃຫ້ເດັກເຂົ້າຫຼິ້ນຕາມມຸມ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເວົ້າຄືນກ່ຽວກັບການເຂົ້າຫຼິ້ນຕາມມຸມ.
6. ສຶກສາອົບຮົມເດັກ ໃຫ້ມີຄວາມອົດທົນ, ການແບ່ງປັນ, ການລໍຖ້າ ແລະ ການເກັບມ້ຽນເຄື່ອງຫຼິ້ນໃຫ້ຖືກບ່ອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ການຫຼິ້ນໃນມຸມບົດບາດສົມມຸດ ຢ່າງມ່ວນຊື່ນ.
2. ການຫຼິ້ນໃນມຸມເຄື່ອງຫຼິ້ນສຳຜັດ ຢ່າງມ່ວນຊື່ນ.

# ຈຸດປະສົງສຳລັບອາທິດທີ 3

## ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ

ເພື່ອໃຫ້ເດັກສາມາດ:

1. ເຮັດທ່າທາງຕາມຈິນຕະນາການປະກອບເນື້ອໃນຄຳຄ່ອງ ໄຟອຳນາດ ຢ່າງມ່ວນຊື່ນ.
2. ເຮັດທ່າທາງຕາມຈັງຫວະເພງ ສຽງກິ່ງໂທລະສັບ ຢ່າງມ່ວນຊື່ນ.
3. ເຮັດທ່າທາງຕາມຂໍ້ຕົກລົງ ເຄາະ 1 ບາດ ເຮັດທ່າທາງລົມໂທລະສັບ, ເຄາະ 2 ບາດ ເຮັດທ່າທາງອ່ານປຶ້ມ ແລະ ເຄາະ 3 ບາດ ເຮັດທ່າທາງທາສີຮູບ ຖືກຕ້ອງ ແລະ ມ່ວນຊື່ນ.
4. ເຮັດທ່າທາງເປັນຜູ້ນຳ, ຜູ້ຕາມ ລົມໂທລະສັບ, ນັ່ງເບິ່ງໂທລະພາບ ແລະ ອ່ານໜັງສືພິມ ຖືກຕ້ອງ ແລະ ມ່ວນຊື່ນ.
5. ເຮັດທ່າທາງຕາມຈິນຕະນາການປະກອບເລື່ອງທີ່ຄູເລົ່າ ລົມໂທລະສັບ, ເປີດປຶ້ມມາອ່ານ ແລະ ຂຽນໜັງສື ຢ່າງມ່ວນຊື່ນ.

## ກິດຈະກຳວົງມົນ

ເພື່ອໃຫ້ເດັກສາມາດ:

1. ບອກການສື່ສານ ດ້ວຍການສົນທະນາການໃຊ້ໂທລະສັບ, ດ້ວຍການຟັງ ແລະ ເບິ່ງ.
2. ຈຳແນກສຽງຄ່ອຍ, ສຽງດັງ.
3. ຮ້ອງເພງ ສຽງກິ່ງໂທລະສັບ ປະກອບທ່າທາງ.
4. ບອກຕົວເລກ 4 ແລະ ສະແດງຄ່າຈຳນວນ 1-4.
5. ອ່ານຮູບພາບໃນປຶ້ມນິທານ ແລະ ໜັງສືພິມ.
6. ເວົ້າເປັນຄຳຕາມຮູບພາບ: ໜັງສືພິມ, ປຶ້ມນິທານ, ໂທລະສັບ ແລະ ວິທະຍຸ.
7. ບອກການສື່ສານດ້ວຍການຂຽນ ແລະ ແຕ້ມຮູບຕາມໃຈສົ່ງໃຫ້ໝູ່.
8. ບອກຈຳນວນ ເທົ່າກັນ ແລະບໍ່ເທົ່າກັນ ຂອງຈຳນວນ1-4.

## ກິດຈະກຳສິລະປະສ້າງສັນ

ເພື່ອໃຫ້ເດັກສາມາດ:

1. ຂີດເສັ້ນຊື່ຕາມຮອຍຈ້ຳແຕ່ ຊ້າຍ ຫາ ຂວາ ໃສ່ ຕົວ ໆ, ນ ຖືກຕ້ອງ.
2. ຕັດ ແລະ ຕິດເຈ້ຍຮູບ ວົງມົນ, ສີ່ແຈ ເປັນຮູບລົດຖືກຕ້ອງ.
3. ແຕ້ມ ແລະ ທາສີຮູບຊົງເລຂາຄະນິດ: ຮູບວົງມົນ, ສາມແຈ ແລະ ສີ່ແຈຖືກຕ້ອງ.
4. ພັບເຈ້ຍເປັນກະເປົາສອງຫ້ອງຖືກຕ້ອງ.
5. ຈີກເຈ້ຍຮູບພາບ ໂທລະສັບຕາມຮອຍຈ້ຳຖືກຕ້ອງ.

## ກິດຈະກຳການຫຼິ້ນກາງແຈ້ງ

ເພື່ອໃຫ້ເດັກສາມາດ:

1. ຫຼິ້ນແບບຫຼິ້ນພື້ນເມືອງ ລູລີ່ເຂົ້າສານ ຢ່າງມ່ວນຊື່ນ ແລະ ປອດໄພ.
2. ຫຼິ້ນແບບຫຼິ້ນປະດິດສ້າງ ສິ່ງດອກໄມ້, ພາຍເຮືອບົກ, ລຳວົງຍາດຕັ່ງ ຢ່າງມ່ວນຊື່ນ ແລະ ປອດໄພ
3. ຫຼິ້ນເຄື່ອງຫຼິ້ນໃນເດີ່ນ: ລອດບ້ວງ, ຕະລູດ, ເຄື່ອງດ່າງ ຢ່າງມ່ວນຊື່ນ ແລະ ປອດໄພ.

## ກິດຈະກຳເກມການສຶກສາ

ເພື່ອໃຫ້ເດັກສາມາດ ຕໍ່ຮູບພາບຕາມແບບ ຮູບພາບ: ເດັກນ້ອຍນັ່ງສິນທະນາກັນ, ຮູບພາບ: ເດັກນ້ອຍນັ່ງເບິ່ງໂທລະພາບ, ຮູບພາບ: ໂທລະສັບ, ຮູບພາບ: ເດັກນ້ອຍນັ່ງອ່ານເບິ່ງປຶ້ມນິທານ, ຮູບພາບ: ເດັກນ້ອຍແຕ້ມຮູບຖືກຕ້ອງ.

## ກິດຈະກຳການຫຼິ້ນຕາມມຸມ

ເພື່ອໃຫ້ເດັກສາມາດ:

1. ຫຼິ້ນໃນມຸມສິລະປະສ້າງສັນຢ່າງມ່ວນຊື່ນ.
2. ຫຼິ້ນໃນມຸມອ່ານຢ່າງມ່ວນຊື່ນ.
3. ຫຼິ້ນໃນມຸມບົດບາດສົມມຸດຢ່າງມ່ວນຊື່ນ.
4. ຫຼິ້ນໃນມຸມເຄື່ອງຫຼິ້ນສຳຜັດຢ່າງມ່ວນຊື່ນ
5. ຫຼິ້ນໃນມຸມເກມການສຶກສາຢ່າງມ່ວນຊື່ນ.

# ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຮັດທ່າທາງຕາມຈິນຕະນາການ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ເຮັດທ່າທາງຕາມຈິນຕະນາການປະກອບເນື້ອໃນຄຳຄ່ອງ ຢ່າງມ່ວນຊື່ນ.

### II. ເນື້ອໃນຕົ້ນຕໍ

ການເຮັດທ່າທາງຕາມຈິນຕະນາການປະກອບເນື້ອໃນຄຳຄ່ອງ ໄຟອຳນາດ.

### III. ສື່ການຮຽນ-ການສອນ

1. ເຄື່ອງເຄາະຈັງຫວະ.
2. ບົດຄຳຄ່ອງ ໄຟອຳນາດ.
3. ການບໍລິຫານແອວ ແລະ ຂາ (ປື້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກບໍລິຫານແອວ ແລະ ຂາ.
2. ໃຫ້ເດັກແລ່ນລອດບ້ວງ ຕາມຫຼັງກັນ.
3. ຄູແນະນຳການເຮັດທ່າທາງຕາມຈິນຕະນາການປະກອບເນື້ອໃນຄຳຄ່ອງ ໄຟອຳນາດ.
4. ໃຫ້ເດັກປະຕິບັດຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນັ່ງລົງຫາຍໃຈເຂົ້າ, ອອກຊ້າໆ.
6. ໃຫ້ເດັກເວົ້າຄືນກ່ຽວກັບການເຮັດທ່າທາງທີ່ເດັກໄດ້ເຮັດ.
7. ສຶກສາອົບຮົມເດັກ ກ່ຽວກັບມາລະຍາດໃນເວລາເຮັດທ່າທາງຕາມຈິນຕະນາການປະກອບເນື້ອໃນຄຳຄ່ອງ.

### V. ການວັດ ແລະ ປະເມີນຜົນ

ສັງເກດການເຮັດທ່າທາງຕາມຈິນຕະນາການປະກອບເນື້ອໃນຄຳຄ່ອງ ຢ່າງມ່ວນຊື່ນ.

# ກິດຈະກຳວົງມົນ

## ຫົວຂໍ້: ສົນທະນາ

## I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ບອກການສື່ສານດ້ວຍການສົນທະນາ.
2. ການຈຳແນກສຽງຄ່ອຍ, ສຽງດັງ.
3. ຮ້ອງເພງ ສຽງກິ່ງໂທລະສັບ ປະກອບທ່າທາງ.

## II. ເນື້ອໃນຕົ້ນຕໍ

1. ການສື່ສານດ້ວຍການສົນທະນາ: ເວົ້າ ແລະ ລົມກັນ.
2. ການຈຳແນກສຽງເພງ: ສຽງຄ່ອຍ ແລະ ສຽງດັງ.
3. ການຮ້ອງເພງ ສຽງກິ່ງໂທລະສັບ ປະກອບທ່າທາງ.

## III. ສື່ການຮຽນ-ການສອນ

1. ຮູບພາບການລົມກັນລະຫວ່າງຄົນສອງຄົນ.
2. ບົດເພງ ສຽງກິ່ງໂທລະສັບ (ປຶ້ມຄູ່ມືຄູ).

## IV. ກິດຈະກຳການຮຽນ-ການສອນ

1. ຄູສົນທະນາກັບເດັກກ່ຽວກັບການສື່ສານ.
2. ໃຫ້ເດັກສັງເກດຮູບພາບ ແລະ ຄູສົນທະນາກັບເດັກກ່ຽວກັບຄົນສອງຄົນກຳລັງລົມກັນ.
3. ໃຫ້ເດັກຫັນໜ້າເຂົ້າຫາກັນເປັນຄູ່ໆ ແລ້ວເວົ້າລົມກັນຕາມໃຈ.
4. ໃຫ້ເດັກອອກມາບອກວ່າເຂົາເຈົ້າໄດ້ລົມກັນ ເລື່ອງຫຍັງ.
5. ຄູແນະນຳການສົນທະນາກັບເດັກ ກ່ຽວກັບການເວົ້າສຽງຄ່ອຍ, ເວົ້າສຽງດັງ.
6. ໃຫ້ເດັກຮ້ອງເພງ ສຽງກິ່ງໂທລະສັບ ປະກອບທ່າທາງ ແລະ ຄູສົນທະນາກັບເດັກກ່ຽວກັບເນື້ອໃນ ບົດເພງ.
7. ໃຫ້ເດັກເວົ້າຄືນກ່ຽວກັບການສົນທະນາ, ບອກສຽງຄ່ອຍ, ສຽງດັງ ແລະ ຮ້ອງເພງ.
8. ສຶກສາອົບຮົມເດັກ ກ່ຽວກັບການສົນທະນາ ເວລາລົມກັນບໍ່ເວົ້າດັງເກີນໄປ, ຕັ້ງໃຈຟັງຜູ້ອື່ນເວົ້າ ແລະ ເວົ້າຄຳ ທີ່ສຸພາບ.

## V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ການສື່ສານດ້ວຍການສົນທະນາ.
2. ການຈຳແນກສຽງຄ່ອຍ, ສຽງດັງ.
3. ການຮ້ອງເພງ ສຽງກິ່ງໂທລະສັບ ປະກອບທ່າທາງ.

# ກິດຈະກຳສິລະປະສ້າງສັນ

## ຫົວຂໍ້: ຂີດເສັ້ນຊື່

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ຂີດເສັ້ນຊື່ໃສ່ຫົວຕົວ ງ, ນ ຕາມຮອຍຈ້ຳແຕ່ຊ້າຍຫາຂວາຖືກຕ້ອງ.

### II. ເນື້ອໃນຕົ້ນຕໍ

ການຂີດເສັ້ນຊື່ໃສ່ຫົວຕົວ ງ, ນ ຕາມຮອຍຈ້ຳແຕ່ຊ້າຍຫາຂວາ.

### III. ສື່ການຮຽນ-ການສອນ

1. ສໍດຳ.
2. ປື້ມບົດເຝິກຫັດພາສາລາວ ເຫຼັ້ມທີ 2 ຫຼື ເຈ້ຍແບບຂີດເສັ້ນຊື່ໃສ່ຫົວຕົວ ງ, ນ ຕາມຮອຍຈ້ຳ ແຕ່ຊ້າຍຫາຂວາ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກເຮັດທ່າທາງຂີດເສັ້ນ ຢູ່ກາງຫາວ.
2. ຄູແນະນຳ, ສາທິດວິທີການຂີດເສັ້ນຊື່ໃສ່ຫົວຕົວ ງ, ນ ຕາມຮອຍຈ້ຳແຕ່ຊ້າຍຫາຂວາ ແລະ ການເກັບມ້ຽນ.
3. ໃຫ້ເດັກປະຕິບັດຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
4. ໃຫ້ເດັກນຳສະເໜີຜົນງານ.
5. ສຶກສາອົບຮົມເດັກ ໃຫ້ມີຄວາມອົດທົນ, ບໍ່ຂີດກັນ ແລະ ການເກັບມ້ຽນອຸປະກອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ຄວາມຖືກຕ້ອງໃນການຂີດເສັ້ນຊື່ໃສ່ຫົວຕົວ ງ, ນ ຕາມຮອຍຈ້ຳແຕ່ຊ້າຍຫາຂວາ.
2. ຄວາມເອົາໃຈໃສ່ ແລະ ຄວາມສາມັກຄີກັບໝູ່ເພື່ອນ.

# ກິດຈະກຳການຫຼິ້ນກາງແຈ້ງ

## ຫົວຂໍ້: ແບບຫຼິ້ນ ລູ່ລີ່ເຂົ້າສານ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ຫຼິ້ນແບບຫຼິ້ນພື້ນເມືອງ ລູ່ລີ່ເຂົ້າສານ ຢ່າງມ່ວນຊື່ນ ແລະ ປອດໄພ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນແບບຫຼິ້ນພື້ນເມືອງ ລູ່ລີ່ເຂົ້າສານ.

### III. ສື່ການຮຽນ-ການສອນ

1. ບົດຄຳຄ່ອງ ລູ່ລີ່ເຂົ້າສານ ແລະ ວິທີຫຼິ້ນ (ປື້ມຄູ່ມືຄູ).
2. ເຄື່ອງເຄາະຈັງຫວະ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກຍ່າງເປັນຮູບວົງມົນຕາມບາດເຄາະຊ້າ, ໄວ.
2. ຄູສາທິດ ວິທີຫຼິ້ນແບບຫຼິ້ນ ລູ່ລີ່ເຂົ້າສານ.
3. ໃຫ້ເດັກຫຼິ້ນຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
4. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນແບບຫຼິ້ນ ລູ່ລີ່ເຂົ້າສານ.
5. ສຶກສາອົບຮົມເດັກ ກ່ຽວການຄວາມປອດໄພ ໃນເວລາຫຼິ້ນແບບຫຼິ້ນ ລູ່ລີ່ເຂົ້າສານ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ການຫຼິ້ນແບບຫຼິ້ນພື້ນເມືອງ ລູ່ລີ່ເຂົ້າສານ ຢ່າງມ່ວນຊື່ນ ແລະ ປອດໄພ.

# ກິດຈະກຳເກມການສຶກສາ

## ຫົວຂໍ້: ເກມຕໍ່ຮູບພາບ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ຕໍ່ຮູບພາບ ຕາມແບບຖືກຕ້ອງ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນເກມຕໍ່ຮູບພາບ ເດັກນ້ອຍນັ່ງສົນທະນາກັນ.

### III. ສື່ການຮຽນ-ການສອນ

1. ເກມຕໍ່ຮູບພາບ ເດັກນ້ອຍນັ່ງສົນທະນາກັນ.
3. ບົດເພງ ສຽງກິ່ງໂທລະສັບ.
3. ເກມເກົ່າ ເກມຕໍ່ຮູບພາບ: ໄຟອຳນາດ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກຮ້ອງເພງ ສຽງກິ່ງໂທລະສັບ.
2. ຄູສະເໜີຊື່ເກມ.
3. ຄູສາທິດວິທີຫຼິ້ນເກມຕໍ່ຮູບພາບ ແລະ ແນະນຳເກັບມ້ຽນເກມ.
4. ໃຫ້ເດັກຫຼິ້ນເກມໃໝ່, ເກມເກົ່າ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນເກມ.
6. ສຶກສາອົບຮົມເດັກ ໃຫ້ມີຄວາມອົດທົນ, ການແບ່ງປັນ, ການລໍຖ້າ ແລະ ການເກັບມ້ຽນເກມ ໃຫ້ຖືກບ່ອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ຄວາມຖືກຕ້ອງໃນການຕໍ່ຮູບພາບ ຕາມແບບ.
2. ຄວາມເອົາໃຈໃສ່ຂອງເດັກ.
3. ຄວາມສາມັກຄີກັບໝູ່ເພື່ອນ.

# ກິດຈະກຳການຫຼິ້ນຕາມມຸມ

## ຫົວຂໍ້: ມຸມສິລະປະສ້າງສັນ ແລະ ມຸມອ່ານ

## I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ຫຼິ້ນໃນມຸມສິລະປະສ້າງສັນ ຢ່າງມ່ວນຊື່ນ.
2. ຫຼິ້ນໃນມຸມອ່ານ ຢ່າງມ່ວນຊື່ນ.

## II. ເນື້ອໃນຕົ້ນຕໍ

1. ການຫຼິ້ນໃນມຸມສິລະປະສ້າງສັນ: ຂີດເສັ້ນຊື່ຕາມຮອຍຈ້ຳແຕ່ຊ້າຍຫາຂວາ ໃສ່ຫົວຕົວ ງ, ນ.
2. ການຫຼິ້ນໃນມຸມອ່ານ: ເປີດປຶ້ມແຕ່ຂວາຫາຊ້າຍ ແລະ ອ່ານປຶ້ມຮູບພາບພາຫະນະ ໃນການເດີນທາງ

## III. ສື່ການຮຽນ-ການສອນ

1. ບົດເພງ ສຽງກິ່ງໂທລະສັບ.
2. ສໍດຳ, ປຶ້ມບົດເຝິກຫັດພາສາລາວ ເຫຼັ້ມ 2 ຫຼື ເຈ້ຍແບບຂີດເສັ້ນຕາມຮອຍຈ້ຳແຕ່ຊ້າຍຫາຂວາ ໃສ່ຫົວຕົວ ງ, ນ.
3. ປຶ້ມຮູບພາບພາຫະນະໃນການເດີນທາງ.
4. ບັດເຂົ້າມຸມຫຼິ້ນ.

## IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກຮ້ອງເພງ ສຽງກິ່ງໂທລະສັບ.
2. ຄູແນະນຳວິທີຫຼິ້ນຕາມມຸມສິລະປະສ້າງສັນ, ມຸມອ່ານ ແລະ ການເກັບມ້ຽນ.
3. ໃຫ້ເດັກເລືອກບັດເຂົ້າຫຼິ້ນຕາມມຸມ.
4. ໃຫ້ເດັກເຂົ້າຫຼິ້ນຕາມມຸມ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເວົ້າຄືນກ່ຽວກັບການເຂົ້າຫຼິ້ນຕາມມຸມ.
6. ສຶກສາອົບຮົມເດັກ ໃຫ້ມີຄວາມອົດທົນ, ການແບ່ງປັນ, ການລໍຖ້າ ແລະ ການເກັບມ້ຽນເຄື່ອງຫຼິ້ນໃຫ້ຖືກບ່ອນ.

## V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ການຫຼິ້ນໃນມຸມສິລະປະສ້າງສັນ ຢ່າງມ່ວນຊື່ນ.
2. ການຫຼິ້ນໃນມຸມອ່ານ ຢ່າງມ່ວນຊື່ນ.

# ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຮັດທ່າທາງຕາມຈັງຫວະ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ເຮັດທ່າທາງຕາມຈັງຫວະເພງ ຢ່າງມ່ວນຊື່ນ.

### II. ເນື້ອໃນຕົ້ນຕໍ

ການເຮັດທ່າງຕາມຈັງຫວະເພງ ສຽງກິ່ງໂທລະສັບ.

### III. ສື່ການຮຽນ-ການສອນ

1. ເຄື່ອງເຄາະຈັງຫວະ.
2. ບົດເພງ ສຽງກິ່ງໂທລະສັບ.
3. ການບໍລິຫານມື ແລະ ຂາ (ປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກບໍລິຫານມື ແລະ ຂາ.
2. ໃຫ້ເດັກຍ່າງເປັນແຖວຊື່ ຕາມຫຼັງກັນ.
3. ຄູແນະນຳການເຮັດທ່າທາງຕາມຈັງຫວະເພງ ສຽງກິ່ງໂທລະສັບ.
4. ໃຫ້ເດັກປະຕິບັດຕົວຈິງ ແລະ ຄູຕິດຊ່ວຍເຫຼືອ.
5. ໃຫ້ເດັກເຮັດທ່າທາງລົມພັດໄປ, ມາຄ່ອຍໆ.
6. ໃຫ້ເດັກເວົ້າຄືນກ່ຽວກັບການເຮັດທ່າທາງທີ່ເດັກໄດ້ເຮັດ.
7. ສຶກສາອົບຮົມເດັກ ກ່ຽວກັບຄວາມປອດໄພ ໃນເວລາເຮັດທ່າທາງຕາມຈັງຫວະເພງ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ການເຮັດທ່າທາງຕາມຈັງຫວະເພງ ຢ່າງມ່ວນຊື່ນ.

# ກິດຈະກຳວົງມົນ

## ຫົວຂໍ້: ຟັງ ແລະ ເບິ່ງ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ບອກການສື່ສານດ້ວຍການຟັງ ແລະ ເບິ່ງ.
2. ບອກຕົວເລກ 4 ແລະ ສະແດງຄ່າຈຳນວນ 1-4.

### II. ເນື້ອໃນຕົ້ນຕໍ

1. ການສື່ສານດ້ວຍການຟັງ ແລະ ເບິ່ງ: ຟັງວິທະຍຸ, ຟັງຄົນອື່ນເວົ້າ ແລະ ເບິ່ງໂທລະພາບ.
2. ຕົວເລກ 4 ແລະ ສະແດງຄ່າຈຳນວນແຕ່ 1-4.

### III. ສື່ການຮຽນ-ການສອນ

1. ຮູບພາບ: ວິທະຍຸ, ໂທລະພາບ ຫຼື ຂອງຈິງ.
2. ຮູບພາບ: ຄົນ 2 ຄົນລົມກັນ.
3. ບັດຕົວເລກ 1-4.
4. ປູ໊ອກ 10 ອັນ.
5. ບົດເພງ ສຽງກິ່ງໂທລະສັບ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກຮ້ອງເພງ ສຽງກິ່ງໂທລະສັບ ປະກອບທ່າທາງ.
2. ໃຫ້ເດັກສັງເກດຮູບພາບວິທະຍຸ, ໂທລະພາບ ຫຼືຂອງຈິງ ແລະ ຄູສົນທະນາກັບເດັກກ່ຽວກັບການສື່ສານ.
3. ໃຫ້ເດັກທົດລອງເປີດວິທະຍຸ ແລະ ໂທລະພາບ (ຖ້າມີ).
4. ໃຫ້ເດັກປິ່ນໜ້າໃສ່ກັນ ເປັນຄູ່ ເພື່ອລົມກັນ (ຟັງ) ແລະ ບອກການສື່ສານດ້ວຍການຟັງ ແລະ ເບິ່ງ.
5. ໃຫ້ເດັກບອກຕົວເລກ 4 ແລະ ສະແດງຕົວເລກແຕ່ 1-4.
6. ໃຫ້ເດັກເວົ້າຄືນກ່ຽວກັບການສື່ສານດ້ວຍການຟັງ, ເບິ່ງ ແລະ ບອກຕົວເລກ 4 ສະແດງຄ່າຈຳນວນ 1-4.
7. ສຶກສາອົບຮົມເດັກ ກ່ຽວກັບການຕັ້ງໃຈຟັງຄົນອື່ນເວົ້າ, ຟັງວິທະຍຸ ແລະ ເບິ່ງໂທລະພາບເປັນເວລາ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ການບອກ ການສື່ສານດ້ວຍການຟັງ ແລະ ເບິ່ງ.
2. ການບອກຕົວເລກ 4 ແລະ ສະແດງຄ່າຈຳນວນ 1-4.

# ກິດຈະກຳສິລະປະສ້າງສັນ

## ຫົວຂໍ້: ຕັດ ແລະ ຕິດເຈ້ຍ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ຕັດ ແລະ ຕິດເຈ້ຍຮູບສີ່ແຈ ແລະ ວົງມົນ ເປັນຮູບລົດຖືກຕ້ອງ.

### II. ເນື້ອໃນຕົ້ນຕໍ

ການຕັດ ແລະ ຕິດເຈ້ຍຮູບສີ່ແຈ ແລະ ວົງມົນ ເປັນຮູບລົດ.

### III. ສື່ການຮຽນ-ການສອນ

1. ມີດຕັດ.
2. ເຈ້ຍຮູບສີ່ແຈ ແລະ ວົງມົນ
3. ເຈ້ຍ ແລະ ໄມ້ທາກາວ, ກາວ ຫຼື ກາວເຂົ້າໜຽວຕົ້ມ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກເຮັດທ່າທາງຕັດເຈ້ຍ ຢູ່ກາງຫາວ.
2. ຄູແນະນຳ, ສາທິດວິທີຕັດ ແລະ ຕິດເຈ້ຍຮູບສີ່ແຈ, ວົງມົນ ເປັນຮູບລົດ ແລະ ການເກັບມ້ຽນ.
3. ໃຫ້ເດັກປະຕິບັດຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
4. ໃຫ້ເດັກນຳສະເໜີຜົນງານ.
5. ສຶກສາອົບຮົມເດັກ ໃຫ້ມີຄວາມອົດທົນ ແລະ ການເກັບມ້ຽນອຸປະກອນໄວ້ບ່ອນທີ່ກຳນົດພາຍຫຼັງການນຳໃຊ້.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ຄວາມເອົາໃຈໃນການຕັດ ແລະ ຕິດເຈ້ຍຮູບຕ່າງໆ.
2. ຄວາມສາມັກຄີ ແລະ ຄວາມປອດໄພໃນການຕັດ ແລະ ຕິດ.
3. ຄວາມຖືກຕ້ອງໃນການຕັດ ແລະ ຕິດ.

# ກິດຈະກໍາການຫຼິ້ນກາງແຈ້ງ

## ຫົວຂໍ້: ແບບຫຼິ້ນ ສິ່ງດອກໄມ້

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ຫຼິ້ນແບບຫຼິ້ນປະດິດສ້າງ ສິ່ງດອກໄມ້ ຢ່າງມ່ວນຊື່ນ ແລະ ປອດໄພ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນແບບຫຼິ້ນປະດິດສ້າງ ສິ່ງດອກໄມ້.

### III. ສື່ການຮຽນ-ການສອນ

1. ດອກໄມ້.
2. ເຄື່ອງເຄາະຈັງຫວະ.
3. ບົດເພງ ຂັບລົດນ້ອຍ.
4. ວິທີຫຼິ້ນ (ປຶ້ມຄູ່ມືຄູ).

### IV. ກິດຈະກໍາການຮຽນ-ການສອນ

1. ໃຫ້ເດັກຍ່າງເປັນຮູບວົງມົນ ພ້ອມທັງຕົບມືຮ້ອງເພງ ຂັບລົດນ້ອຍ.
2. ຄູສາທິດ ວິທີຫຼິ້ນແບບຫຼິ້ນ ສິ່ງດອກໄມ້.
3. ໃຫ້ເດັກຫຼິ້ນຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
4. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນແບບຫຼິ້ນ ສິ່ງດອກໄມ້.
5. ສຶກສາອົບຮົມເດັກ ກ່ຽວກັບຄວາມປອດໄພ ໃນເວລາຫຼິ້ນແບບຫຼິ້ນ ສິ່ງດອກໄມ້.

### V. ການວັດ ແລະ ປະເມີນຜົນ

ສັງເກດການຫຼິ້ນແບບຫຼິ້ນປະດິດສ້າງ ສິ່ງດອກໄມ້ ຢ່າງມ່ວນຊື່ນ ແລະ ປອດໄພ.

# ກິດຈະກຳເກມການສຶກສາ

## ຫົວຂໍ້: ເກມຕໍ່ຮູບພາບ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ຕໍ່ຮູບພາບ ຕາມແບບຖືກຕ້ອງ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນເກມຕໍ່ຮູບພາບ ເດັກນ້ອຍນັ່ງເບິ່ງໂທລະພາບ.

### III. ສື່ການຮຽນ-ການສອນ

1. ເກມຕໍ່ຮູບພາບ ເດັກນ້ອຍນັ່ງເບິ່ງໂທລະພາບ.
2. ເກມເກົ່າ ເກມຕໍ່ຮູບພາບ ເດັກນ້ອຍນັ່ງສົນທະນາກັນ.

### IV. ກິດຈະກຳການຮຽນ-ການສອນ

1. ຄູສົນທະນາກັບເດັກກ່ຽວກັບການເບິ່ງໂທລະພາບ.
2. ຄູສະເໜີຊື່ເກມ.
3. ຄູສາທິດວິທີຫຼິ້ນເກມຕໍ່ຮູບພາບ ແລະ ແນະນຳການເກັບມ້ຽນເກມ.
4. ໃຫ້ເດັກຫຼິ້ນເກມໃໝ່, ເກມເກົ່າ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນເກມ.
6. ສຶກສາອົບຮົມເດັກ ໃຫ້ມີຄວາມອົດທົນ, ການແບ່ງປັນ, ການລໍຖ້າ ແລະ ການເກັບມ້ຽນເກມໃຫ້ຖືກບ່ອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ຄວາມຖືກຕ້ອງໃນການຕໍ່ຮູບພາບ ຕາມແບບ.
2. ຄວາມເອົາໃຈໃສ່ຂອງເດັກ.
3. ຄວາມສາມັກຄີກັບໝູ່ເພື່ອນ.

# ກິດຈະກຳການຫຼິ້ນຕາມມຸມ

## ຫົວຂໍ້: ມຸມບົດບາດສົມມຸດ ແລະ ມຸມອ່ານ

## I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ຫຼິ້ນໃນມຸມບົດບາດສົມມຸດ ຢ່າງມ່ວນຊື່ນ.
2. ຫຼິ້ນໃນມຸມອ່ານ ຢ່າງມ່ວນຊື່ນ.

## II. ເນື້ອໃນຕົ້ນຕໍ

1. ການຫຼິ້ນໃນມຸມບົດບາດສົມມຸດ: ການລົມໂທລະສັບກັບເພື່ອນ ແລະ ການແບ່ງປັນສິ່ງຂອງໃຫ້ໝູ່ເພື່ອນ.
2. ການຫຼິ້ນໃນມຸມອ່ານ: ເປີດປຶ້ມແຕ່ຂວາຫາຊ້າຍ ແລະ ອ່ານປຶ້ມຮູບພາບການສື່ສານ.

## III. ສື່ການຮຽນ-ການສອນ

1. ໂທລະສັບປະດິດ ຫຼື ຂອງຈິງ.
2. ປຶ້ມຮູບພາບການສື່ສານ.
3. ບັດເຂົ້າມຸມຫຼິ້ນ.

## IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກຕົບມື ແລະ ນັບເລກປາກເປົ່າ 1-8.
2. ຄູແນະນຳວິທີຫຼິ້ນຕາມມຸມບົດບາດສົມມຸດ, ມຸມອ່ານ ແລະ ການເກັບມ້ຽນ.
3. ໃຫ້ເດັກເລືອກບັດເຂົ້າຫຼິ້ນຕາມມຸມ.
4. ໃຫ້ເດັກເຂົ້າຫຼິ້ນຕາມມຸມ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເວົ້າຄືນກ່ຽວກັບການເຂົ້າຫຼິ້ນຕາມມຸມ.
6. ສຶກສາອົບຮົມເດັກ ໃຫ້ມີຄວາມອົດທົນ, ການແບ່ງປັນ, ການລໍຖ້າ ແລະ ການເກັບມ້ຽນເຄື່ອງຫຼິ້ນໃຫ້ຖືກບ່ອນ.

## V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ການຫຼິ້ນໃນມຸມບົດບາດສົມມຸດ ຢ່າງມ່ວນຊື່ນ.
2. ການຫຼິ້ນໃນມຸມອ່ານ ຢ່າງມ່ວນຊື່ນ.

# ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຮັດທ່າທາງຕາມຂໍ້ຕົກລົງ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ເຮັດທ່າທາງຕາມຂໍ້ຕົກລົງຖືກຕ້ອງ ແລະ ມ່ວນຊື່ນ.

### II. ເນື້ອໃນຕົ້ນຕໍ

ການເຮັດທ່າທາງຕາມຂໍ້ຕົກລົງ: ເຄາະ 1 ບາດ ເຮັດທ່າທາງລົມໂທລະສັບ, ເຄາະ 2 ບາດ ເຮັດທ່າທາງອ່ານປຶ້ມ ແລະ ເຄາະ 3 ບາດ ເຮັດທ່າທາງທາສີຮູບ.

### III. ສື່ການຮຽນ-ການສອນ

1. ເຄື່ອງເຄາະຈັງຫວະ.
2. ການບໍລິຫານຂາ ແລະ ແຂນ (ປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກບໍລິຫານຂາ ແລະ ແຂນ.
2. ໃຫ້ເດັກຍ່າງເຢ່ງເຢ້ຕາມຫຼັງກັນ.
3. ຄູສາທິດການເຮັດທ່າທາງຕາມຂໍ້ຕົກລົງ: ເຄາະ 1 ບາດ ເຮັດທ່າທາງລົມໂທລະສັບ, ເຄາະ 2 ບາດ ເຮັດທ່າທາງອ່ານປຶ້ມ ແລະ ເຄາະ 3 ບາດ ເຮັດທ່າທາງທາສີຮູບ.
4. ໃຫ້ເດັກປະຕິບັດຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນັ່ງລົງຢຽດຂາອອກ ເອົາສອງມືບີບຂາຄ່ອຍໆ.
6. ໃຫ້ເດັກເວົ້າຄືນ ກ່ຽວກັບການເຮັດທ່າທາງທີ່ເດັກໄດ້ເຮັດ.
7. ສຶກສາອົບຮົມເດັກ ກ່ຽວກັບການລະມັດລະວັງ ໃນເວລາຍ່າງ ແລະ ການເຮັດທ່າທາງຕາມຂໍ້ຕົກລົງ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ຄວາມກ້າຫານໃນການເຮັດທ່າທາງຕາມຂໍ້ຕົກລົງ.
2. ຄວາມເບີກບານຂອງເດັກ.
3. ຄວາມຖືກຕ້ອງຂອງການປະຕິບັດຕາມຂໍ້ຕົກລົງ.

# ກິດຈະກຳວົງມົນ

## ຫົວຂໍ້: ອ່ານ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ອ່ານຮູບພາບໃນປຶ້ມນິທານ ແລະ ໜັງສືພິມ.
2. ເວົ້າເປັນຄຳຕາມຮູບພາບ: ໜັງສືພິມ ແລະ ປຶ້ມນິທານ.

### II. ເນື້ອໃນຕົ້ນຕໍ

1. ການອ່ານຮູບພາບໃນປຶ້ມນິທານ ແລະ ໜັງສືພິມໂດຍ ການເປີດປຶ້ມແຕ່ຂວາຫາຊ້າຍ.
2. ການເວົ້າເປັນຄຳຕາມຮູບພາບ: ໜັງສືພິມ ແລະ ປຶ້ມນິທານ.

### III. ສື່ການຮຽນ-ການສອນ

1. ປຶ້ມຮູບພາບການສື່ສານ, ປຶ້ມນິທານ, ໜັງສືພິມ ແລະ ຫຸ່ນມື.
2. ບົດຄຳຄ່ອງ ໄຟອຳນາດ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກເລົ່າຄຳຄ່ອງ ໄຟອຳນາດ ປະກອບທ່າທາງ.
2. ຄູໃຊ້ຫຸ່ນມືສົນທະນາ ແລະ ແນະນຳກ່ຽວກັບການເປີດເບິ່ງຮູບພາບໃນປຶ້ມນິທານ ແລະ ໜັງສືພິມ.
3. ໃຫ້ເດັກຝຶກປະຕິບັດການເປີດປຶ້ມເບິ່ງຮູບ, ໜັງສືພິມ.
4. ໃຫ້ເດັກເວົ້າເປັຄຳຕາມຮູບພາບ: ໜັງສືພິມ ແລະ ປຶ້ມນິທານ.
5. ໃຫ້ເດັກເວົ້າຄືນການເຝິກປະຕິບັດການເປີດປຶ້ມ ແລະ ເວົ້າເປັນຄຳຕາມຮູບພາບ.
6. ສຶກສາອົບຮົມເດັກ ກ່ຽວກັບການເປີດປຶ້ມໃຫ້ຖືກຕ້ອງ, ບໍ່ຈີກປຶ້ມ, ໜັງສືພິມ ແລະ ການເກັບມ້ຽນໄວ້ບ່ອນເກົ່າ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ການອ່ານຮູບພາບໃນປຶ້ມນິທານ ແລະ ໜັງສືພິມ.
2. ການເວົ້າເປັນຄຳຕາມຮູບພາບ: ໜັງສືພິມ ແລະ ປຶ້ມນິທານ.

# ກິດຈະກຳສິລະປະສ້າງສັນ

## ຫົວຂໍ້: ແຕ້ມ ແລະ ທາສີຮູບພາບ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ແຕ້ມ ແລະ ທາສີຮູບເລຂາຄະນິດ: ຮູບວົງມົນ, ສາມແຈ ແລະ ສີ່ແຈ ຖືກຕ້ອງ.

### II. ເນື້ອໃນຕົ້ນຕໍ

ການແຕ້ມ ແລະ ທາສີຮູບເລຂາຄະນິດ: ຮູບວົງມົນສີແດງ, ສາມແຈສີເຫຼືອງ ແລະ ສີ່ແຈສີຂຽວ.

### III. ສື່ການຮຽນ-ການສອນ

1. ຮູບວົງມົນ, ສາມແຈ ແລະ ຮູບສີ່ແຈ.
2. ສໍດຳ, ສໍສີໄມ້ ຫຼື ສໍສີທຽນ: ສີແດງ, ເຫຼືອງ ແລະ ຂຽວ.
3. ເຈ້ຍ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກສັ່ນຄໍ່ມື ແລະ ດີດນີ້ວມື.
2. ຄູແນະນຳ, ສາທິດການແຕ້ມ, ທາສີຮູບ ແລະ ການເກັບມ້ຽນ.
3. ໃຫ້ເດັກປະຕິບັດຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
4. ໃຫ້ເດັກນຳສະເໜີຜົນງານ.
5. ສຶກສາອົບຮົມເດັກ ໃຫ້ມີຄວາມອົດທົນ, ບໍ່ຍືດກັນ ແລະ ການມ້ຽນອຸປະກອນໄວ້ບ່ອນທີ່ກຳນົດ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ຄວາມຖືກຕ້ອງໃນການແຕ້ມ ແລະ ທາສີຮູບເລຂາຄະນິດ: ຮູບວົງມົນ, ສາມແຈ ແລະ ສີ່ແຈ.
2. ຄວາມເອົາໃຈໃສ່ຂອງເດັກ.

# ກິດຈະກຳການຫຼິ້ນກາງແຈ້ງ

## ຫົວຂໍ້: ແບບຫຼິ້ນ ລຳວົງຍາດຕັ່ງ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ຫຼິ້ນແບບຫຼິ້ນປະດິດສ້າງ ລຳວົງຍາດຕັ່ງ ຢ່າງມ່ວນຊື່ນ ແລະ ປອດໄພ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນແບບຫຼິ້ນປະດິດສ້າງ ລຳວົງຍາດຕັ່ງ.

### III. ສື່ການຮຽນ-ການສອນ

1. ວິທີຫຼິ້ນ (ປຶ້ມຄູ່ມືຄູ).
2. ເຄື່ອງເຄາະຈັງຫວະ.
3. ຕັ່ງຕາມຈຳນວນເດັກຫຼິ້ນ.
4. ບົດເພງ ທີ່ເຄີຍຮຽນຜ່ານມາ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກໝູນບ່າ ແລະ ໝູນຫົວເຂົ່າ.
2. ຄູແນະນຳວິທີຫຼິ້ນແບບຫຼິ້ນ ລຳວົງຍາດຕັ່ງ.
3. ໃຫ້ເດັກຫຼິ້ນຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
4. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນແບບຫຼິ້ນ ລຳວົງຍາດຕັ່ງ.
5. ສຶກສາອົບຮົມເດັກ ກ່ຽວກັບຄວາມປອດໄພ ໃນເວລາຫຼິ້ນແບບຫຼິ້ນ ລຳວົງຍາດຕັ່ງ.

### V. ການວັດ ແລະ ປະເມີນຜົນ

ສັງເກດການຫຼິ້ນແບບຫຼິ້ນປະດິດສ້າງ ລຳວົງຍາດຕັ່ງ ຢ່າງມ່ວນຊື່ນ ແລະ ປອດໄພ.

# ກິດຈະກຳເກມການສຶກສາ

## ຫົວຂໍ້: ເກມຕໍ່ຮູບພາບ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ຕໍ່ຮູບພາບ ຕາມແບບຖືກຕ້ອງ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນເກມຕໍ່ຮູບພາບ ເດັກນ້ອຍນັ່ງເບິ່ງປຶ້ມນິທານ.

### III. ສື່ການຮຽນ-ການສອນ

1. ເກມຕໍ່ຮູບພາບ ເດັກນ້ອຍນັ່ງເບິ່ງປຶ້ມນິທານ.
2. ເກມເກົ່າ ເກມຕໍ່ຮູບພາບ ເດັກນ້ອຍນັ່ງເບິ່ງໂທລະພາບ.
3. ບົດເພງ ສຽງກິ່ງໂທລະສັບ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກຮ້ອງເພງ ສຽງກິ່ງໂທລະສັບ.
2. ຄູສະເໜີຊື່ເກມ.
3. ຄູສາທິດວິທີຫຼິ້ນເກມຕໍ່ຮູບພາບ ແລະ ແນະນຳການເກັບມ້ຽນເກມ.
4. ໃຫ້ເດັກຫຼິ້ນເກມໃໝ່, ເກມເກົ່າ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນເກມ.
6. ສຶກສາອົບຮົມເດັກ ໃຫ້ມີຄວາມອົດທົນ, ການແບ່ງປັນ, ການລໍຖ້າ ແລະ ການເກັບມ້ຽນເກມໃຫ້ຖືກບ່ອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ຄວາມຖືກຕ້ອງໃນການຕໍ່ຮູບພາບ ຕາມແບບ.
2. ຄວາມສົນໃຈ ແລະ ຄວາມສາມັກຄີກັບໝູ່ເພື່ອນ.

# ກິດຈະກຳການຫຼິ້ນຕາມມຸມ

## ຫົວຂໍ້: ມຸມເຄື່ອງຫຼິ້ນສຳຜັດ ແລະ ມຸມອ່ານ

## I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ຫຼິ້ນໃນມຸມເຄື່ອງຫຼິ້ນສຳຜັດ ຢ່າງມ່ວນຊື່ນ.
2. ຫຼິ້ນໃນມຸມອ່ານ ຢ່າງມ່ວນຊື່ນ.

## II. ເນື້ອໃນຕົ້ນຕໍ

1. ການຫຼິ້ນໃນມຸມເຄື່ອງຫຼິ້ນສຳຜັດ: ຕໍ່ບ້ອກເປັນຮູບຊົງຕ່າງໆ. ຕີກອງ, ສັ່ນກະແຊັກ ແລະ ເຄາະກະປ໋ອງ.
2. ການຫຼິ້ນໃນມຸມອ່ານ: ເປີດປື້ມເບິ່ງຮູບໃນປື້ມນິທານ ແລະ ໜັງສືພິມ.

## III. ສື່ການຮຽນ-ການສອນ

1. ໄມ້ບ້ອກ ຫຼື ບ້ອກປຼາສະຕິກ.
2. ກອງ, ກະແຊັກ ແລະ ກະປ໋ອງ.
3. ບັດເຂົ້າມຸມຫຼິ້ນ.
4. ປື້ມນິທານ ແລະ ໜັງສືພິມ.

## IV. ກິດຈະກຳການຮຽນ-ການສອນ

1. ຄູສົນທະນາກັບເດັກກ່ຽວກັບມຸມທີ່ເຄີຍຫຼິ້ນ.
2. ຄູແນະນຳວິທີຫຼິ້ນຕາມມຸມເຄື່ອງຫຼິ້ນສຳຜັດ, ມຸມອ່ານ ແລະ ການເກັບມ້ຽນ.
3. ໃຫ້ເດັກເລືອກບັດເຂົ້າຫຼິ້ນຕາມມຸມ.
4. ໃຫ້ເດັກເຂົ້າຫຼິ້ນຕາມມຸມ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເວົ້າຄືນກ່ຽວກັບການເຂົ້າຫຼິ້ນຕາມມຸມ.
6. ສຶກສາອົບຮົມເດັກ ໃຫ້ມີຄວາມອົດທົນ, ການແບ່ງປັນ, ການລໍຖ້າ ແລະ ການເກັບມ້ຽນເຄື່ອງຫຼິ້ນໃຫ້ຖືກບ່ອນ.

## V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ການຫຼິ້ນໃນມຸມເຄື່ອງຫຼິ້ນສຳຜັດ ຢ່າງມ່ວນຊື່ນ.
2. ການຫຼິ້ນໃນມຸມອ່ານ ຢ່າງມ່ວນຊື່ນ.

# ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຮັດທ່າທາງເປັນຜູ້ນຳ, ຜູ້ຕາມ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ເຮັດທ່າທາງເປັນຜູ້ນຳ, ຜູ້ຕາມຖືກຕ້ອງ ແລະ ມ່ວນຊື່ນ.

### II. ເນື້ອໃນຕົ້ນຕໍ

ການເຮັດທ່າທາງເປັນຜູ້ນຳ, ຜູ້ຕາມ: ລົມໂທລະສັບ, ນັ່ງເບິ່ງໂທລະພາບ ແລະ ອ່ານໜັງສືພິມ.

### III. ສື່ການຮຽນ-ການສອນ

1. ເຄື່ອງເຄາະຈັງຫວະ.
2. ການບໍລິຫານຂ້າງ (ປື້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກບໍລິຫານຂ້າງ.
2. ໃຫ້ເດັກຍ່າງວາແຂນຕາມເສັ້ນຊື່.
3. ຄູສາທິດການເຮັດທ່າທາງເປັນຜູ້ນຳ, ຜູ້ຕາມ: ລົມໂທລະສັບ, ນັ່ງເບິ່ງໂທລະພາບ ແລະ ອ່ານໜັງສືພິມ.
4. ໃຫ້ເດັກປະຕິບັດຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເຮັດທ່າທາງລົມພັດ ໄປ, ມາຄ່ອຍໆ.
6. ໃຫ້ເດັກເວົ້າຄືນກ່ຽວກັບການເຮັດເປັນຜູ້ນຳ, ຜູ້ຕາມ.
7. ສຶກສາອົບຮົມເດັກ ກ່ຽວກັບຄວາມປອດໄພ ແລະ ມາລະຍາດໃນເວລາເຮັດທ່າທາງເປັນຜູ້ນຳ, ຜູ້ຕາມ.

### V. ການວັດ ແລະ ປະເມີນຜົນ

ສັງເກດການເຮັດທ່າທາງເປັນຜູ້ນຳ, ຜູ້ຕາມຖືກຕ້ອງ ແລະ ມ່ວນຊື່ນ.

# ກິດຈະກຳວົງມົນ

## ຫົວຂໍ້: ເວົ້າ ແລະ ຟັງ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ບອກການສື່ສານດ້ວຍການໃຊ້ໂທລະສັບ.
2. ເວົ້າເປັນຄຳຕາມຮູບພາບ: ໂທລະສັບ ແລະ ວິທະຍຸ

### II. ເນື້ອໃນຕົ້ນຕໍ

1. ການສື່ສານດ້ວຍໂທລະສັບ.
2. ການເວົ້າເປັນຄຳຕາມຮູບພາບ: ໂທລະສັບ ແລະ ວິທະຍຸ.

### III. ສື່ການຮຽນ-ການສອນ

1 ບົດເພງ ສຽງກິ່ງໂທລະສັບ.
2. ໂທລະສັບປະດິດດ້ວຍປ່ອງນົມແລະສາຍເຊືອກ ຫຼື ໂທລະສັບຈິງ.
3. ຮູບພາບ: ໂທລະສັບ ແລະ ວິທະຍຸ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກຮ້ອງເພງ ສຽງກິ່ງໂທລະສັບ ປະກອບທ່າທາງ.
2. ໃຫ້ເດັກຫຼິ້ນເກມການສື່ສານ (ຊື່ມຄຳວ່າ: ໂທລະສັບ).
3. ໃຫ້ເດັກທົດລອງລົມໂທລະສັບຫາກັນ ແລະ ບອກສິ່ງທີ່ໄດ້ຍິນໝູ່ເວົ້າທາງໂທລະສັບ.
4. ໃຫ້ເດັກເວົ້າເປັນຄຳຕາມຮູບພາບ: ໂທລະສັບ ແລະ ວິທະຍຸ.
5. ໃຫ້ເດັກເວົ້າຄືນກ່ຽວກັບການສື່ສານດ້ວຍໂທລະສັບ ແລະ ເວົ້າເປັນຄຳ ຕາມຮູບພາບ.
6. ສຶກສາອົບຮົມເດັກ ກ່ຽວກັບການເວົ້າ ແລະ ຟັງ: ຕັ້ງໃຈຟັງເວລາຜູ້ອື່ນເວົ້າ ແລະ ບໍ່ເວົ້າຕັດຄວາມຜູ້ເວົ້າ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ການສື່ສານດ້ວຍການໃຊ້ໂທລະສັບ.
2. ການເວົ້າເປັນຄຳຕາມຮູບພາບ: ໂທລະສັບ ແລະ ວິທະຍຸ.

# ກິດຈະກຳສິລະປະສ້າງສັນ

## ຫົວຂໍ້: ພັບເຈ້ຍ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ພັບເຈ້ຍເປັນກະເປົ໋າສອງຫ້ອງຖືກຕ້ອງ.

### II. ເນື້ອໃນຕົ້ນຕໍ

ການພັບເຈ້ຍເປັນກະເປົ໋າສອງຫ້ອງ.

### III. ສື່ການຮຽນ-ການສອນ

ເຈ້ຍສີ່ແຈ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກສັ່ນຄໍ່ມື ແລະ ດີດນິ້ວມື.
2. ຄູແນະນຳ, ສາທິດການພັບເຈ້ຍເປັນກະເປົ໋າສອງຫ້ອງ ແລະ ການເກັບມ້ຽນ.
3. ໃຫ້ເດັກປະຕິບັດຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
4. ໃຫ້ເດັກນຳສະເໜີຜົນງານ.
5. ສຶກສາອົບຮົມເດັກ ໃຫ້ມີຄວາມອົດທົນ, ບໍ່ຈີກເຈ້ຍຖິ່ມທົ່ວທີບ ແລະ ການເກັບມ້ຽນອຸປະກອນໄວ້ບ່ອນທີ່ກຳນົດ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ຄວາມຖືກຕ້ອງໃນການພັບເຈ້ຍເປັນກະເປົ໋າສອງຫ້ອງ.
2. ຄວາມເອົາໃຈໃສ່ຂອງເດັກ.

# ກິດຈະກຳການຫຼິ້ນກາງແຈ້ງ

## ຫົວຂໍ້: ເຄື່ອງຫຼິ້ນໃນເດີ່ນ

## I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ຫຼິ້ນເຄື່ອງຫຼິ້ນໃນເດີ່ນ ຢ່າງມ່ວນຊື່ນ ແລະ ປອດໄພ.

## II. ເນື້ອໃນຕົ້ນຕໍ

ການຫຼິ້ນເຄື່ອງຫຼິ້ນ: ຫຼິ້ນລອດບ້ວງ, ຕະລູດ ແລະ ເດື່ອງດ່າງ.

## III. ສື່ການຮຽນ-ການສອນ

1. ບ້ວງລອດ, ຕະລູດ ແລະ ເດື່ອງດ່າງ ຫຼື ເຄື່ອງຫຼິ້ນທີ່ມີໃນທ້ອງຖິ່ນ.
2. ເຄື່ອງເຄາະຈັງຫວະ.

## IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກຍ່າງເປັນຮູບວົງມົນຕາມບາດເຄາະຊ້າ, ໄວ.
2. ຄູແນະນຳວິທີຫຼິ້ນລອດບ້ວງ, ຕະລູດ ແລະ ເດື່ອງດ່າງ.
3. ໃຫ້ເດັກຫຼິ້ນຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
4. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນລອດບ້ວງ, ຕະລູດ ແລະ ເດື່ອງດ່າງ.
5. ສຶກສາອົບຮົມເດັກ ກ່ຽວກັບຄວາມປອດໄພ ໃນເວລາຫຼິ້ນລອດບ້ວງ, ຕະລູດ ແລະ ເດື່ອງດ່າງ.

## V. ການວັດ ແລະ ປະເມີນຜົນ

ສັງເກດ ການຫຼິ້ນເຄື່ອງຫຼິ້ນໃນເດີ່ນ ຢ່າງມ່ວນຊື່ນ ແລະ ປອດໄພ.

# ກິດຈະກຳເກມການສຶກສາ

## ຫົວຂໍ້: ເກມຕໍ່ຮູບພາບ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ຕໍ່ຮູບພາບ ຕາມແບບຖືກຕ້ອງ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນເກມຕໍ່ຮູບພາບ ໂທລະສັບ.

### III. ສື່ການຮຽນ-ການສອນ

1. ເກມຕໍ່ຮູບພາບ ໂທລະສັບ.
2. ເກມເກົ່າ ເກມຕໍ່ຮູບພາບ ເດັກນ້ອຍນັ່ງເບິ່ງປຶ້ມນິທານ.
3. ບົດເພງ ສຽງກິ່ງໂທລະສັບ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກເລົ່າຄຳຄ່ອງ ສຽງກິ່ງໂທລະສັບ.
2. ຄູສະເໜີຊື່ເກມ.
3. ຄູສາທິດວິທີຫຼິ້ນເກມຕັດຕໍ່ຮູບພາບ ແລະ ແນະນຳການເກັບມ້ຽນເກມ.
4. ໃຫ້ເດັກຫຼິ້ນເກມໃໝ່, ເກມເກົ່າ ແລະຄູ ຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນເກມ.
6. ສຶກສາອົບຮົມເດັກ ໃຫ້ມີຄວາມອົດທົນ, ການແບ່ງປັນ, ການລໍຖ້າ ແລະ ການເກັບມ້ຽນເກມ ໃຫ້ຖືກບ່ອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ຄວາມຖືກຕ້ອງໃນການຕໍ່ຮູບພາບ ຕາມແບບ.
2. ຄວາມສາມັກຄີກັບໝູ່ເພື່ອນ.

# ກິດຈະກຳການຫຼິ້ນຕາມມຸມ

## ຫົວຂໍ້: ມຸມເຄື່ອງຫຼິ້ນສຳຜັດ ແລະ ມຸມເກມການສຶກສາ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ຫຼິ້ນໃນມຸມເຄື່ອງຫຼິ້ນສຳຜັດ ຢ່າງມ່ວນຊື່ນ.
2. ຫຼິ້ນໃນມຸມເກມການສຶກສາ ຢ່າງມ່ວນຊື່ນ.

### II. ເນື້ອໃນຕົ້ນຕໍ

1. ການຫຼິ້ນໃນມຸມເຄື່ອງຫຼິ້ນສຳຜັດ ໃຊ້ນິ້ວມືແຕ້ມຮູບຕາມໃຈໃສ່ອ່າງຊາຍ.
2. ການຫຼິ້ນໃນມຸມເກມການສຶກສາ: ເກມຕໍ່ຮູບພາບ: ໂທລະສັບ ແລະ ເກມຕໍ່ພາບເດັກນັ່ງເບິ່ງປຶ້ມນິທານ.

### III. ສື່ການຮຽນ-ການສອນ

1. ບົດເພງ ສຽງກິ່ງໂທລະສັບ.
2. ອ່າງຊາຍ.
3. ເກມຕໍ່ຮູບພາບ ໂທລະສັບ ແລະ ເກມຕໍ່ຮູບພາບ: ເດັກນ້ອຍນັ່ງເບິ່ງປຶ້ມນິທານ.
4. ບັດເຂົ້າມຸມຫຼິ້ນ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກຮ້ອງເພງ ສຽງກິ່ງໂທລະສັບ.
2. ຄູແນະນຳວິທີຫຼິ້ນຕາມມຸມເຄື່ອງຫຼິ້ນສຳຜັດ, ມຸມເກມການສຶກສາ ແລະ ການເກັບມ້ຽນ.
3. ໃຫ້ເດັກເລືອກບັດເຂົ້າຫຼິ້ນຕາມມຸມ.
4. ໃຫ້ເດັກເຂົ້າຫຼິ້ນຕາມມຸມ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເວົ້າຄືນກ່ຽວກັບການເຂົ້າຫຼິ້ນຕາມມຸມ.
6. ສຶກສາອົບຮົມເດັກ ໃຫ້ມີຄວາມອົດທົນ, ການແບ່ງປັນ, ການລໍຖ້າ ແລະ ການເກັບມ້ຽນ ເຄື່ອງຫຼິ້ນໃຫ້ຖືກບ່ອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ການຫຼິ້ນໃນມຸມເຄື່ອງຫຼິ້ນສຳຜັດ ຢ່າງມ່ວນຊື່ນ.
2. ການຫຼິ້ນໃນມຸມເກມການສຶກສາ ຢ່າງມ່ວນຊື່ນ.

# ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຮັດທ່າທາງຕາມຈິນຕະນາການ

## I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ເຮັດທ່າທາງຕາມຈິນຕະນາການປະກອບເລື່ອງທີ່ຄູເລົ່າ ຢ່າງມ່ວນຊື່ນ.

## II. ເນື້ອໃນຕົ້ນຕໍ

ການເຮັດທ່າທາງຕາມຈິນຕະນາການປະກອບເລື່ອງທີ່ຄູເລົ່າ: ລົມໂທລະສັບ, ເປີດປຶ້ມອ່ານ ແລະ ຂຽນໜັງສື.

## III. ສື່ການຮຽນ-ການສອນ

1. ເຄື່ອງເຄາະຈັງຫວະ.
2. ການບໍລິຫານມື ແລະ ຂາ (ປຶ້ມຄູ່ມືຄູ).

## IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກບໍລິຫານມື ແລະ ຂາ.
2. ໃຫ້ເດັກຍ່າງຕາມເສັ້ນຊື່ ມືທັງສອງເບື້ອງຈັບດອກໄມ້.
3. ຄູແນະນຳການເຮັດທ່າທາງຕາມຈິນຕະນາການປະກອບເລື່ອງທີ່ຄູເລົ່າ: ລົມໂທລະສັບ, ເປີດປຶ້ມອ່ານ ແລະ ຂຽນໜັງສື.
4. ໃຫ້ເດັກປະຕິບັດຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນັ່ງລົງຢຽດຂາອອກ ກົ້ມຫົວລົງ ເອົາສອງມືແປະປາຍຕີນ.
6. ໃຫ້ເດັກເວົ້າຄືນກ່ຽວກັບການເຮັດທ່າທາງທີ່ເດັກໄດ້ເຮັດ.
7. ສຶກສາອົບຮົມເດັກ ກ່ຽວກັບຄວາມປອດໄພ ໃນເວລາເຮັດທ່າທາງຕາມຈິນຕະນາການປະກອບເລື່ອງທີ່ຄູເລົ່າ.

## V. ການວັດ ແລະ ປະເມີນຜົນ

ສັງເກດ ການເຮັດທ່າທາງຕາມຈິນຕະນາການປະກອບເລື່ອງທີ່ຄູເລົ່າ ຢ່າງມ່ວນຊື່ນ.

# ກິດຈະກຳວົງມົນ

## ຫົວຂໍ້: ສື່ສານດ້ວຍການຂຽນ ແລະ ແຕ້ມ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ສື່ສານດ້ວຍການຂຽນ ແລະ ແຕ້ມຮູບຕາມໃຈ ສົ່ງໃຫ້ໝູ່.
2. ບອກຈຳນວນເທົ່າກັນ ແລະ ບໍ່ເທົ່າກັນຂອງຈຳນວນ 1-4.

### II. ເນື້ອໃນຕົ້ນຕໍ

1. ການສື່ສານດ້ວຍການຂຽນ ແລະ ແຕ້ມຮູບຕາມໃຈ ສົ່ງໃຫ້ໝູ່.
2. ຈຳນວນເທົ່າກັນ ແລະ ບໍ່ເທົ່າກັນຂອງຈຳນວນ 1-4.

### III. ສື່ການຮຽນ-ການສອນ

1. ສໍດຳ, ເຈ້ຍ, ສໍສີທຽນ.
2. ບົດເພງ ພາຍເຮືອ.
3. ໄມ້ບັ້ງອກ ຫຼື ວັດຖຸອື່ນ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກຮ້ອງເພງ ພາຍເຮືອ ປະກອບທ່າທາງ.
2. ຄູສົນທະນາກັບເດັກ ກ່ຽວກັບການສື່ສານ: ຂຽນ ແລະ ແຕ້ມຮູບຕາມໃຈເພື່ອອວຍພອນໃຫ້ໝູ່.
3. ໃຫ້ເດັກປະຕິບັດການຂຽນ ແລະ ແຕ້ມຕາມໃຈ.
4. ໃຫ້ເດັກແລກປ່ຽນຮູບແຕ້ມ ເຊິ່ງກັນ ແລະ ກັນ.
5. ໃຫ້ເດັກບອກຈຳນວນເທົ່າກັນ ແລະ ບໍ່ເທົ່າກັນຂອງຈຳນວນ 1-4.
6. ໃຫ້ເດັກເວົ້າຄືນກ່ຽວກັບການສື່ສານດ້ວຍການຂຽນ, ແຕ້ມຮູບ ແລະ ຈຳນວນເທົ່າກັນ, ບໍ່ເທົ່າກັນຂອງຈຳນວນ 1-4.
7. ສຶກສາອົບຮົມເດັກ ກ່ຽວກັບການຂຽນ ແລະ ແຕ້ມຮູບໃຫ້ສະອາດ, ບໍ່ຈີກເຈ້ຍ ແລະ ບໍ່ຖິ້ມເຈ້ຍຊະຊາຍ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ການສື່ສານດ້ວຍການຂຽນ ແລະ ແຕ້ມຮູບຕາມໃຈ.
2. ການບອກຈຳນວນເທົ່າກັນ ແລະ ບໍ່ເທົ່າກັນຂອງຈຳນວນ 1-4.

# ກິດຈະກຳສິລະປະສ້າງສັນ

## ຫົວຂໍ້: ຈີກເຈ້ຍ

## I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ຈີກເຈ້ຍຮູບພາບໂທລະສັບ ຕາມຮອຍຈ້ຳຖືກຕ້ອງ.

## II. ເນື້ອໃນຕົ້ນຕໍ

ການຈີກເຈ້ຍຮູບພາບໂທລະສັບ ຕາມຮອຍຈ້ຳ.

## III. ສື່ການຮຽນ-ການສອນ

ເຈ້ຍຮອຍຈ້ຳຮູບພາບໂທລະສັບ.

## IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກສັ່ນຄໍ່ມື ແລະ ດີດນິ້ວມື.
2. ຄູແນະນຳ, ສາທິດການຈີກຮູບພາບໂທລະສັບຕາມຮອຍຈ້ຳ ແລະ ການເກັບມ້ຽນ.
3. ໃຫ້ເດັກປະຕິບັດຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
4. ໃຫ້ເດັກນຳສະເໜີຜົນງານ.
5. ສຶກສາອົບຮົມເດັກ ໃຫ້ມີຄວາມອົດທົນ, ບໍ່ຈີກເຈ້ຍຖິ່ມທິ້ງ ແລະ ການເກັບມ້ຽນອຸປະກອນໄວ້ບ່ອນທີ່ກຳນົດ.

## V. ການວັດ ແລະ ປະເມີນຜົນ

ສັງເກດຄວາມຖືກຕ້ອງໃນການຈີກເຈ້ຍຮູບພາບໂທລະສັບ ຕາມຮອຍຈ້ຳ.

# ກິດຈະກຳການຫຼິ້ນກາງແຈ້ງ

## ຫົວຂໍ້: ແບບຫຼິ້ນ ຍາດບ່ອນ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດຫຼິ້ນແບບຫຼິ້ນປະດິດສ້າງ ຍາດບ່ອນ ຢ່າງມ່ວນຊື່ນ ແລະ ປອດໄພ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນແບບຫຼິ້ນ ຍາດບ່ອນ.

### III. ສື່ການຮຽນ-ການສອນ

1. ວິທີຫຼິ້ນ (ປື້ມຄູ່ມືຄູ).
2. ບົດເພງ ພາຍເຮືອ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກຮ້ອງເພງ ພາຍເຮືອ.
2. ຄູສາທິດ ວິທີຫຼິ້ນແບບຫຼິ້ນ ຍາດບ່ອນ.
3. ໃຫ້ເດັກຫຼິ້ນຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
4. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນແບບຫຼິ້ນ ຍາດບ່ອນ.
5. ສຶກສາອົບຮົມເດັກ ກ່ຽວກັບຄວາມປອດໄພ ໃນເວລາຫຼິ້ນແບບຫຼິ້ນ ຍາດບ່ອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ການຫຼິ້ນແບບຫຼິ້ນປະດິດສ້າງ ຍາດບ່ອນ ຢ່າງມ່ວນຊື່ນ ແລະ ປອດໄພ.

# ກິດຈະກຳເກມການສຶກສາ

## ຫົວຂໍ້: ເກມຕໍ່ຮູບພາບ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ຕໍ່ຮູບພາບ ຕາມແບບຖືກຕ້ອງ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນເກມຕໍ່ຮູບພາບ ເດັກນ້ອຍແຕ້ມຮູບ.

### III. ສື່ການຮຽນ-ການສອນ

1. ເກມຕໍ່ຮູບພາບ ເດັກນ້ອຍແຕ້ມຮູບ.
2. ເກມເກົ່າ ເກມຕໍ່ຮູບພາບ ໂທລະພາບ.
3. ບົດຄຳຄ່ອງ ໄຟອຳນາດ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກເລົ່າຄຳຄ່ອງ ໄຟອຳນາດ.
2. ຄູສະເໜີຊື່ເກມ.
3. ຄູສາທິດວິທີຫຼິ້ນເກມຕໍ່ຮູບພາບ ແລະ ແນະນຳການເກັບມ້ຽນເກມ.
4. ໃຫ້ເດັກຫຼິ້ນເກມໃໝ່, ເກມເກົ່າ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນເກມ.
6. ສຶກສາອົບຮົມເດັກ ໃຫ້ມີຄວາມອົດທົນ, ການແບ່ງປັນ, ການລໍຖ້າ ແລະ ການເກັບມ້ຽນເກມ ໃຫ້ຖືກບ່ອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ຄວາມຖືກຕ້ອງໃນການຕໍ່ຮູບພາບ ຕາມແບບ.
2. ຄວາມສົນໃຈ ແລະ ຄວາມສາມັກຄີກັບໝູ່ເພື່ອນ.

# ກິດຈະກຳການຫຼິ້ນຕາມມຸມ

## ຫົວຂໍ້: ມຸມສິລະປະສ້າງສັນ ແລະ ມຸມອ່ານ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ຫຼິ້ນໃນມຸມສິລະປະສ້າງສັນ ຢ່າງມ່ວນຊື່ນ.
2. ຫຼິ້ນໃນມຸມອ່ານ ຢ່າງມ່ວນຊື່ນ.

### II. ເນື້ອໃນຕົ້ນຕໍ

1. ການຫຼິ້ນໃນມຸມສິລະປະສ້າງສັນ: ຈົກເຈ້ຍຮູບພາບໂທລະພາບ ຕາມຮອຍຈ້ຳ.
2. ການຫຼິ້ນໃນມຸອ່ານ: ເປີດປຶ້ມ ແຕ່ຂວາຫາຊ້າຍ ແລະ ອ່ານປຶ້ມຮູບພາບພາຫະນະໃນການເດີນທາງ.

### III. ສື່ການຮຽນ-ການສອນ

1. ເຈ້ຍຮອຍຈ້ຳຮູບພາບໂທລະພາບ.
2. ປຶ້ມຮູບພາບພາຫະນະໃນການເດີນທາງ.
3. ບັດເຂົ້າມຸມຫຼິ້ນ.

### IV. ກິດຈະກຳການຮຽນ-ການສອນ

1. ຄູສົນທະນາກັບເດັກກ່ຽວກັບມຸມທີ່ເຄີຍຫຼິ້ນຜ່ານມາ.
2. ຄູແນະນຳວິທີຫຼິ້ນຕາມມຸມສິລະປະສ້າງສັນ, ມຸມອ່ານ ແລະ ການເກັບມ້ຽນ.
3. ໃຫ້ເດັກເລືອກບັດເຂົ້າຫຼິ້ນຕາມມຸມ.
4. ໃຫ້ເດັກເຂົ້າຫຼິ້ນຕາມມຸມ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເວົ້າຄືນກ່ຽວກັບການເຂົ້າຫຼິ້ນຕາມມຸມ.
6. ສຶກສາອົບຮົມເດັກ ໃຫ້ມີຄວາມອົດທົນ, ການແບ່ງປັນ, ການລໍຖ້າ ແລະ ການເກັບມ້ຽນເຄື່ອງຫຼິ້ນໃຫ້ຖືກບ່ອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ການຫຼິ້ນໃນມຸມສິລະປະສ້າງສັນ ຢ່າງມ່ວນຊື່ນ.
2. ການຫຼິ້ນໃນມຸມອ່ານ ຢ່າງມ່ວນຊື່ນ.

# ຈຸດປະສົງສຳລັບອາທິດທີ 4

## ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ

ເພື່ອໃຫ້ເດັກສາມາດ:

1. ເຮັດທ່າທາງຕາມຄຳສັ່ງ ເຂົ້າມຸມໂທລະສັບ, ໂທລະພາບ ແລະ ມຸມວິທະຍຸ ຖືກຕ້ອງ ແລະ ມ່ວນຊື່ນ.
2. ເຮັດທ່າທາງຕາມຂໍ້ຕົກລົງ ເຄາະ 1 ບາດ ເຮັດທ່າທາງລົມໂທລະສັບ ແລະ ເຄາະ 2 ບາດ ເຮັດທ່າທາງຂຽນໜັງສື ຖືກຕ້ອງ ແລະ ມ່ວນຊື່ນ.
3. ເຮັດທ່າທາງຕາມຈິນຕະນາການປະກອບເນື້ອໃນຄຳຄ່ອງ ການສື່ສານ ຢ່າງມ່ວນຊື່ນ.
4. ເຮັດທ່າທາງເປັນຜູ້ນຳ, ຜູ້ຕາມ ຂັບລົດໃຫຍ່, ຂີ່ລົດຖີບ ແລະ ລົມໂທລະສັບ ຖືກຕ້ອງ ແລະ ມ່ວນຊື່ນ.
5. ເຮັດທ່າທາງຕາມຈັງຫວະເພງ ສຽງກິ່ງໂທລະສັບ ຢ່າງມ່ວນຊື່ນ.

## ກິດຈະກຳວົງມົນ

ເພື່ອໃຫ້ເດັກສາມາດ:

1. ເລົ່າຄຳຄ່ອງ ການສື່ສານ ປະກອບທ່າທາງ
2. ບອກການສົນທະນາກັບຜູ້ອື່ນ: ຕັ້ງໃຈຟັງຜູ້ເວົ້າ ແລະ ບໍ່ເວົ້າພ້ອມກັນ.
3. ຈັບໂທລະສັບຟັງ, ບໍ່ລົມດັງ, ເວົ້າຈາສຸພາບ ແລະ ຄ່ອຍວາງ.
4. ອ່ານອອກສຽງພະຍັນຊະນະ ຢ.
5. ຂີດຂຽນ ແລະ ແຕ້ມຮູບໂທລະພາບ ແລະ ເວົ້າເປັນຄຳຕາມຮູບພາບ ໂທລະພາບ.
6. ຮວມກຸ່ມຈຳນວນປູ້ອກ 1-4 ແລະ ປຽບທຽບ ໜັກ, ເບົາ.
7. ບອກການເບິ່ງໂທລະພາບ ແລະ ຟັງວິທະຍຸຢ່າງ ເໝາະສົມ.
8. ອ່ານປື້ມນິທານ, ປື້ມຮຽນ, ໜັງສືພິມຕັ້ງໃຈອ່ານ, ບໍ່ຈີກ, ບໍ່ເຮັດເປື້ອນ ແລະ ເປີດໃຫ້ຖືກວິທີ.

## ກິດຈະກຳສິລະປະສ້າງສັນ

ເພື່ອໃຫ້ເດັກສາມາດ:

1. ຂີດເສັ້ນຊື່ ແຕ່ຊ້າຍຫາຂວາ ຕາມຮອຍຈໍ້າໃສ່ ຕົວ ດ, ຕ, ກ, ມ ຖືກຕ້ອງ.
2. ປັ້ນດິນເປັນຮູບເຮືອ ແລະ ໄມ້ພາຍ.
3. ທາສີຮູບພາບໂທລະພາບ, ວົງມົນ, ສາມແຈ ແລະ ຈະຕຸລັດຖືກຕ້ອງ.
4. ຂີດເສັ້ນຫົວຕົວ ດ ຕາມຮອຍຈໍ້າແຕ່ ຊ້າຍຫາຂວາຖືກຕ້ອງ.

## ກິດຈະກຳການຫຼິ້ນກາງແຈ້ງ

ເພື່ອໃຫ້ເດັກສາມາດ:

1. ຫຼິ້ນເຄື່ອງຫຼິ້ນໃນເດີ່ນ: ລອດບ້ວງ, ໂອ້ນຊາ, ກົງລໍ້ ຢ່າງມ່ວນຊື່ນ ແລະ ປອດໄພ.
2. ຫຼິ້ນແບບຫຼິ້ນປະດິດສ້າງ ເຕັ້ນກົບ, ນຸ່ງເຄື່ອງ ຢ່າງມ່ວນຊື່ນ ແລະ ປອດໄພ.
3. ຫຼິ້ນແບບຫຼິ້ນພື້ນເມືອງ ເຊື່ອງຜ້າ ຢ່າງມ່ວນຊື່ນ ແລະ ປອດໄພ.
4. ຫຼິ້ນນ້ຳ, ຫຼິ້ນຊາຍ: ຮ່າຍນ້ຳໃສ່ແກ້ວ ຢ່າງມ່ວນຊື່ນ ແລະ ປອດໄພ.

## ກິດຈະກຳເກມການສຶກສາ

ເພື່ອໃຫ້ເດັກສາມາດ:

1. ຕໍ່ຮູບພາບຕາມແບບ ຮູບພາບ: ເດັກນ້ອຍນັ່ງຟັງຜູ້ເຖົ້າເລົ່ານິທານ, ຮູບພາບ: ເດັກນ້ອຍນັ່ງຂຽນໜັງສືຖືກຕ້ອງ.
2. ນຳເອົາຈຳນວນຮູບພາບມາຈັບຄູ່ກັບຕົວເລກ 4 ຮູບພາບ: ໂຕະ 4 ໜ່ວຍ, ຕັ່ງ 4 ໜ່ວຍ ແລະ ສໍດຳ 4 ກ້ານຖືກຕ້ອງ.
3. ລຽນລຳດັບຮູບພາບ ໂທລະສັບ ແຕ່ນ້ອຍຫາໃຫຍ່ຖືກຕ້ອງ.
4. ນຳເອົາຮູບພາບທີ່ຄືກັນມາຈັບຄູ່ກັນ ຮູບພາບປຶ້ມຂຽນ, ໜັງສືພິມ ແລະ ປຶ້ມນິທານຖືກຕ້ອງ.

## ກິດຈະກຳການຫຼິ້ນຕາມມຸມ

ເພື່ອໃຫ້ເດັກສາມາດ:

1. ຫຼິ້ນໃນມຸມບົດບາດສົມມຸດຢ່າງມ່ວນຊື່ນ.
2. ຫຼິ້ນໃນມຸມສິລະປະສ້າງສັນຢ່າງມ່ວນຊື່ນ.
3. ຫຼິ້ນໃນມຸມເຄື່ອງຫຼິ້ນສຳຜັດຢ່າງມ່ວນຊື່ນ.
4. ຫຼິ້ນໃນມຸມອ່ານຢ່າງມ່ວນຊື່ນ.

# ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຮັດທ່າທາງຕາມຄຳສັ່ງ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ເຮັດທ່າທາງຕາມຄຳສັ່ງຖືກຕ້ອງ ແລະ ມ່ວນຊື່ນ.

### II. ເນື້ອໃນຕົ້ນຕໍ

ການເຮັດທ່າທາງຕາມຄຳສັ່ງ: ເຂົ້າມຸມໂທລະສັບ, ມຸມໂທລະພາບ ແລະ ມຸມວິທະຍຸ.

### III. ສື່ການຮຽນ-ການສອນ

1. ເຄື່ອງເຄາະຈັງຫວະ.
2. ຮູບໂທລະສັບ, ໂທລະພາບ ແລະ ຮູບວິທະຍຸ.
3. ການບໍລິຫານມື ແລະ ຂາ (ປື້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກບໍລິຫານມື ແລະ ຂາ.
2. ໃຫ້ເດັກແລ່ນເປັນແຖວຊື່ໃນບໍລິເວນຫ້ອງ ຕາມບາດເຄາະຊ້າ, ໄວ.
3. ຄູສາທິດການເຮັດທ່າທາງຕາມຄຳສັ່ງ: ເຂົ້າມຸມໂທລະສັບ, ມຸມໂທລະພາບ ແລະ ມຸມວິທະຍຸ.
4. ໃຫ້ເດັກປະຕິບັດຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນັ່ງລົງເຮັດທ່າທາງກັບຮ້ອງ.
6. ໃຫ້ເດັກເວົ້າຄືນກ່ຽວກັບການເຮັດທ່າທາງຕາມຄຳສັ່ງ.
7. ສຶກສາອົບຮົມເດັກ ກ່ຽວກັບມາລະຍາດ ໃນເວລາເຮັດທ່າທາງຕາມຄຳສັ່ງ.

### V. ການວັດ ແລະ ປະເມີນຜົນ

ສັງເກດການເຮັດທ່າທາງຕາມຄຳສັ່ງຖືກຕ້ອງ ແລະ ມ່ວນຊື່ນ.

# ກິດຈະກຳວົງມົນ

## ຫົວຂໍ້: ສົນທະນາ

## I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ເລົ່າຄຳຄ່ອງ ການສື່ສານ ປະກອບທ່າທາງ.
2. ບອກການສົນທະນາກັບຜູ້ອື່ນ: ຕັ້ງໃຈຟັງຜູ້ເວົ້າ ແລະ ບໍ່ເວົ້າພ້ອມກັນ.

## II. ເນື້ອໃນຕົ້ນຕໍ

1. ການເລົ່າຄຳຄ່ອງ ການສື່ສານ ປະກອບທ່າທາງ.
2. ການສົນທະນາກັບຜູ້ອື່ນ: ຕັ້ງໃຈຟັງຜູ້ເວົ້າ ແລະ ບໍ່ເວົ້າພ້ອມກັນ.

## III. ສື່ການຮຽນ-ການສອນ

ບົດຄຳຄ່ອງ ການສື່ສານ (ປຶ້ມຄູ່ມືຄູ).

## IV. ກິດຈະກຳການຮຽນ-ການສອນ

1. ຄູສົນທະນາກັບເດັກກ່ຽວກັບການເວົ້າ ແລະ ຟັງ.
2. ໃຫ້ເດັກເລົ່າຄຳຄ່ອງ ການສື່ສານ ປະກອບທ່າທາງ ແລະ ຄູສົນທະນາກັບເດັກກ່ຽວກັບເນື້ອໃນຄຳຄ່ອງ.
3. ໃຫ້ເດັກອອກມາລົມກັນໃນຫົວຂໍ້ ເດີນທາງມາໂຮງຮຽນດ້ວຍຫຍັງແດ່ ເຊິ່ງມີຜູ້ເວົ້າ ແລະ ຜູ້ຟັງ
4. ໃຫ້ເດັກບອກການສື່ສານກັບຜູ້ອື່ນ.
5. ໃຫ້ເດັກເລົ່າຄືນຄຳຄ່ອງ ແລະ ບອກການສົນທະນາກັບຜູ້ອື່ນ.
6. ສຶກສາອົບຮົມເດັກ ກ່ຽວກັບການສົນທະນາ: ຕັ້ງໃຈຟັງຜູ້ເວົ້າ ແລະ ບໍ່ເວົ້າແຊງຄົນອື່ນ.

## V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ການເລົ່າຄຳຄ່ອງ ການສື່ສານ ປະກອບທ່າທາງ.
2. ການສົນທະນາກັບຜູ້ອື່ນ: ຕັ້ງໃຈຟັງຜູ້ເວົ້າ ແລະ ບໍ່ເວົ້າພ້ອມກັນ.

# ກິດຈະກຳສິລະປະສ້າງສັນ

## ຫົວຂໍ້: ຂີດເສັ້ນຊື່

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ຂີດເສັ້ນຊື່ ໃສ່ຕົວ ດ, ຕ, ກ, ມ ຕາມຮອຍຈ້ຳ ແຕ່ຊ້າຍຫາຂວາຖືກຕ້ອງ.

### II. ເນື້ອໃນຕົ້ນຕໍ

ການຂີດເສັ້ນຊື່ ໃສ່ຕົວ ດ, ຕ, ກ, ມ ຕາມຮອຍຈ້ຳ ແຕ່ຊ້າຍຫາຂວາ.

### III. ສື່ການຮຽນ-ການສອນ

1. ສໍດຳ.
2. ປຶ້ມບົດເຝິກຫັດພາສາລາວ ເຫຼັ້ມທີ 2 ຫຼື ເຈ້ຍແບບຂີດເສັ້ນຊື່ ໃສ່ຕົວ ດ, ຕ, ກ, ມ ຕາມຮອຍຈ້ຳແຕ່ຊ້າຍຫາຂວາ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກຂີດເສັ້ນຊື່ ຢູ່ກາງຫາວ.
2. ຄູແນະນຳ, ສາທິດການຂີດເສັ້ນຊື່ ໃສ່ຕົວ ດ, ຕ, ກ, ມ ຕາມຮອຍຈ້ຳ ແຕ່ຊ້າຍຫາຂວາ ແລະ ການເກັບມ້ຽນ.
3. ໃຫ້ເດັກປະຕິບັດຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
4. ໃຫ້ເດັກນຳສະເໜີຜົນງານ.
5. ສຶກສາອົບຮົມເດັກ ໃຫ້ມີຄວາມອົດທົນ, ບໍ່ຂີດກັນ ແລະ ການເກັບເກັບມ້ຽນອຸປະກອນເປັນລະບຽບ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ຄວາມຖືກຕ້ອງໃນການຂີດເສັ້ນຊື່ ໃສ່ຕົວ ດ, ຕ, ກ, ມ ຕາມຮອຍຈ້ຳ ແຕ່ຊ້າຍຫາຂວາ.
2. ຄວາມເອົາໃຈໃສ່ ແລະ ຄວາມສາມັກຄີກັບໝູ່ເພື່ອນ.

# ກິດຈະກຳການຫຼິ້ນກາງແຈ້ງ

## ຫົວຂໍ້: ເຄື່ອງຫຼິ້ນໃນເດີ່ນ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ຫຼິ້ນເຄື່ອງຫຼິ້ນໃນເດີ່ນ ຢ່າງມ່ວນຊື່ນ ແລະ ປອດໄພ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນເຄື່ອງຫຼິ້ນ: ຫຼິ້ນລອດບ້ວງ ແລະ ໂອ້ນຊາ.

### III. ສື່ການຮຽນ-ການສອນ

1. ບ້ວງລອດ ແລະ ໂອ້ນຊາ ຫຼື ເຄື່ອງຫຼິ້ນທີ່ມີໃນທ້ອງຖິ່ນ.
2. ເຄື່ອງເຄາະຈັງຫວະ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກແລ່ນເປັນວົງມົນຕາມບາດເຄາະຊ້າ, ໄວ.
2. ຄູແນະນຳ ແລະ ສາທິດວິທີຫຼິ້ນລອດບ້ວງ ແລະ ໂອ້ນຊາ.
3. ໃຫ້ເດັກຫຼິ້ນຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
4. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນລອດບ້ວງ ແລະ ໂອ້ນຊາ.
5. ສຶກສາອົບຮົມເດັກ ກ່ຽວກັບຄວາມປອດໄພ ໃນເວລາຫຼິ້ນລອດບ້ວງ ແລະ ໂອ້ນຊາ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ການຫຼິ້ນເຄື່ອງຫຼິ້ນໃນເດີ່ນ ຢ່າງມ່ວນຊື່ນ ແລະ ປອດໄພ.

# ກິດຈະກໍາເກມການສຶກສາ

## ຫົວຂໍ້: ເກມຕໍ່ຮູບພາບ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ຕໍ່ຮູບພາບ ຕາມແບບຖືກຕ້ອງ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນເກມຕໍ່ຮູບພາບ: ເດັກນ້ອຍນັ່ງຟັງຜູ້ເຖົ້າເລົ່ານິທານ.

### III. ສື່ການຮຽນ-ການສອນ

1. ເກມຕໍ່ຮູບພາບ ເດັກນ້ອຍນັ່ງຟັງຜູ້ເຖົ້າເລົ່ານິທານ.
2. ເກມເກົ່າ ເກມຕໍ່ຮູບພາບ ເດັກນ້ອຍແຕ້ມຮູບ.

### IV. ກິດຈະກໍາການຮຽນ-ການສອນ

1. ໃຫ້ເດັກຕົບມື ແລະ ນັບເລກແຕ່ 1-8.
2. ຄູສະເໜີຊື່ເກມ.
3. ຄູສາທິດວິທີຫຼິ້ນ ແລະ ແນະນໍາການເກັບມ້ຽນເກມ.
4. ໃຫ້ເດັກຫຼິ້ນເກມໃໝ່, ເກມເກົ່າ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນເກມ.
6. ສຶກສາອົບຮົມເດັກ ໃຫ້ມີຄວາມອົດທົນ, ການແບ່ງປັນ, ການລໍຖ້າ ແລະ ການເກັບມ້ຽນເກມໃຫ້ຖືກບ່ອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ຄວາມຖືກຕ້ອງໃນການຕໍ່ຮູບພາບ ຕາມແບບ.
2. ຄວາມສົນໃຈ ແລະ ຄວາມສາມັກຄີກັບໝູ່ເພື່ອນ.

# ກິດຈະກຳການຫຼິ້ນຕາມມຸມ

## ຫົວຂໍ້: ມຸມບົດບາດສົມມຸດ ແລະ ມຸມສິລະປະສ້າງສັນ

## I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ຫຼິ້ນໃນມຸມບົດບາດສົມມຸດ ຢ່າງມ່ວນຊື່ນ.
2. ຫຼິ້ນໃນມຸມສິລະປະສ້າງສັນ ຢ່າງມ່ວນຊື່ນ.

## II. ເນື້ອໃນຕົ້ນຕໍ

1. ການຫຼິ້ນໃນມຸມບົດບາດສົມມຸດ ລົມໂທລະສັບ.
2. ການຫຼິ້ນໃນມຸມສິລະປະສ້າງສັນ: ຂີດເສັ້ນຊື່ໃສ່ຫົວຕົວ ດ, ຕ, ກ, ມ ຕາມຮອຍຈ້ຳ ແຕ່ຊ້າຍຫາຂວາ.

## III. ສື່ການຮຽນ-ການສອນ

1. ບົດເພງ ສຽງກິ່ງໂທລະສັບ.
2. ໂທລະສັບປະດິດ ຫຼື ຂອງຈິງ.
3. ສໍດຳ ແລະ ປຶ້ມບົດເຝິກຫັດພາສາລາວ ເຫຼັ້ມ 2 ຫຼື ເຈ້ຍແບບຂີດເສັ້ນຊື່ໃສ່ຫົວຕົວ ດ, ຕ, ກ, ມ ຕາມຮອຍຈ້ຳແຕ່ຊ້າຍຫາຂວາ.
4. ບັດເຂົ້າມຸມຫຼິ້ນ.

## IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກຮ້ອງເພງ ສຽງກິ່ງໂທລະສັບ.
2. ຄູແນະນຳວິທີຫຼິ້ນຕາມມຸມບົດບາດສົມມຸດ, ມຸມສິລະປະສ້າງສັນ ແລະ ການເກັບມ້ຽນ.
3. ໃຫ້ເດັກເລືອກບັດເຂົ້າຫຼິ້ນຕາມມຸມ.
4. ໃຫ້ເດັກເຂົ້າຫຼິ້ນຕາມມຸມ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເວົ້າຄືນກ່ຽວກັບການເຂົ້າຫຼິ້ນຕາມມຸມ.
6. ສຶກສາອົບຮົມເດັກ ໃຫ້ມີຄວາມອົດທົນ, ການແບ່ງປັນ, ການລໍຖ້າ ແລະ ການເກັບມ້ຽນເຄື່ອງຫຼິ້ນໃຫ້ຖືກບ່ອນ.

## V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ການຫຼິ້ນໃນມຸມບົດບາດສົມມຸດ ຢ່າງມ່ວນຊື່ນ.
2. ການຫຼິ້ນໃນມຸມສິລະປະສ້າງສັນ ຢ່າງມ່ວນຊື່ນ.

# ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຮັດທ່າທາງຕາມຂໍ້ຕົກລົງ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ເຮັດທ່າທາງຕາມຂໍ້ຕົກລົງຖືກຕ້ອງ ແລະ ມ່ວນຊື່ນ.

### II. ເນື້ອໃນຕົ້ນຕໍ

ການເຮັດທ່າທາງຕາມຂໍ້ຕົກລົງ: ເຄາະ 1 ບາດ ເຮັດທ່າທາງລົມໂທລະສັບ, ເຄາະ 2 ບາດ ເຮັດທ່າທາງຂຽນໜັງສື.

### III. ສື່ການຮຽນ-ການສອນ

1. ເຄື່ອງເຄາະຈັງຫວະ.
2. ການບໍລິຫານແຂນ (ປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກບໍລິຫານແຂນ.
2. ໃຫ້ເດັກຍ່າງເຢ່ງເຢ້ຕາມເສັ້ນຊື່ ທີ່ຄູກຳນົດ.
3. ຄູສາທິດການເຮັດທ່າທາງຕາມຂໍ້ຕົກລົງ: ເຄາະ 1 ບາດ ເຮັດທ່າທາງລົມໂທລະສັບ, ເຄາະ 2 ບາດ ເຮັດທ່າທາງຂຽນໜັງສື.
4. ໃຫ້ເດັກປະຕິບັດຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເຮັດທ່າທາງລົມພັດໃບໄມ້ໄປ, ມາ.
6. ໃຫ້ເດັກເວົ້າຄືນກ່ຽວກັບການເຮັດທ່າທາງທີ່ເດັກໄດ້ເຮັດ.
7. ສຶກສາອົບຮົມເດັກ ກ່ຽວກັບຄວາມປອດໄພ ໃນເວລາເຮັດທ່າທາງຕາມຂໍ້ຕົກລົງ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ຄວາມກ້າຫານໃນການເຮັດທ່າທາງຕາມຂໍ້ຕົກລົງ.
2. ຄວາມເບີກບານຂອງເດັກ.
3. ຄວາມຖືກຕ້ອງຂອງການປະຕິບັດຕາມຂໍ້ຕົກລົງ.

# ກິດຈະກຳວົງມົນ

## ຫົວຂໍ້: ໃຊ້ໂທລະສັບ

## I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ຈັບໂທລະສັບຟັງ, ບໍ່ລົມດົນ, ເວົ້າຈາສຸພາບ ແລະ ຄ່ອຍວາງ.
2. ອ່ານອອກສຽງພະຍັນຊະນະ ຢ.

## II. ເນື້ອໃນຕົ້ນຕໍ

1. ການໃຊ້ໂທລະສັບ ບໍ່ລົມດົນເກີນໄປ ແລະ ການເວົ້າສຸພາບ: ສະບາຍດີ ແລະ ໂດຍຂ້ານ້ອຍ.
2. ການອ່ານອອກສຽງພະຍັນຊະນະ ຢ.

## III. ສື່ການຮຽນ-ການສອນ

1. ໂທລະສັບປະດິດ ຫຼື ຂອງຈິງ.
2. ຮູບພາບ ຄົນລົມໂທລະສັບ
3. ບັດພະຍັນຊະນະ ຢ.
4. ບົດເພງ ສຽງກິ່ງໂທລະສັບ.

## IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກຮ້ອງເພງ ສຽງກິ່ງໂທລະສັບ ປະກອບທ່າທາງ.
2. ໃຫ້ເດັກສັງເກດຮູບພາບ ແລະ ຄູສົນທະນາກັບເດັກກ່ຽວກັບຄົນລົມໂທລະສັບ.
3. ໃຫ້ເດັກປະຕິບັດຕົວຈິງການໃຊ້ໂທລະສັບລົມກັນດ້ວຍຄຳເວົ້າທີ່ສຸພາບ.
4. ໃຫ້ເດັກອ່ານອອກສຽງພະຍັນຊະນະ ຢ.
5. ໃຫ້ເດັກເວົ້າຄືນການໃຊ້ໂທລະສັບ ແລະ ອ່ານອອກສຽງພະຍັນຊະນະ ຢ.
6. ສຶກສາອົບຮົມເດັກ ກ່ຽວກັບການໃຊ້ໂທລະສັບ: ເວລາລົມໂທລະສັບຕ້ອງເວົ້າຈາສຸພາບ, ບໍ່ຄວນລົມກັນດົນ ເກີນໄປ ແລະ ວາງໂທລະສັບຄ່ອຍໆ.

## V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ການຈັບໂທລະສັບຟັງ, ບໍ່ລົມດົນ, ເວົ້າຈາສຸພາບ ແລະ ຄ່ອຍວາງ.
2. ການອ່ານອອກສຽງພະຍັນຊະນະ ຢ.

# ກິດຈະກຳສິລະປະສ້າງສັນ

## ຫົວຂໍ້: ປັ້ນດິນ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ປັ້ນດິນເປັນຮູບເຮືອ ແລະ ໄມ້ພາຍ.

### II. ເນື້ອໃນຕົ້ນຕໍ

ການປັ້ນດິນເປັນຮູບເຮືອ ແລະ ໄມ້ພາຍ.

### III. ສື່ການຮຽນ-ການສອນ

1. ດິນ.
2. ຜ້າຢາງ ຫຼື ເຈ້ຍຮອງ.
3. ຄຸນ້ຳ, ໂອ ແລະ ສະບູ.
4. ຜ້າເຊັດມື.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກເຮັດທ່າທາງກຳມື ແລະ ແບມື.
2. ຄູແນະນຳວິທີປັ້ນດິນ ແລະ ການເກັບມ້ຽນ.
3. ໃຫ້ເດັກປະຕິບັດຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
4. ໃຫ້ເດັກນຳສະເໜີຜົນງານ.
5. ສຶກສາອົບຮົມເດັກ ໃຫ້ມີຄວາມອົດທົນ, ການແບ່ງປັນ ແລະ ການເກັບມ້ຽນອຸປະກອນເປັນລະບຽບ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ຄວາມເອົາໃຈໃສ່ຂອງເດັກ.
2. ຄວາມສາມັກຄີກັບໝູ່ເພື່ອນ.

# ກິດຈະກຳການຫຼິ້ນກາງແຈ້ງ

## ຫົວຂໍ້: ແບບຫຼິ້ນ ເຕັ້ນກົບ

## I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ຫຼິ້ນແບບຫຼິ້ນປະດິດສ້າງ ເຕັ້ນກົບ ຢ່າງມ່ວນຊື່ນ ແລະ ປອດໄພ.

## II. ເນື້ອໃນຕົ້ນຕໍ

ການຫຼິ້ນແບບຫຼິ້ນປະດິດສ້າງ ເຕັ້ນກົບ.

## III. ສື່ການຮຽນ-ການສອນ

1. ເຄື່ອງເຄາະຈັງຫວະ.
2. ວິທີຫຼິ້ນ (ປື້ມຄູ່ມືຄູ).

## IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກຢືນຄ້ຳແອວເຕັ້ນຂຶ້ນ ແລະ ລົງຢູ່ກັບບ່ອນ.
2. ຄູແນະນຳ ແລະ ສາທິດວິທີຫຼິ້ນແບບຫຼິ້ນ ເຕັ້ນກົບ.
3. ໃຫ້ເດັກຫຼິ້ນຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
4. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນແບບຫຼິ້ນ ເຕັ້ນກົບ.
6. ສຶກສາອົບຮົມເດັກ ກ່ຽວກັບຄວາມປອດໄພ ໃນເວລາຫຼິ້ນແບບຫຼິ້ນ ເຕັ້ນກົບ.

## V. ການວັດ ແລະ ປະເມີນຜົນ

ສັງເກດການຫຼິ້ນແບບຫຼິ້ນປະດິດສ້າງ ເຕັ້ນກົບ ຢ່າງມ່ວນຊື່ນ ແລະ ປອດໄພ.

# ກິດຈະກຳເກມການສຶກສາ

## ຫົວຂໍ້: ເກມຈັບຄູ່ຈຳນວນຮູບພາບກັບຕົວເລກ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ນຳເອົາຈຳນວນຮູບພາບມາຈັບຄູ່ກັບຕົວເລກ 4 ຖືກຕ້ອງ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນເກມຈັບຄູ່ຈຳນວນຮູບພາບກັບຕົວເລກ 4: ຮູບໂຕະ 4 ໜ່ວຍ, ຕັ່ງ 4 ໜ່ວຍ ແລະ ສໍດຳ 4 ກ້ານ.

### III. ສື່ການຮຽນ-ການສອນ

1. ເກມຈັບຄູ່ຈຳນວນຮູບພາບກັບຕົວເລກ 4: ຮູບໂຕະ 4 ໜ່ວຍ, ຕັ່ງ 4 ໜ່ວຍ ແລະ ສໍດຳ  4 ກ້ານ.
2. ບັດເລກ   4.
3. ເກມເກົ່າ ເກມຕໍ່ຮູບພາບ ເດັກນ້ອຍນັ່ງຟັງຜູ້ເຖົ້າເລົ່ານິທານ.
4. ບົດຄຳຄ່ອງ   ໄຟອຳນາດ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກເລົ່າຄຳຄ່ອງ   ໄຟອຳນາດ.
2. ຄູສະເໜີຊື່ເກມ.
3. ຄູສາທິດວິທີຫຼິ້ນເກມຈັບຄູ່ຈຳນວນຮູບພາບກັບຕົວເລກ ແລະ ແນະນຳການເກັບມ້ຽນເກມ.
4. ໃຫ້ເດັກຫຼິ້ນເກມໃໝ່, ເກມເກົ່າ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນເກມ.
6. ສຶກສາອົບຮົມເດັກ ໃຫ້ມີຄວາມອົດທົນ, ການແບ່ງປັນ, ການລໍຖ້າ ແລະ ການເກັບມ້ຽນເກມໃຫ້ຖືກບ່ອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ຄວາມຖືກຕ້ອງຂອງການຈັບຄູ່ຈຳນວນຮູບພາບກັບຕົວເລກ.
2. ການມີສ່ວນຮ່ວມຂອງເດັກແຕ່ລະຄົນ.

# ກິດຈະກຳການຫຼິ້ນຕາມມຸມ

## ຫົວຂໍ້: ມຸມເຄື່ອງຫຼິ້ນສຳຜັດ ແລະ ມຸມອ່ານ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ຫຼິ້ນໃນມຸມເຄື່ອງຫຼິ້ນສຳຜັດ ຢ່າງມ່ວນຊື່ນ.
2. ຫຼິ້ນໃນມຸມອ່ານ ຢ່າງມ່ວນຊື່ນ.

### II. ເນື້ອໃນຕົ້ນຕໍ

1. ການຫຼິ້ນໃນມຸມເຄື່ອງຫຼິ້ນສຳຜັດ ຕໍ່ບັ້ອກເປັນຮູບຕ່າງໆ.
2. ການຫຼິ້ນໃນມຸມອ່ານ: ເປີດປຶ້ມ ແຕ່ຂວາຫາຊ້າຍ ແລະ ອ່ານປຶ້ມຮູບພາບ.

### III. ສື່ການຮຽນ-ການສອນ

1. ໄມ້ບັ້ອກ ຫຼື ບັ້ອກປຼາສະຕິກ.
2. ປຶ້ມຮູບພາບໂທລະພາບ, ວິທະຍຸ, ໂທລະສັບ.
3. ບັດເຂົ້າມຸມ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນັບເລກປາກເປົ່າ 1-8.
2. ຄູແນະນຳວິທີຫຼິ້ນຕາມມຸມເຄື່ອງຫຼິ້ນສຳຜັດ, ມຸມອ່ານ ແລະ ການເກັບມ້ຽນ.
3. ໃຫ້ເດັກເລືອກບັດເຂົ້າຫຼິ້ນຕາມມຸມ.
4. ໃຫ້ເດັກເຂົ້າຫຼິ້ນຕາມມຸມ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເວົ້າຄືນກ່ຽວກັບການເຂົ້າຫຼິ້ນຕາມມຸມ.
6. ສຶກສາອົບຮົມເດັກ ໃຫ້ມີຄວາມອົດທົນ, ການແບ່ງປັນ, ການລໍຖ້າ ແລະ ການເກັບມ້ຽນເຄື່ອງຫຼິ້ນໃຫ້ຖືກບ່ອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ການຫຼິ້ນໃນມຸມເຄື່ອງຫຼິ້ນສຳຜັດ ຢ່າງມ່ວນຊື່ນ.
2. ການຫຼິ້ນໃນມຸມອ່ານ ຢ່າງມ່ວນຊື່ນ.

# ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຮັດທ່າທາງຕາມຈິນຕະນາການ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ເຮັດທ່າທາງຕາມຈິນຕະນາການປະກອບເນື້ອໃນຄຳຄ່ອງ ຢ່າງມ່ວນຊື່ນ.

### II. ເນື້ອໃນຕົ້ນຕໍ

ການເຮັດທ່າທາງຕາມຈິນຕະນາການປະກອບເນື້ອໃນຄຳຄ່ອງ ການສື່ສານ.

### III. ສື່ການຮຽນ-ການສອນ

1. ເຄື່ອງເຄາະຈັງຫວະ.
2. ບົດຄຳຄ່ອງ ການສື່ສານ.
3. ການບໍລິຫານຂາ (ປື້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກບໍລິຫານຂາ.
2. ໃຫ້ເດັກແລ່ນເປັນແຖວຊື່ໃນບໍລິເວນຫ້ອງ ຕາມສຽງເຄາະຊ້າ, ໄວ.
3. ຄູສາທິດການເຮັດທ່າທາງຕາມຈິນຕະນາການປະກອບເນື້ອໃນຄຳຄ່ອງ ການສື່ສານ.
4. ໃຫ້ເດັກປະຕິບັດຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເຮັດທ່າທາງນົກບິນຊ້າໆ.
6. ໃຫ້ເດັກເວົ້າຄືນກ່ຽວກັບການເຮັດທ່າທາງທີ່ເດັກໄດ້ເຮັດ.
7. ສຶກສາອົບຮົມເດັກ ກ່ຽວກັບຄວາມປອດໄພ ໃນເວລາເຮັດທ່າທາງຕາມຈິນຕະນາການປະກອບເນື້ອໃນຄຳຄ່ອງ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ການເຮັດທ່າທາງຕາມຈິນຕະນາການປະກອບເນື້ອໃນຄຳຄ່ອງ ຢ່າງມ່ວນຊື່ນ.

# ກິດຈະກຳວົງມົນ

## ຫົວຂໍ້: ຂີດຂຽນ ແລະ ແຕ້ມ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ຂີດຂຽນ ແລະ ແຕ້ມຮູບໂທລະພາບ.
2. ຮວມກຸ່ມຈຳນວນປູ໊ອກ 1-4.

### II. ເນື້ອໃນຕົ້ນຕໍ

1. ການຂີດຂຽນ ແລະ ແຕ້ມຮູບໂທລະພາບ: ແຕ້ມຮູບໃຫ້ສະອາດ, ບໍ່ໃຫ້ເຈ້ຍຫຍໍ່ ແລະ ຂາດ.
2. ການຮວມກຸ່ມຈຳນວນຂອງໄມ້ປູ໊ອກ ແຕ່ 1-4.

### III. ສື່ການຮຽນ-ການສອນ

1. ເຈ້ຍ, ສໍດຳ ຫຼື ສໍສີ.
2. ຮູບພາບ: ໂທລະພາບ.
3. ບົດເພງ ອັບລົດນ້ອຍ.
4. ໄມ້ປູ໊ອກຈຳນວນ 4 ອັນ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກຮ້ອງເພງ ອັບລົດນ້ອຍ ປະກອບທ່າທາງ.
2. ໃຫ້ເດັກສັງເກດຮູບພາບ ແລະ ຄູສົນທະນາກັບເດັກກ່ຽວກັບການຂີດຂຽນ ແລະ ແຕ້ມ.
3. ຄູແນະນຳ, ສາທິດການຂີດຂຽນ ແລະ ແຕ້ມຮູບໂທລະພາບ.
4. ໃຫ້ເດັກປະຕິບັດຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກຮວມກຸ່ມຈຳນວນປູ໊ອກ 1-4.
6. ໃຫ້ເດັກເວົ້າຄືນກ່ຽວກັບການແຕ້ມ, ຂີດຂຽນ ແລະ ຮວມກຸ່ມຈຳນວນປູ໊ອກ 1-4.
7. ສຶກສາອົບຮົມເດັກ ກ່ຽວກັບການຂີດຂຽນ ແລະ ແຕ້ມ: ບໍ່ຄວນແຕ້ມໃສ່ຝາຫ້ອງ, ບໍ່ແຕ້ມໃສ່ຝາເຮືອນ ຫຼື ຕາມສະຖານທີ່ຕ່າງໆ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ການຂີດຂຽນ ແລະ ແຕ້ມຮູບໂທລະພາບ.
2. ການຮວມກຸ່ມຈຳນວນປູ໊ອກ 1-4.

# ກິດຈະກຳສິລະປະສ້າງສັນ

## ຫົວຂໍ້: ທາສີຮູບພາບ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ທາສີຮູບພາບໂທລະພາບຖືກຕ້ອງ.

### II. ເນື້ອໃນຕົ້ນຕໍ

ການທາສີຮູບພາບໂທລະພາບ.

### III. ສື່ການຮຽນ-ການສອນ

ເຈ້ຍຮູບພາບໂທລະພາບ ແລະ ສໍສີ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກສັ່ນຄໍ່ມື ແລະ ດີດນິ້ວມື.
2. ຄູແນະນຳ, ສາທິດການທາສີຮູບພາບ ແລະ ການເກັບມ້ຽນ.
3. ໃຫ້ເດັກປະຕິບັດຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
4. ໃຫ້ເດັກນຳສະເໜີຜົນງານ.
5. ສຶກສາອົບຮົມເດັກ ໃຫ້ມີຄວາມອົດທົນ, ບໍ່ຍື້ດກັນ ແລະ ການເກັບມ້ຽນອຸປະກອນໃຫ້ຖືກບ່ອນທີ່ກຳນົດໄວ້.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ຄວາມຖືກຕ້ອງໃນການທາສີຮູບພາບໂທລະພາບ.
2. ຄວາມສາມັກຄີກັບໝູ່ເພື່ອນ.

# ກິດຈະກຳການຫຼິ້ນກາງແຈ້ງ

## ຫົວຂໍ້: ແບບຫຼິ້ນ ນຸ່ງເຄື່ອງ

### I. ຈຸດປະສົງ

ເພື່ອໃຫ້ເດັກຫຼິ້ນແບບຫຼິ້ນປະດິດສ້າງ ນຸ່ງເຄື່ອງ ຢ່າງມ່ວນຊື່ນ ແລະ ປອດໄພ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນແບບຫຼິ້ນປະດິດສ້າງ ນຸ່ງເຄື່ອງ.

### III. ສື່ການຮຽນ-ການສອນ

1. ວິທີຫຼິ້ນ (ປຶ້ມຄູ່ມື).
2. ເສື້ອ, ໂສ້ງ, ກະໂປງ, ສິ້ນ ແລະ ກະຕ່ານ້ອຍ 2 ໜ່ວຍ.
3. ໝາກຫວິດ ຫຼື ເຄື່ອງເຄາະຈັງຫວະ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກຍ່າງແກວ່ງແຂນເປັນວົງ.
2. ຄູສາທິດວິທີຫຼິ້ນແບບຫຼິ້ນ ນຸ່ງເຄື່ອງ.
3. ໃຫ້ເດັກຫຼິ້ນຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
4. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນແບບຫຼິ້ນ ນຸ່ງເຄື່ອງ.
5. ສຶກສາອົບຮົມເດັກ ກ່ຽວກັບຄວາມປອດໄພ ໃນເວລາຫຼິ້ນ ນຸ່ງເຄື່ອງ.

### V. ການວັດ ແລະ ປະເມີນຜົນ

ສັງເກດການຫຼິ້ນແບບຫຼິ້ນປະດິດສ້າງ ນຸ່ງເຄື່ອງ ຢ່າງມ່ວນຊື່ນ ແລະ ປອດໄພ.

# ກິດຈະກຳເກມການສຶກສາ

## ຫົວຂໍ້: ເກມຕໍ່ຮູບພາບ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ຕໍ່ຮູບພາບ ຕາມແບບຖືກຕ້ອງ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນເກມຕໍ່ຮູບພາບ ເດັກນ້ອຍນັ່ງຂຽນໜັງສື.

### III. ສື່ການຮຽນ-ການສອນ

1. ເກມຕໍ່ຮູບພາບ ເດັກນ້ອຍນັ່ງຂຽນໜັງສື.
2. ເກມເກົ່າ ເກມຈັບຄູ່ຈຳນວນຮູບພາບກັບຕົວເລກ 4: ຮູບໂຕະ 4 ໜ່ວຍ, ຕັ່ງ 4 ໜ່ວຍ ແລະ ສໍດຳ 4 ກ້ານ.
3. ບົດເພງ  ພາຍເຮືອ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກຮ້ອງເພງ ພາຍເຮືອ.
2. ຄູສະເໜີຊື່ເກມ.
3. ຄູສາທິດວິທີຫຼິ້ນເກມຕໍ່ຮູບພາບ ແລະ ແນະນຳການເກັບມ້ຽນເກມ.
4. ໃຫ້ເດັກຫຼິ້ນເກມໃໝ່, ເກມເກົ່າ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນເກມ.
6. ສຶກສາອົບຮົມເດັກ ໃຫ້ມີຄວາມອົດທົນ, ການແບ່ງປັນ, ການລໍຖ້າ ແລະ ການເກັບມ້ຽນເກມ ໃຫ້ຖືກບ່ອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ຄວາມຖືກຕ້ອງໃນການຕໍ່ຮູບພາບ ຕາມແບບ.
2. ຄວາມສົນໃຈ ແລະ ຄວາມສາມັກຄີກັບໝູ່ເພື່ອນ.

# ກິດຈະກຳການຫຼິ້ນຕາມມຸມ

## ຫົວຂໍ້: ມຸມເຄື່ອງຫຼິ້ນສຳຜັດ ແລະ ມຸມສິລະປະສ້າງສັນ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ຫຼິ້ນໃນມຸມເຄື່ອງຫຼິ້ນສຳຜັດຖືກຕ້ອງ ແລະ ມ່ວນຊື່ນ.
2. ຫຼິ້ນໃນມຸມສິລະປະສ້າງສັນຖືກຕ້ອງ ແລະ ມ່ວນຊື່ນ.

### II. ເນື້ອໃນຕົ້ນຕໍ

1. ການຫຼິ້ນໃນມຸມເຄື່ອງຫຼິ້ນສຳຜັດ: ຕໍ່ບູ້ອກເປັນຮູບຊົງຕ່າງໆ ແລະ ຫຼິ້ນເຄື່ອງດົນຕີ: ຕີກອງ, ສັ່ນກະແຊັກ, ເຄາະກະປ໋ອງ.
2. ການຫຼິ້ນໃນມຸມສິລະປະສ້າງສັນ ທາສີຮູບພາບໂທລະພາບ.

### III. ສື່ການຮຽນ-ການສອນ

1. ບົດຄຳຄ່ອງ ໄຟອຳນາດ.
2. ໄມ້ບູ້ອກ ຫຼື ບູ້ອກປຼາສະຕິກ.
3. ກອງ, ກະແຊັກ ແລະ ກະປ໋ອງ.
4. ບັດເຂົ້າມຸມຫຼິ້ນ.
5. ຮູບພາບໂທລະພາບ ແລະ ສໍສີ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກເລົ່າຄຳຄ່ອງ ໄຟອຳນາດ.
2. ຄູແນະນຳວິທີຫຼິ້ນຕາມມຸມເຄື່ອງຫຼິ້ນສຳຜັດ, ມຸມສິລະປະສ້າງສັນ ແລະ ການເກັບມ້ຽນ.
3. ໃຫ້ເດັກເລືອກບັດເຂົ້າຫຼິ້ນຕາມມຸມ.
4. ໃຫ້ເດັກເຂົ້າຫຼິ້ນຕາມມຸມ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເວົ້າຄືນກ່ຽວກັບການເຂົ້າຫຼິ້ນຕາມມຸມ.
6. ສຶກສາອົບຮົມເດັກ ໃຫ້ມີຄວາມອົດທົນ, ການແບ່ງປັນ, ການລໍຄອຍ ແລະ ການເກັບມ້ຽນເຄື່ອງຫຼິ້ນໃຫ້ຖືກບ່ອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ຄວາມມີລະບຽບໃນການຫຼິ້ນ.
2. ຄວາມຖືກຕ້ອງໃນການຫຼິ້ນ.
3. ຄວາມສາມັກຄີໃນການຫຼິ້ນ.

# ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຮັດທ່າທາງເປັນຜູ້ນຳ, ຜູ້ຕາມ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ເຮັດທ່າທາງເປັນຜູ້ນຳ, ຜູ້ຕາມຖືກຕ້ອງ ແລະ ມ່ວນຊື່ນ.

### II. ເນື້ອໃນຕົ້ນຕໍ

ການເຮັດທ່າທາງເປັນຜູ້ນຳ, ຜູ້ຕາມ: ຂັບລົດໃຫຍ່, ຂີ່ລົດຖີບ ແລະ ລົມໂທລະສັບ.

### III. ສື່ການຮຽນ-ການສອນ

1. ເຄື່ອງເຄາະຈັງຫວະ.
2. ການບໍລິຫານຂ້າງ (ປື້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກບໍລິຫານຂ້າງ.
2. ໃຫ້ເດັກຍ່າງໃນບໍລິເວນຫ້ອງຕາມບາດເຄາະຊ້າ, ໄວ.
3. ຄູສາທິດການເຮັດທ່າທາງເປັນຜູ້ນຳ, ຜູ້ຕາມ: ຂັບລົດໃຫຍ່, ຂີ່ລົດຖີບ ແລະ ລົມໂທລະສັບ.
4. ໃຫ້ເດັກປະຕິບັດຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນັ່ງລົງຢຽດຂາອອກ ໃຊ້ມືນິ້ວຊີ້ ຈີ້ຕາມຂາ.
6. ໃຫ້ເດັກເວົ້າຄືນກ່ຽວກັບການເຮັດທ່າທາງທີ່ເດັກໄດ້ເຮັດ.
7. ສຶກສາອົບຮົມເດັກ ກ່ຽວກັບມາລະຍາດ ໃນເວລາເຮັດທ່າທາງເປັນຜູ້ນຳ, ຜູ້ຕາມ.

### V. ການວັດ ແລະ ປະເມີນຜົນ

ສັງເກດການເຮັດທ່າທາງເປັນຜູ້ນຳ, ຜູ້ຕາມຖືກຕ້ອງ ແລະ ມ່ວນຊື່ນ.

# ກິດຈະກຳວົງມົນ

## ຫົວຂໍ້: ເບິ່ງໂທລະພາບ ແລະ ຟັງວິທະຍຸ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ບອກການເບິ່ງໂທລະພາບ ແລະ ຟັງວິທະຍຸຢ່າງເໝາະສົມ.
2. ເວົ້າເປັນຄຳຕາມຮູບພາບ ໂທລະພາບ

### II. ເນື້ອໃນຕົ້ນຕໍ

1. ການເບິ່ງໂທລະພາບ, ບໍ່ເປີດສຽງດັງເກີນໄປ, ເບິ່ງລາຍການທີ່ເໝາະສົມ ແລະ ຟັງລາຍການທີ່ເໝາະສົມ.
2. ການເວົ້າເປັນຄຳຕາມຮູບພາບ ໂທລະພາບ.

### III. ສື່ການຮຽນ-ການສອນ

ຮູບພາບ ຫຼື ວັດຖຸຈິງ: ວິທະຍຸ ແລະ ໂທລະພາບ.

### IV. ກິດຈະກຳການຮຽນ-ການສອນ

1. ຄູສົນທະນາກັບເດັກກ່ຽວກັບການຟັງວິທະຍຸ ແລະ ເບິ່ງໂທລະພາບ.
2. ໃຫ້ເດັກສັງເກດຮູບພາບ ຫຼື ຂອງຈິງ ແລະ ຄູສົນທະນາກັບເດັກ ກ່ຽວກັບການເບິ່ງໂທລະພາບ ແລະ ຟັງວິທະຍຸ.
3. ຄູແນະນຳການເບິ່ງໂທລະພາບ ແລະ ຟັງວິທະຍຸລາຍການທີ່ເໝາະສົມ.
4. ໃຫ້ເດັກບອກການເບິ່ງໂທລະພາບ ແລະ ຟັງວິທະຍຸລາຍການທີ່ເໝາະສົມ.
5. ໃຫ້ເດັກເວົ້າເປັນຄຳຕາມຮູບພາບ: ໂທລະພາບ.
6. ໃຫ້ເດັກເວົ້າຄືນກ່ຽວກັບການເບິ່ງໂທລະພາບ, ຟັງວິທະຍຸ ແລະ ເວົ້າເປັນຄຳຕາມຮູບພາບ.
7. ສຶກສາອົບຮົມເດັກ ກ່ຽວກັບການເບິ່ງໂທລະພາບ ແລະ ຟັງວິທະຍຸ: ບໍ່ເບິ່ງໂທລະພາບຢູ່ໃກ້, ເວລາຈະເບິ່ງ ຫຼື ຟັງຕ້ອງຜູ້ໃຫຍ່ເປີດໃຫ້ເບິ່ງ ແລະ ເບິ່ງລາຍການທີ່ເໝາະສົມ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ການບອກການເບິ່ງໂທລະພາບ ແລະ ຟັງວິທະຍຸຢ່າງເໝາະສົມ.
2. ການເວົ້າເປັນຄຳຕາມຮູບພາບ ໂທລະພາບ.

# ກິດຈະກຳສິລະປະສ້າງສັນ

## ຫົວຂໍ້: ທາສີຮູບພາບ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດທາຮູບພາບວົງມົນ, ສາມແຈ ແລະ ຈະຕຸລັດຖືກຕ້ອງ.

### II. ເນື້ອໃນຕົ້ນຕໍ

ການທາສີຮູບພາບວົງມົນສີແດງ, ສາມແຈສີເຫຼືອງ ແລະ ຈະຕຸລັດສີຂຽວ.

### III. ສື່ການຮຽນ-ການສອນ

1. ຮູບພາບວົງມົນ, ສາມແຈ ແລະ ຈະຕຸລັດ.
2. ສໍສີໄມ້ ຫຼື ສໍສີທຽນ: ສີແດງ, ເຫຼືອງ ແລະ ຂຽວ.

### III. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກສັ່ນຄໍ່ມື ແລະ ດີດນິ້ວມື.
2. ຄູແນະນຳ, ສາທິດການທາສີຮູບພາບ ແລະ ການເກັບມ້ຽນ.
3. ໃຫ້ເດັກປະຕິບັດຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
4. ໃຫ້ເດັກນຳສະເໜີຜົນງານ.
5. ສຶກສາອົບຮົມເດັກ ໃຫ້ມີຄວາມອົດທົນ, ບໍ່ຍິດກັນ ແລະ ການເກັບມ້ຽນອຸປະກອນໄວ້ບ່ອນທີ່ກຳນົດ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ຄວາມຖືກຕ້ອງໃນການທາສີຮູບພາບວົງມົນ, ສາມແຈ ແລະ ຈະຕຸລັດ.

# ກິດຈະກຳການຫຼິ້ນກາງແຈ້ງ

## ຫົວຂໍ້: ແບບຫຼິ້ນ ເຊື່ອງຜ້າ

## I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ຫຼິ້ນແບບຫຼິ້ນພື້ນເມືອງ ເຊື່ອງຜ້າ ຢ່າງມ່ວນຊື່ນ ແລະ ໃຫ້ປອດໄພ.

## II. ເນື້ອໃນຕົ້ນຕໍ

ການຫຼິ້ນແບບຫຼິ້ນພື້ນເມືອງ ເຊື່ອງຜ້າ.

## III. ສື່ການຮຽນ-ການສອນ

1. ບົດຄຳຄ່ອງ ເຊື່ອງຜ້າ ແລະ ວິທີຫຼິ້ນ (ປື້ມຄູ່ມືຄູ).
2. ຕຸກກະຕາ ຫຼື ຜ້າ.

## IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກໝູນບ່າ ແລະ ໝູນຫົວເຂົ່າ.
2. ຄູແນະນຳວິທີຫຼິ້ນແບບຫຼິ້ນ ເຊື່ອງຜ້າ.
3. ໃຫ້ເດັກຫຼິ້ນຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
4. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນແບບຫຼິ້ນ ເຊື່ອງຜ້າ.
5. ສຶກສາອົບຮົມເດັກ ກ່ຽວກັບຄວາມປອດໄພ ໃນເວລາຫຼິ້ນແບບຫຼິ້ນ ເຊື່ອງຜ້າ.

## V. ການວັດ ແລະ ປະເມີນຜົນ

ສັງເກດການຫຼິ້ນແບບຫຼິ້ນພື້ນເມືອງ ເຊື່ອງຜ້າ ຢ່າງມ່ວນຊື່ນ ແລະ ໃຫ້ປອດໄພ.

# ກິດຈະກຳເກມການສຶກສາ

## ຫົວຂໍ້: ເກມລຽນລຳດັບຮູບພາບ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ລຽນລຳດັບຮູບພາບ ແຕ່ນ້ອຍ ຫາ ໃຫຍ່ຖືກຕ້ອງ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນເກມລຽນລຳດັບຮູບພາບ ໂທລະສັບ ແຕ່ນ້ອຍ ຫາ ໃຫຍ່.

### III. ສື່ການຮຽນ-ການສອນ

1. ເກມລຽນລຳດັບຮູບພາບ ໂທລະສັບແຕ່ນ້ອຍ ຫາ ໃຫຍ່.
2. ເກມເກົ່າ ເກມຕໍ່ຮູບພາບ ເດັກນ້ອຍນັ່ງຂຽນໜັງສື.

### IV. ກິດຈະກຳການຮຽນ-ການສອນ

1. ຄູສົນທະນາກັບເດັກກ່ຽວກັບການໃຊ້ໂທລະສັບ.
2. ຄູສະເໜີຊື່ເກມ.
3. ຄູສາທິດວິທີຫຼິ້ນເກມລຽນລຳດັບຮູບພາບ ແລະ ແນະນຳການເກັບມ້ຽນເກມ.
4. ໃຫ້ເດັກຫຼິ້ນເກມໃໝ່, ເກມເກົ່າ ແລະ ຄູຕິດຕາມແນະນຳຊ່ວຍເຫຼືອ.
5. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນເກມ.
6. ສຶກສາອົບຮົມເດັກ ໃຫ້ມີຄວາມອົດທົນ, ການແບ່ງປັນ, ການລໍຖ້າ ແລະ ການເກັບມ້ຽນເກມໃຫ້ຖືກບ່ອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ຄວາມຖືກຕ້ອງໃນການລຽນລຳດັບຮູບພາບ ແຕ່ນ້ອຍ ຫາ ໃຫຍ່.
2. ຄວາມພະຍາຍາມຂອງເດັກ.
3. ຄວາມສາມັກຄີກັບໝູ່ເພື່ອນ.

# ກິດຈະກຳການຫຼິ້ນຕາມມຸມ

## ຫົວຂໍ້: ມຸມເຄື່ອງຫຼິ້ນສຳຜັດ ແລະ ມຸມບົດບາດສົມມຸດ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ຫຼິ້ນໃນມຸມເຄື່ອງຫຼິ້ນສຳຜັດ ຢ່າງມ່ວນຊື່ນ.
2. ຫຼິ້ນໃນມຸມບົດບາດສົມມຸດ ຢ່າງມ່ວນຊື່ນ.

### II. ເນື້ອໃນຕົ້ນຕໍ

1. ການຫຼິ້ນໃນມຸມເຄື່ອງຫຼິ້ນສຳຜັດ ແຕ້ມຮູບໃສ່ອ່າງຊາຍຕາມໃຈ.
2. ການຫຼິ້ນໃນມຸມບົດບາດສົມມຸດ: ຫຼິ້ນປ້ອນເຂົ້າຕຸກກະຕາ, ເປັນພໍ່ຄ້າ, ແມ່ຄ້າຊື້, ຂາຍເຄື່ອງຫຼິ້ນ, ເຄື່ອງໃຊ້.

### III. ສື່ການຮຽນ-ການສອນ

1. ບົດເພງ ຂັບລົດນ້ອຍ.
2. ອ່າງຊາຍ
3. ເຄື່ອງຫຼິ້ນ ແລະ ເຄື່ອງໃຊ້: ລົດ, ຕຸກກະຕາ, ໂທລະສັບ, ຖ້ວຍ, ບ່ວງ ແລະ ອື່ນໆ.
4. ບັດເຂົ້າມຸມຫຼິ້ນ

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກຮ້ອງເພງ ຂັບລົດນ້ອຍ.
2. ຄູແນະນຳວິທີຫຼິ້ນຕາມມຸມເຄື່ອງຫຼິ້ນສຳຜັດ, ມຸມບົດບາດສົມມຸດ ແລະ ການເກັບມ້ຽນ.
3. ໃຫ້ເດັກເລືອກບັດເຂົ້າຫຼິ້ນຕາມມຸມ.
4. ໃຫ້ເດັກເຂົ້າຫຼິ້ນຕາມມຸມ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເວົ້າຄືນກ່ຽວກັບການເຂົ້າຫຼິ້ນຕາມມຸມ.
6. ສຶກສາອົບຮົມເດັກ ໃຫ້ມີຄວາມອົດທົນ, ການແບ່ງປັນ, ການລໍຄອຍ ແລະ ການເກັບມ້ຽນເຄື່ອງຫຼິ້ນໃຫ້ຖືກບ່ອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ການຫຼິ້ນໃນມຸມເຄື່ອງຫຼິ້ນສຳຜັດ ຢ່າງມ່ວນຊື່ນ.
2. ການຫຼິ້ນໃນມຸມບົດບາດສົມມຸດ ຢ່າງມ່ວນຊື່ນ.

# ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຮັດທ່າທາງຕາມຈັງຫວະ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ເຮັດທ່າທາງຕາມຈັງຫວະເພງ ຢ່າງມ່ວນຊື່ນ.

### II. ເນື້ອໃນຕົ້ນຕໍ

ການເຮັດທ່າທາງຕາມຈັງຫວະເພງ ສຽງກິ່ງໂທລະສັບ.

### III. ສື່ການຮຽນ-ການສອນ

1. ເຄື່ອງເຄາະຈັງຫວະ.
2. ບົດເພງ ສຽງກິ່ງໂທລະສັບ.
3. ການບໍລິຫານຫ້ອງ ແລະ ຫູ (ປື້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກບໍລິຫານຫ້ອງ ແລະ ຫູ.
2. ໃຫ້ເດັກຈັບມືກັນເປັນຄູ່ຢາງເປັນວົງມົນ.
3. ຄູແນະນຳການເຮັດທ່າທາງຕາມຈັງຫວະເພງ "ສຽງກິ່ງໂທລະສັບ".
4. ໃຫ້ເດັກປະຕິບັດຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເວົ້າຄືນກ່ຽວກັບທ່າທາງທີ່ເດັກໄດ້ເຮັດ.
7. ສຶກສາອົບຮົມເດັກ ກ່ຽວກັບຄວາມປອດໄພ ໃນເວລາເຮັດທ່າທາງຕາມຈັງຫວະເພງ.

### V. ການວັດ ແລະ ປະເມີນຜົນ

ສັງເກດການເຮັດທ່າທາງຕາມຈັງຫວະເພງ ຢ່າງມ່ວນຊື່ນ.

# ກິດຈະກຳວົງມົນ

## ຫົວຂໍ້: ອ່ານປຶ້ມ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ອ່ານປຶ້ມນິທານ, ປຶ້ມຮຽນ, ໜັງສືພິມ: ຕັ້ງໃຈອ່ານ, ບໍ່ຈີກ, ບໍ່ເຮັດເປື້ອນ ແລະ ເປີດຖືກວິທີ.
2. ປຽບທຽບ ໜັກ, ເບົາ.

### II. ເນື້ອໃນຕົ້ນຕໍ

1. ການອ່ານປຶ້ມນິທານ, ປຶ້ມຮຽນ, ໜັງສືພິມ: ຕັ້ງໃຈອ່ານ, ບໍ່ຈີກ, ບໍ່ເຮັດເປື້ອນ ແລະ ເປີດຖືກວິທີ.
2. ການປຽບທຽບປຶ້ມ ໜັກ, ເບົາ.

### III. ສື່ການຮຽນ-ການສອນ

1. ປຶ້ມຮຽນ, ປຶ້ມນິທານ ແລະ ໜັງສືພິມ.
2. ບົດຄຳຄ່ອງ ເດັກດີ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກເລົ່າຄຳຄ່ອງ ເດັກດີ ປະກອບທ່າທາງ.
2. ຄູສົນທະນາກັບເດັກກ່ຽວກັບການອ່ານປຶ້ມ.
3. ຄູແນະນຳການອ່ານປຶ້ມ, ວາງປຶ້ມ ແລະ ການເປີດປຶ້ມ.
4. ໃຫ້ເດັກປະຕິບັດຕົວຈິງເປີດປຶ້ມນິທານ, ອ່ານປຶ້ມ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກປຽບທຽບປຶ້ມ ໜັກ, ເບົາ.
6. ໃຫ້ເດັກເວົ້າຄືນກ່ຽວກັບການເປີດປຶ້ມ ແລະ ປຽບທຽບປຶ້ມໜັກ, ເບົາ.
7. ສຶກສາອົບຮົມເດັກ ກ່ຽວກັບການອ່ານປຶ້ມ: ຕັ້ງໃຈອ່ານ, ບໍ່ຈີກ, ບໍ່ເຮັດປຶ້ມເປື້ອນ, ເປີດຈາກຂວາຫາຊ້າຍ, ເວລາອ່ານບໍ່ໃຊ້ສຽງດັງ ແລະ ອ່ານຢູ່ບ່ອນທີ່ມີແສງສະຫວ່າງພຽງພໍ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ການອ່ານປຶ້ມນິທານ, ປຶ້ມຮຽນ, ໜັງສືພິມ: ຕັ້ງໃຈອ່ານ, ບໍ່ຈີກ, ບໍ່ເຮັດເປື້ອນ ແລະ ເປີດຖືກວິທີ.
2. ການປຽບທຽບໜັກ, ເບົາ.

# ກິດຈະກຳສິລະປະສ້າງສັນ

## ຫົວຂໍ້: ຂີດເສັ້ນ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ຂີດເສັ້ນຫົວຕົວ ດ ຕາມຮອຍຈໍ້າ ແຕ່ຊ້າຍຫາຂວາຖືກຕ້ອງ.

### II. ເນື້ອໃນຕົ້ນຕໍ

ການຂີດເສັ້ນຫົວຕົວ ດ ຕາມຮອຍຈໍ້າ ແຕ່ຊ້າຍຫາຂວາ.

### III. ສື່ການຮຽນ-ການສອນ

1. ສໍດຳ.
2. ປື້ມບົດເຝິກຫັດພາສາລາວ ເຫຼັ້ມທີ 2 ຫຼື ເຈ້ຍແບບຂີດເສັ້ນຫົວຕົວ ດ ຕາມຮອຍຈໍ້າ ແຕ່ຊ້າຍຫາຂວາ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກເຮັດທ່າທາງຂີດເສັ້ນຊື່ ຢູ່ກາງຫາວ.
2. ຄູແນະນຳ, ສາທິດວິທີຂີດເສັ້ນຫົວຕົວ ດ ຕາມຮອຍຈໍ້າ ແຕ່ຊ້າຍຫາຂວາ ແລະ ການເກັບມ້ຽນ.
3. ໃຫ້ເດັກປະຕິບັດຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
4. ໃຫ້ເດັກນຳສະເໜີຜົນງານ.
5. ສຶກສາອົບຮົມເດັກ ໃຫ້ມີຄວາມອົດທົນ, ບໍ່ຂີດກັນ ແລະ ການເກັບມ້ຽນອຸປະກອນໄວ້ບ່ອນທີ່ກຳນົດ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ຄວາມຖືກຕ້ອງໃນການຂີດເສັ້ນຫົວຕົວ ດ ຕາມຮອຍຈໍ້າ ແຕ່ຊ້າຍຫາຂວາ.
2. ຄວາມພະຍາຍາມຂອງເດັກ.
3. ຄວາມເອົາໃຈໃສ່ຂອງເດັກ.

# ກິດຈະກຳການຫຼິ້ນກາງແຈ້ງ

## ຫົວຂໍ້: ແບບຫຼິ້ນ ຮ່າຍນ້ຳໃສ່ແກ້ວ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ຫຼິ້ນແບບຫຼິ້ນປະດິດສ້າງ ຮ່າຍນ້ຳໃສ່ແກ້ວ ຢ່າງມ່ວນຊື່ນ ແລະ ປອດໄພ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນແບບຫຼິ້ນປະດິດສ້າງ ຮ່າຍນ້ຳໃສ່ແກ້ວ.

### III. ສື່ການຮຽນ-ການສອນ

1. ຄຸໃສ່ນ້ຳ 2 ຄຸ.
2. ແກ້ວ 2 ໜ່ວຍ ແລະ ຈອກ 2 ໜ່ວຍ.
3. ວິທີຫຼິ້ນ (ປື້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກລຽນແຖວ ຢ່ຳເທົ້າຢູ່ກັບທີ່.
2. ຄູສາທິດວິທີຫຼິ້ນແບບຫຼິ້ນ ຮ່າຍນ້ຳໃສ່ແກ້ວ.
3. ໃຫ້ເດັກຫຼິ້ນຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
4. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນແບບຫຼິ້ນ ຮ່າຍນ້ຳໃສ່ແກ້ວ.
5. ສຶກສາອົບຮົມເດັກ ກ່ຽວກັບຄວາມປອດໄພ ໃນເວລາຫຼິ້ນ ຮ່າຍນ້ຳໃສ່ແກ້ວ.

### V. ການວັດ ແລະ ປະເມີນຜົນ

ສັງເກດການຫຼິ້ນແບບຫຼິ້ນປະດິດສ້າງ ຮ່າຍນ້ຳໃສ່ແກ້ວ ຢ່າງມ່ວນຊື່ນ ແລະ ປອດໄພ.

# ກິດຈະກຳເກມການສຶກສາ

## ຫົວຂໍ້: ເກມຈັບຄູ່ຮູບພາບທີ່ຄືກັນ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ນຳເອົາຮູບພາບທີ່ຄືກັນ ມາຈັບຄູ່ກັນຖືກຕ້ອງ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນເກມຈັບຄູ່ຮູບທີ່ຄືກັນ: ປຶ້ມຂຽນ, ໜັງສືພິມ ແລະ ປຶ້ມນິທານ.

### III. ສື່ການຮຽນ-ການສອນ

1. ເກມຈັບຄູ່ຮູບພາບທີ່ຄືກັນ: ປຶ້ມຂຽນ, ໜັງສືພິມ ແລະ ປຶ້ມນິທານ.
2. ເກມເກົ່າ ເກມລຽນລຳດັບຮູບພາບ ໂທລະພາບ ແຕ່ນ້ອຍຫາໃຫຍ່.
3. ບົດເພງ ພາຍເຮືອ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກຮ້ອງເພງ ພາຍເຮືອ.
2. ຄູສະເໜີຊື່ເກມ.
3. ຄູສາທິດວິທີຫຼິ້ນເກມຈັບຄູ່ຮູບພາບ ແລະ ແນະນຳການເກັບມ້ຽນເກມ.
4. ໃຫ້ເດັກຫຼິ້ນເກມໃໝ່, ເກມເກົ່າ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນເກມ.
6. ສຶກສາອົບຮົມເດັກ ໃຫ້ມີຄວາມອົດທົນ, ການແບ່ງປັນ, ການລໍຖ້າ ແລະ ການເກັບມ້ຽນເກມໃຫ້ຖືກບ່ອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ຄວາມຖືກຕ້ອງໃນການຈັບຄູ່ຮູບພາບທີ່ຄືກັນ.
2. ຄວາມເບີກບານໃນການເຂົ້າຮ່ວມກິດຈະກຳ.

# ກິດຈະກຳການຫຼິ້ນຕາມມຸມ

## ຫົວຂໍ້: ມຸມອ່ານ ແລະ ມຸມເຄື່ອງຫຼິ້ນສຳຜັດ

## I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ຫຼິ້ນໃນມຸມອ່ານ ຢ່າງມ່ວນຊື່ນ.
2. ຫຼິ້ນໃນມຸມເຄື່ອງຫຼິ້ນສຳຜັດ ຢ່າງມ່ວນຊື່ນ.

## II. ເນື້ອໃນຕົ້ນຕໍ

1. ການຫຼິ້ນໃນມຸມອ່ານ: ເປີດປຶ້ມແຕ່ຂວາ ຫາ ຊ້າຍ ແລະ ອ່ານຮູບພາບໃນປຶ້ມນິທານ.
2. ການຫຼິ້ນໃນມຸມເຄື່ອງຫຼິ້ນສຳຜັດ ຂຽນຕົວເລກ 7 ດ້ວຍນິ້ວມືໃນອ່າງຊາຍ.

## III. ສື່ການຮຽນ-ການສອນ

1. ບົດຄຳຄ່ອງ ເດັກດີ.
2. ປຶ້ມນິທານປະກອບຮູບ.
3. ອ່າງຊາຍ.
4. ບັດເຂົ້າມຸມຫຼິ້ນ.

## IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກເລົ່າຄຳຄ່ອງ ເດັກດີ.
2. ຄູແນະນຳວິທີຫຼິ້ນຕາມມຸມອ່ານ, ມຸມເຄື່ອງຫຼິ້ນສຳຜັດ ແລະ ການເກັບມ້ຽນ.
3. ໃຫ້ເດັກເລືອກເຂົ້າຫຼິ້ນຕາມມຸມ.
4. ໃຫ້ເດັກເຂົ້າຫຼິ້ນຕາມມຸມ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເວົ້າຄືນກ່ຽວກັບການເຂົ້າຫຼິ້ນຕາມມຸມ.
6. ສຶກສາອົບຮົມເດັກ ໃຫ້ມີຄວາມອົດທົນ, ການແບ່ງປັນ, ການລໍຄອຍ ແລະ ການເກັບມ້ຽນເຄື່ອງຫຼິ້ນໃຫ້ຖືກບ່ອນ.

## V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ການຫຼິ້ນໃນມຸມອ່ານ ຢ່າງມ່ວນຊື່ນ.
2. ການຫຼິ້ນໃນມຸມເຄື່ອງຫຼິ້ນສຳຜັດ ຢ່າງມ່ວນຊື່ນ.

# ເອກະສານອ້າງອີງ

## ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ


1. ປຶ້ມຄູ່ມືການຈັດກິດຈະກຳການສອນຊັ້ນອະນຸບານ ກະຊວງສຶກສາທິການ, ກົມສາມັນ ເດືອນ ມີນາ (3) ປີ 2005 ພິມທີ່ເອກະພາບການພິມ.
2. ປຶ້ມຫຼັກການສອນອະນຸບານ ກຸ່ມວິຊາຄູທົ່ວໄປ ສາຍສ້າງຄູອະນຸບານລະບົບ 2 ປີ ປີທີ 1 ປີ 2008.
3. ປຶ້ມວິທີສອນກາຍະສຶກສາ ກຸ່ມວິທີສອນສາຍສ້າງຄູອະນຸບານລະບົບ 2 ປີ ປີທີ 2 ປີ 2009.
4. ປຶ້ມແຜນຈັດປະສົບການຊັ້ນອະນຸບານ1 ກະຊວງສຶກສາທິການ, ກົມສາມັນ ເດືອນມີນາ (3) ປີ 2005 ພິມທີ່ເອກະພາບການພິມ.
5. ຄູ່ມືຄູພະລະສຶກສາ, ຫັດຖະກຳ, ສິລະປະກຳ, ສິລະປະດົນຕີຊັ້ນປະຖົມ ປີທີໜຶ່ງ ກະຊວງສຶກສາທິການ, ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ.


## ກິດຈະກຳວົງມົນ


6. ຄູ່ມືຄູການຈັດກິດຈະກຳການຮຽນ-ການສອນ ຊັ້ນອະນຸບານກົມສາມັນສຶກສາ ກະຊວງສຶກສາທິການ.
7. ຫຼັກການສອນເດັກກ່ອນໄວຮຽນລະບົບ 11+3 ກະຊວງສຶກສາທິການ ປີ 2008.


## ກິດຈະກຳສິລະປະສ້າງສັນ


8. ຄູ່ມືຄູກິດຈະກຳສ້າງສັນ (ສິລະປະສຶກສາ) ຊັ້ນອະນຸບານ ປີ 1992.
9. ກະຊວງສຶກສາທິການ, ກົມສາມັນສຶກສາຄູ່ມືຄູກິດຈະກຳການສອນ ຊັ້ນອະນຸບານ ປີ 2005.
10. ກະຊວງສຶກສາທິການ, ປຶ້ມຫຼັກການສອນອະນຸບານ ລະບົບ 11+2 ປີ 2008 (ໜ້າ 93).


## ກິດຈະກຳການຫຼິ້ນກາງແຈ້ງ


11. ຄູ່ມືຄູ ກິດຈະກຳກາງແຈ້ງ ຊັ້ນອະນຸບານ ກະຊວງສຶກສາ ປີ 1990.
12. ຄູ່ມືຄູ ກິດຈະກຳການສອນ ຊັ້ນອະນຸບານ ກະຊວງສຶກສາ ປີ 1990 ໜ້າທີ 102,105,106,131.
13. ປຶ້ມແບບຮຽນວິຊາຫຼັກການສອນເດັກກ່ອນໄວຮຽນ ລະບົບ 11+2 ກົມສ້າງຄູ, ກະຊວງສຶກສາທິການ ປີ 2004 (ບົດທີ 11 ກິດຈະກຳກາງແຈ້ງ).


## ກິດຈະກຳເກມການສຶກສາ


14. ປຶ້ມແຜ່ນຈັດປະສົບການ ຊັ້ນອະນຸບານ 1 ເຫຼັ້ມ 1, ປີ 2005 (ກະຊວງສຶກສາທິການ-ກົມສາມັນສຶກສາ).
15. ປຶ້ມວິຊາ: ຫຼັກການສອນ 11 + 3 ສົກຮຽນ 2008 (ກະຊວງສຶກສາທິການ-ກົມສ້າງຄູ).


## ກິດຈະກຳການຫຼິ້ນຕາມມຸມ


16. ປຶ້ມ ວິຊາຊອກຮູ້ສະພາບແວດລ້ອມ 11 + 3 ປີ 2008 (ກະຊວງສຶກສາທິການ-ກົມສ້າງຄູ).
17. ປຶ້ມ ແຜນຈັດປະສົບການຊັ້ນອະນຸບານ 1 ເຫຼັ້ມ 1 ປີ 2005 (ກະຊວງສຶກສາທິການ-ກົມສາມັນສຶກສາ).
18. ປຶ້ມ ການພັດທະນາໂຮງຮຽນຄຸນນະພາບ, ຄູ່ມື ຄູສອນຫ້ອງກຽມປະຖົມ (ກະຊວງສຶກສາ 2010).